# ທາງຜ່ານ

## ການຄ້າໄມ້ເຖື່ອນ ລະຫວ່າງລາວແລະຫວຽດນາມ



eia environmental investigation agency

# ຄໍາຈາລຶກບຸນຄຸນ

ເອກະສານສະບັບນີ້ຈັດພິມຂຶ້ນໂດຍການສະໜັບສະໜູນທາງດ້ານການເງິນຈາກສະຫະພາບເອີຣົບ. ເນື້ອໃນເອກະສານທັງໝົດຂຶ້ນຢູ່ກັບຄວາມຮັບຜິດຊອບຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນພຽງຜູ້ດຽວ ແລະບໍ່ໄດ້ມີສ່ວນກ່ຽວຂ້ອງໃດໆທັງສິ້ນກັບສະຫະພາບເອີຣົບ.

ອົງການສືບສວນດ້ານສິ່ງແວດລ້ອມສາກົນຂໍສະແດງຄວາມຂອບໃຈມູນນິທິອາເດສຊຽມ (Adessium Foundation) ທີ່ໄດ້ໃຫ້ການສະໜັບສະໜູນວຽກກ່ຽວກັບການກໍ່ອາດສະຍະກໍາຕໍ່ສິ່ງແວດລ້ອມທີ່ພວກເຮົາສືບສວນຢູ່.

ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ຂຽນແລະປັບປຸງແກ້ໄຂບົດລາຍງານສະບັບນີ້.

ຈັດໜ້າແລະອອກແບບໂດຍ:
www.designsolutions.me.uk

ຂໍສະແດງຄວາມຂອບໃຈຢ່າງຍິ່ງນໍາເອເມີເຊີນ ແພູສ໌ (Emmerson Press) ໃນການຈັດພິມບົດລາຍງານສະບັບນີ້
(Emmerson Press: +44 (0)1926 854400)

ກໍລະກົດ 2011

**ອົງການສືບສວນດ້ານສິ່ງແວດລ້ອມສາກົນ (EIA)**
62/63 Upper Street, London N1 ONY, UK
Tel:+44 (0) 20 7354 7960
Fax:+44(0) 20 7354 7961
Email: ukinfo@eia-international.org

**www.eia-international.org**

**ຮູບໜ້າປົກ:**
ລົດບັນທຸກໄມ້ທ່ອນຈາກລາວ
ປະເລກັນ, ຫວຽດນາມ, 2010
© EIA

# ສາລະບານ

1 ບົດນໍາ
2 ປ່າໄມ້ຂອງລາວຖືກຄຸກຄາມ
6 ອຸດສາຫະກໍາໄມ້ຂອງຫວຽດນາມກໍາລັງຂະຫຍາຍຕົວຢ່າງໄວວາ
8 ວົງໃນການຄ້າໄມ້ເຖື່ອນຂ້າມຊາຍແດນ
16 ຈຸດໝາຍປາຍທາງຕໍ່ໄປ
18 ນະໂຍບາຍລະຫວ່າງປະເທດກ່ຽວກັບການຄຸ້ມຄອງປ່າໄມ້
20 ຂໍ້ສະເໜີ




**ສອງຄວາມໝາຍ:**
*ດົງ:* ສໍາລັບຫວຽດນາມ ແມ່ນສະກຸນເງິນ
*ດົງ:* ສໍາລັບລາວ ຄືປ່າໄມ້

# ບົດນຳ



ໄມ້ທ່ອນຊຶ່ງແມ່ນບໍລິສັດຂອງກອງທັບຫວຽດນາມຕັດມາຈາກລາວ, ເມືອງວິ່ງ, ຫວຽດນາມ, 2011.

© EIA

ຍາມສາຍັນໃນເດືອນກຸມພາປີ 2011 ມາບັນຈົບກັນຢູ່ດ່ານກວດກາແຫ່ງໜຶ່ງໃນປ່າຫ່າງໄກສອກຫລີກຢູ່ແຂວງອັດຕະປື ເລິກເຂົ້າໄປທີ່ສຸດທາງພາກໃຕ້ຂອງປະເທດລາວ. ໄກອອກໄປບໍ່ເທົ່າໃດກິໂລແມັດແມ່ນຊາຍແດນຫວຽດນາມຊຶ່ງແມ່ນເຂດທີ່ງຽບສະຫງັດຢ່າງແປກປະຫລາດເນື່ອງຈາກວ່າກຳມະກອນຫວຽດນາມຜູ້ເປັນເຈົ້າຂອງປະເທດ ທີ່ມາຮັບຈ້າງເຮັດວຽກສ້າງເຂື່ອນ, ປູກໄມ້ແລະຕັດໄມ້ ໄດ້ພາກັນກັບບ້ານເພື່ອສະຫລອງປີໃໝ່ຕາມປະຕິທິນດວງຈັນ. ລົດຈັກສອງຄັນທີ່ຍຶດມາໄດ້ຈາກປະຊາຊົນທີ່ພະຍາຍາມລັກລອບເອົາໄມ້ແປ້ນຈຳນວນໜຶ່ງຊຶ່ງແມ່ນໄມ້ດູ່ມີລາຄາແພງຂ້າມຊາຍແດນ ອີງຢູ່ຝາຫ້ອງການ. ສອງສາມເດືອນກ່ອນໜ້ານີ້ ເຈົ້າໜ້າທີ່ຈາກອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ເຫັນລົດບັນທຸກ 34 ຄັນ ບັນທຸກໄມ້ທ່ອນໄປຕາມເສັ້ນທາງດຽວກັນນີ້ ແລ່ນມຸ່ງໜ້າໄປຫວຽດນາມ. ເຖິງວ່າປະເທດລາວຈະມີການເກືອດຫ້າມການສົ່ງໄມ້ທ່ອນອອກນອກປະເທດກໍຕາມ ລົດບັນທຸກເຫລົ່ານີ້ກໍຍັງໄດ້ຮັບອະນຸຍາດ ໃຫ້ຜ່ານໄປໄດ້ໂດຍບໍ່ມີຫຍັງຂັດຂວາງເລີຍ.

ການລະເມີດຢ່າງໂຈ່ງແຈ້ງຢູ່ບ່ອນນີ້ແມ່ນເລື່ອງປົກກະຕິຢູ່ແລ້ວ ເນື່ອງຈາກຜົນປະໂຫຍດທີ່ມີຢ່າງມະຫາສານຈາກກຳໄລທີ່ໄດ້ຈາກການຄ້າໄມ້ເຖື່ອນຈາກລາວໄປຫວຽດນາມ. ລະຫວ່າງທີ່ມີການສຳຫລວດຢູ່ພາກສະໜາມໃນປີ 2010 ແລະ 2011 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພົບເຫັນສາມບໍລິສັດທີ່ກ່ຽວຂ້ອງກັບການຕັດໄມ້ຢູ່ໃນປະເທດລາວ. ບໍລິສັດພວກນີ້ໄດ້ສົ່ງໄມ້ທ່ອນໃຫ້ກັນປີລະ 250,000 ແມັດກ້ອນ. ບໍລິມາດຂອງການຄ້າໄມ້ທ່ອນທັງໝົດລະຫວ່າງສອງປະເທດ ຢ່າງໜ້ອຍເກືອບວ່າສອງເທົ່າຕົວຂອງຈຳນວນນີ້.

ໄມ້ທ່ອນເຫລົ່ານີ້ມາຈາກປ່າບາງບ່ອນ ຊຶ່ງເປັນປ່າເຂດຮ້ອນບ່ອນສຸດທ້າຍທີ່ບໍ່ຖືກບຸກລຸກມາກ່ອນຢູ່ໃນຂົງເຂດແມ່ນ້ຳຂອງ ຖືກລຳລຽງໄປປ້ອນອຸດສາຫະກຳປຸງແຕ່ງໄມ້ທີ່ກຳລັງເຟື່ອງຟູຢູ່ຫວຽດນາມ. ໃນຂະນະທີ່ອຸດສາຫະກຳໄມ້ຂອງປະເທດລາວຊ້ຳພັດຈົ່ມວ່າຕົນເອງຂາດແຄນວັດຖຸດິບ. ຢູ່ພາຍໃນລາວ ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກການຄ້າໄມ້ກໍມີແຕ່ເຈົ້າໜ້າທີ່ຂອງລັດ ທີ່ສໍ້ລາດບັງຫລວງແລະນັກທຸລະກິດທີ່ມີເສັ້ນສາຍ ເຊັ່ນ ພອນສັກ ວິໄລສັກ ທີ່ຂາຍໄມ້ທ່ອນໃຫ້ຄົນຫວຽດນາມທີ່ເປັນຜູ້ຊື້ ເພື່ອເອົາເງິນຕາຕ່າງປະເທດ ສ່ວນອຸດສາຫະກຳໄມ້ຂອງຕົນເອງຢູ່ໃນລາວນັ້ນບໍ່ສາມາດຕອບສະໜອງການສັ່ງຊື້ໄດ້ ເນື່ອງຈາກຂາດແຄນວັດຖຸດິບ.

ຜູ້ທີ່ໄດ້ຜົນປະໂຫຍດຫລັກຈາກການຄ້າໄມ້ເຖື່ອນນີ້ແມ່ນບໍລິສັດຕັດໄມ້ແລະອຸດສາຫະກຳເຟີນີເຈີທີ່ຕັ້ງຢູ່ຫວຽດນາມ ຊຶ່ງໄດ້ຮັບໄມ້ທ່ອນທີ່ມີຜູ້ຈັດສົ່ງໃຫ້ໃນລາຄາຖືກນັ້ນເອງ. ການສອບສວນຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນເປີດເຜີຍວ່າ ໜຶ່ງໃນພວກທີ່ມາຕັດໄມ້ລາຍໃຫຍ່ທີ່ສຸດຢູ່ໃນປະເທດລາວນັ້ນແມ່ນບໍລິສັດໜຶ່ງຂອງກອງທັບຫວຽດນາມ. ໃນເດືອນເມສາ ປີ 2011 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ສັງເກດເຫັນໄມ້ທ່ອນກອງໃຫຍ່ຢູ່ໃນອັດຕະປື ຊຶ່ງບໍລິສັດນີ້ເປັນເຈົ້າຂອງກຳລັງລໍຖ້າລຳລຽງໄປຫວຽດນາມ. ດ້ວຍການລົງທຶນໃສ່ໂຄງການຕັດໄມ້, ການປູກໄມ້ອຸດສາຫະກຳແລະສ້າງເຂື່ອນພະລັງງານນ້ຳ ບໍລິສັດຫວຽດນາມໄດ້ຖາງປ່າຢູ່ໃນປະເທດລາວເປັນບໍລິເວນຍາວຢຽດຕັ້ງແຕ່ແຂວງຊຽງຂວາງຢູ່ໃນພາກກາງຂອງປະເທດ ໄປຮອດອັດຕະປືຢູ່ທາງພາກໃຕ້.

ໄມ້ທ່ອນສ່ວນໃຫຍ່ຊຶ່ງຖືກລັກລອບລຳລຽງຂ້າມຊາຍແດນ ຈະຖືກນຳໄປປຸງແຕ່ງເປັນຜະລິດຕະພັນໄມ້ຢູ່ໃນຫວຽດນາມ ແລ້ວສົ່ງອອກໄປນອກປະເທດ ຊຶ່ງຕະຫລາດຫລັກແມ່ນສະຫະລັດອາເມຣິກາແລະສະຫະພາບເອີຣົບ. ປະເທດຈາກທັງສອງພາກສ່ວນນີ້ໄດ້ດຳເນີນນະໂຍບາຍເກືອດຫ້າມບໍ່ໃຫ້ມີການເອົາໄມ້ທີ່ຜິດກົດໝາຍເຂົ້າມາຢູ່ໃນຕະຫລາດຂອງຕົນ ແຕ່ວ່າການຫລັ່ງໄຫລເຂົ້າມາຂອງໄມ້ທ່ອນກໍຍັງດຳເນີນຢູ່ຕໍ່ໄປໂດຍບໍ່ມີທີທ່າວ່າຈະຫລຸດລົງເລີຍ.

ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ຄົ້ນພົບການຄ້າໄມ້ເຖື່ອນເປັນເທື່ອທຳອິດລະຫວ່າງລາວແລະຫວຽດນາມໃນປີ 2008. ແຕ່ການສືບສວນເມື່ອບໍ່ດົນມານີ້ເປີດເຜີຍໃຫ້ເຫັນວ່າບໍ່ມີຫຍັງປ່ຽນແປງເລີຍ. ປັດຈຸບັນເຖິງເວລາແລ້ວທີ່ລັດຖະບານທັງສອງປະເທດຈະເຮັດວຽກຮ່ວມກັນ ເພື່ອສະກັດກັ້ນການຫລັ່ງໄຫລຂອງໄມ້ທ່ອນ ແລະຢັບຢັ້ງການຂຸດຄົ້ນປ່າໄມ້ທີ່ມີຄຸນຄ່າຂອງປະເທດລາວເກີນຂອບເຂດ.

ອົງການສືບສວນດ້ານສິ່ງແວດລ້ອມສາກົນ
ເດືອນກໍລະກົດ ປີ 2011



# ປ່າໄມ້ຂອງລາວຖືກຄຸກຄາມ

ເຂດເກັບມ້ຽນໄມ້ທ່ອນຢູ່ອັດຕະປື, ປະເທດລາວ ປີ 2011

© EIA

ລາວເປັນປະເທດທີ່ບໍ່ມີທາງອອກສູ່ທະເລ (ຊື່ທີ່ເປັນທາງການແມ່ນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ) ຕັ້ງຢູ່ໃຈກາງຂົງເຂດ ແມ່ນ້ຳຂອງ ແລະມີບໍລິເວນກວ້າງທີ່ສຸດບາງບ່ອນ ຊຶ່ງແມ່ນປ່າຝົນໃນໄລ ຍະທຳອິດ ທີ່ຫລົງເຫລືອຢູ່ໃນແຜ່ນດິນໃຫຍ່ເຂດອາຊີຕາເວັນອອກສ່ຽງ ໃຕ້. ປ່າເຫລົ່ານີ້ຍັງຄົງຮັກສາຊີວະນາໆພັນທີ່ລ້ຳຄ່າໄວ້ ເນື່ອງຈາກເປັນ ບ່ອນຢູ່ອາໄສຂອງສັດລ້ຽງລູກດ້ວຍນ້ຳນົມຂະໜາດໃຫຍ່ ເຊັ່ນ ເສືອ, ຊ້າງອາຊີ ແລະຊະນິດພັນສັດດຶກດຳບັນທີ່ມີສະເພາະຢູ່ໃນທ້ອງຖິ່ນ ຊຶ່ງ ກຳລັງໃກ້ຈະສູນພັນໄປ.

ປ່າໄມ້ຂອງລາວຍັງຊ່ວຍຊູການດຳລົງຊີວິດຂອງປະຊາຊົນເຜົ່າດັ້ງເດີມ ຢູ່ເຂດຊົນນະບົດຫລາຍລ້ານຄົນນຳອີກ. ໃນປີ 2008, ພົນລະເມືອງ 70 ເປີເຊັນຂອງປະເທດ ແມ່ນປະຊາຊົນຢູ່ເຂດຊົນນະບົດ ລວມແລ້ວມີ 4.2 ລ້ານຄົນ.[1] ຊຸມຊົນເຫລົ່ານີ້ເພິ່ງພາອາໄສປ່າໄມ້ສຳລັບປັດໃຈຫລາຍ ຢ່າງແລະການທຳມາຫາກິນ ເຊັ່ນ ອາຫານ, ເຊື້ອເພີງ, ວັດສະດຸກໍ່ສ້າງ ແລະຢາປົວພະຍາດ.

ແຕ່ວ່າປ່າໄມ້ຂອງລາວໄດ້ຖືກຄຸກຄາມຢ່າງຮ້າຍແຮງຈາກການຂຸດຄົ້ນ ເກີນຂອບເຂດ ເນື່ອງຈາກການຕັດໄມ້ທຳລາຍປ່າຢ່າງຫລວງຫລາຍ. ການຄຸກຄາມຢ່າງໃຫຍ່ຫລວງອັນໜຶ່ງແມ່ນການຕັດໄມ້ເພື່ອປ້ອນໃຫ້ ແກ່ອຸດສາຫະກຳປຸງແຕ່ງໄມ້ຢູ່ໃນປະເທດໃກ້ຄຽງ ຄື ຫວຽດນາມ, ຈີນ ແລະໄທ. ເນື່ອງຈາກວ່າຢູ່ຊາຍແດນຂອງປະເທດເຫລົ່ານີ້ມີການຄວບຄຸມ ການຕັດໄມ້ຢ່າງເຂັ້ມງວດກວດຂັນ ສະນັ້ນການຂຸດຄົ້ນໄມ້ຢູ່ປ່າຂອງປະ ເທດລາວຈຶ່ງເພີ່ມທະວີຂຶ້ນ.

ທັດສະນີຍະພາບປ່າໄມ້ຂອງລາວກໍມີລັກສະນະປອກໂຫລ້ນເພີ່ມຂຶ້ນ ເລື້ອຍໆ ຈາກການພັດທະນາພື້ນຖານໂຄງລ່າງ, ໂຄງການພະລັງງານນ້ຳ, ບໍ່ແຮ່ແລະການປູກໄມ້ອຸດສາຫະກຳ ພາໃຫ້ເກີດການຕັດໄມ້ທີ່ຜິດກົດ ໝາຍແລະບໍ່ຍືນຍົງຄົງຕົວອີກຕໍ່ໄປ.

ເມື່ອສະຖິຕິກ່ຽວກັບປ່າໄມ້ມີຄວາມແຕກຕ່າງກັນດ້ານຄວາມຖືກຕ້ອງ ຊັດເຈນ ແຕ່ສິ່ງທີ່ແນ່ນອນ ຄື ການຕັດໄມ້ທຳລາຍປ່າຢູ່ປະເທດລາວໃນ ປັດຈຸບັນມີອັດຕາສູງຢ່າງໜ້າຕົກໃຈ. ພື້ນທີ່ປ່າໄມ້ໃນຊຸມປີ 1940 ຊຶ່ງ ຄາດວ່າມີ 70 ເປີເຊັນ ແຕ່ມາຮອດປີ 2002 ຍັງເຫລືອພຽງແຕ່ 41 ເປີ ເຊັນ. ໃນສອງທົດສະວັດຜ່ານມານີ້ ອັດຕາການສູນເສຍຂອງປ່າໄມ້ໃນ ແຕ່ລະປີມີຫລາຍກວ່າ 90,000 ເຮັກຕາ.[2] ສ່ວນຫລາຍປ່າໄມ້ທີ່ຫລົງ ເຫລືອຢູ່ແມ່ນປ່າຊຸດໂຊມຢ່າງຮ້າຍແຮງ ຊຶ່ງມີຄຸນຄ່າທາງດ້ານຊີວະນາໆ ພັນພຽງໜ້ອຍດຽວ.[3]

ການສູນເສຍປ່າໄມ້ໝາຍເຖິງຄວາມອຸດົມຮັ່ງມີທາງດ້ານຊີວະນາໆພັນ ຂອງປະເທດລາວມີອາການສາຫັດສາກັນ. ຊະນິດພັນສັດໃຫຍ່ທີ່ລ້ຽງລູກ ດ້ວຍນ້ຳນົມຢູ່ໃນພາວະກົດດັນຈາກການຄ້າສັດປ່າ ແລະປັດຈຸບັນນີ້ຜະ ເຊີນກັບການແຕກກະຈັດກະຈາຍ ແລະສູນເສຍບ່ອນຢູ່ອາໄສແລະຫາ ກິນ. ນັກອະນຸລັກທຳມະຊາດຄາດຄະເນໄວ້ແລ້ວວ່າ ຊີວະນາໆພັນຂອງ ປະເທດລາວອາດຈະບໍ່ອຸດົມສົມບູນດັ່ງທີ່ມີການກ່າວອ້າງກັນທົ່ວໄປອີກ ແລ້ວ.[4]

ບັນດາຊຸມຊົນທີ່ເພິ່ງພາອາໄສປ່າໄມ້ຢູ່ໃນລາວຢູ່ຢ່າງລຳບາກຍາກແຄ້ນ ຫລາຍຂຶ້ນ ຍ້ອນນະໂຍບາຍການພັດທະນາ ຊຶ່ງບໍ່ໄດ້ຕອບແທນຢ່າງພຽງ ພໍຕໍ່ການທຳມາຫາກິນແບບດັ້ງເດີມຂອງພວກເຂົາເຈົ້າເລີຍ. ອີງຕາມໂຄງ ການພັດທະນາຂອງອົງການສະຫະປະຊາຊາດ ເຄື່ອງປ່າຂອງດົງແມ່ນ ລາຍຮັບ 90 ເປີເຊັນສຳລັບຄອບຄົວປະຊາຊົນຜູ້ທີ່ທຸກຍາກທີ່ສຸດຢູ່ໃນ ປະເທດລາວ.[5]

ປ່າໄມ້ຍັງມີບົດບາດສຳຄັນໃນການຕອບສະໜອງນ້ຳສະອາດແລະການ ຄຸ້ມຄອງຊັບພະຍາກອນນ້ຳໂດຍທົ່ວໄປນຳອີກ. ອີກຢ່າງໜຶ່ງນ້ຳຍັງມີ ຄວາມສຳຄັນ ໂດຍສະເພາະທັງສຳລັບພະລັງງານນ້ຳ ຊຶ່ງແມ່ນອົງປະກອບ ສຳຄັນອັນໜຶ່ງດ້ານຍຸດທະສາດການພັດທະນາຂອງລັດຖະບານລາວ ແລະຢູ່ໃນລະບົບຊົນລະປະທານ ແມ່ນຈຸດປະສົງສຳຄັນອັນໜຶ່ງຂອງລັດ ຖະບານ ເພື່ອຮັບປະກັນດ້ານສະບຽງອາຫານໃຫ້ແກ່ຄອບຄົວປະຊາຊົນ ຢູ່ເຂດຊົນນະບົດ.

ເຖິງວ່າໂຄງການຕັດໄມ້ແລະພື້ນຖານໂຄງລ່າງຈະເພີ່ມທະວີ ເຮັດໃຫ້ການທຳມາຫາກິນຂອງຊຸມຊົນເຫລົ່ານີ້ສູນເສຍໄປກໍຕາມ ແຕ່ວ່າກົດໝາຍທີ່ຈະນຳໄປປະຕິບັດເພື່ອຮັບປະກັນໃຫ້ພວກເຂົາເຈົ້າໄດ້ຮັບການຊົດເຊີຍຈາກການຂຸດຄົ້ນປ່າໄມ້ ກໍຍັງຖືກເພີກເສີຍຢູ່ເປັນປະຈຳ. ນອກຈາກບໍ່ໄດ້ເອົາຫົວຊານຳການປັບປຸງສະພາບຄວາມຫຍຸ້ງຍາກຂອງປະຊາຊົນຢູ່ເຂດຊົນນະບົດຂອງຕົນເອງແລ້ວ ນະໂຍບາຍລັດຖະບານກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດກໍຍິ່ງເຮັດໃຫ້ການມີຊີວິດຢູ່ລອດຂອງປະຊາຊົນເຫລົ່ານີ້ຫຍຸ້ງຍາກຂຶ້ນອີກ.

# ກົດລະບຽບທີ່ອ່ອນແອ

ປະເທດລາວມີກົດໝາຍຈຳນວນຫລວງຫລາຍຢູ່ໃນເຈ້ຍໃນສໍ ກ່ຽວກັບການຄວບຄຸມການຕັດໄມ້ແລະຄ້າໄມ້ ແຕ່ຄວາມເປັນຈິງແລ້ວ ສະພາບການຢູ່ໃນພາວະວິກິດແລະຈົມດິ່ງຢູ່ກັບການສໍ້ລາດບັງຫລວງ. ຢູ່ໃນກົດໝາຍປ່າໄມ້ຂອງຊາດ ມີການອະນຸຍາດໃຫ້ຕັດໄມ້ໄດ້ຢູ່ໃນແຕ່ເຂດປ່າຜະລິດເທົ່ານັ້ນ ໂດຍປະຕິບັດຕາມແຜນການຄຸ້ມຄອງແບບຍືນຍົງທີ່ໄດ້ຮັບການອະນຸມັດໄປແລ້ວ ມີການຍົກເວັ້ນໃນກໍລະນີພິເສດເທົ່ານັ້ນ ຄືພື້ນທີ່ຊຶ່ງຖືກຖາກຖາງສຳລັບໂຄງການກໍ່ສ້າງພື້ນຖານໂຄງລ່າງ. ແຕ່ໃນຄວາມເປັນຈິງແລ້ວ ບໍ່ຄ່ອຍມີການໄປສັງເກດການເບິ່ງເລື່ອງນີ້ເລີຍ.

ການຕັດໄມ້ຢູ່ໃນເຂດປ່າປົກປ້ອງແລະປ່າສະຫງວນ ກໍຄືເຂດປ່າຜະລິດຈະບໍ່ມີແຜນຄຸ້ມຄອງເລີຍ ມັນແມ່ນການແຜ່ລະບາດ ແລະຖືກລະບຸວ່າແມ່ນຕົວເລັ່ງສຳຄັນທີ່ສຸດໃນການເຮັດໃຫ້ປ່າໄມ້ຊຸດໂຊມໂດຍລັດຖະບານລາວ ຄຽງຄູ່ກັບການປູກຝັງເລື່ອນລອຍ. ເຂດຊາຍແດນແລະປ່າສະຫງວນແຫ່ງຊາດ ມີໄມ້ທີ່ມີລາຄາທາງດ້ານການຄ້າຫລົງເຫລືອຢູ່ຈຳນວນຫລວງຫລາຍ ສະນັ້ນຈຶ່ງກາຍເປັນຈຸດສົນໃຈພິເສດຂອງການຕັດໄມ້ທີ່ຜິດກົດໝາຍ.[6]

ການຕັດໄມ້ທຳລາຍປ່າທີ່ພວມດຳເນີນຢູ່ຕໍ່ໄປຢູ່ໃນປະເທດແມ່ນຜົນຈາກການປົກຄອງທີ່ອ່ອນແອໂດຍກົງ. ຕະຫລອດໄລຍະສອງທົດສະວັດຜ່ານມາ ກົດໝາຍ, ມະຕິຄຳສັ່ງແລະການແຈ້ງການກ່ຽວກັບນະໂຍບາຍຕ່າງໆໄດ້ສ້າງໂຄງຮ່າງລະບຽບຫລັກການຢ່າງກວ້າງຂວາງໃນການບໍລິຫານທຸກຢ່າງ ນັບຕັ້ງແຕ່ກຳມະສິດທີ່ດິນໄປຈົນຮອດການສົ່ງໄມ້ອອກໄປຕ່າງປະເທດ ແຕ່ໃນຄວາມເປັນຈິງແລ້ວ ລະບຽບຫລັກການເຫລົ່ານີ້ຖືກທຳລາຍຢ່າງຮ້າຍແຮງ ຫລືເວົ້າງ່າຍໆກໍຄືບໍ່ເອົາຫົວໃສ່ໃຈຊານັ້ນເອງ. ການປະຕິບັດຢ່າງມີຄວາມໝາຍ ຂາດຄວາມຊອບທຳ ເນື່ອງຈາກວ່າກຸ່ມຜົນປະໂຫຍດທີ່ມີອຳນາດ ຊຶ່ງມີນັກທຸລະກິດໃນກອງທັບແລະເຈົ້າໜ້າທີ່ສໍ້ລາດບັງຫລວງພາກັນປຸ້ນສະດົມຊັບພະຍາກອນທຳມະຊາດຂອງປະເທດໂດຍບໍ່ໄດ້ຮັບການລົງໂທດໃດໆທັງສິ້ນ. ດັ່ງທີ່ເຈົ້າໜ້າທີ່ກວດກາປ່າໄມ້ຄົນໜຶ່ງບອກນັກຂ່າວວ່າ "ພວກເຮົາຈັບປະຊາຊົນໄດ້ຫລາຍຄົນ. ພວກເຮົາຖາມວ່າພວກເຂົາເຈົ້າເຮັດວຽກໃຫ້ໃຜ? ພວກເຂົາເຈົ້າບອກຊື່ບຸກຄົນສຳຄັນຈຳນວນໜຶ່ງ. ຫລັງຈາກນັ້ນພວກເຮົາກໍໂທລະສັບຖາມກ່ຽວກັບກິດຈະກຳຕ່າງໆ ແຕ່ບຸກຄົນເຫລົ່ານັ້ນປະຕິເສດ. ພວກເຮົາຈະເຮັດແນວໃດໄດ້ ພວກເຂົາເຈົ້າແມ່ນຄົນທ້ອງໃຫຍ່ທັງນັ້ນ".[7]

ທັ້ງໆທີ່ມີລະບົບທີ່ບໍ່ມີປະສິດທິຜົນແບບນີ້ ການທີ່ລັດຖະບານລາວອ້າງຈຸດປະສົງຂອງຕົນທີ່ຈະເຮັດໃຫ້ປ່າໄມ້ຟື້ນຄືນມາປົກຄຸມເນື້ອທີ່ປະເທດໃຫ້ໄດ້ 70 ເປີເຊັນ ໃນປີ 2020 ນັ້ນ ແມ່ນເລື່ອງເພີ້ຝັນເກີນຈິງ. ເພື່ອບັນລຸຈຸດປະສົງຂອງຕົນ ລັດຖະບານຕັ້ງໃຈຈະເຮັດໃຫ້ປ່າໄມ້ເກີດຄືນອີກຕື່ມຕາມທຳມະຊາດໃຫ້ໄດ້ປ່າຫົກລ້ານເຮັກຕາ ແລະປູກຕົ້ນໄມ້ໃສ່ເນື້ອທີ່ 500,000 ເຮັກຕາ. ແຕ່ເມື່ອອັດຕາການຕັດໄມ້ທຳລາຍປ່າມີ 0.6 ເປີເຊັນຕໍ່ປີ ຈຶ່ງມີແນວໂນ້ມວ່າ ເນື້ອທີ່ປ່າໄມ້ຈະຫລຸດລົງອີກຈົນເຫລືອພຽງແຕ່ 30 ເປີເຊັນເທົ່ານັ້ນ ໃນປີ 2020.[8]

**ຮູບລຸ່ມ:**
ຊຸມຊົນຢູ່ເຂດຊົນນະບົດໃນປະເທດລາວ ເພິ່ງພາອາໄສປ່າໄມ້ໃນການທຳມາຫາກິນຂອງຕົນ.



© EIA

ເປັນໜ້າຢາກຫົວ ທີ່ໜຶ່ງໃນເຫດຜົນຫລັກທີ່ລັດຖະບານຜັກດັນໃນການເພີ່ມທະວີເນື້ອທີ່ປ່າໄມ້ ເພື່ອປົກປ້ອງຊັບພະຍາກອນນ້ຳຂອງປະເທດ ທີ່ມີຄວາມຈຳເປັນຢ່າງຍິ່ງສຳລັບການຂະຫຍາຍຕົວຂອງໄຟຟ້າພະລັງງານນ້ຳ ຊຶ່ງກາຍມາເປັນແຫລ່ງລາຍຮັບສຳຄັນຈາກການສົ່ງອອກ.[9] ແຕ່ແມ່ນການຂະຫຍາຍຕົວຢ່າງໄວວາຂອງໂຄງການພະລັງງານນ້ຳນີ້ເອງ ທີ່ເປັນຕົວເລັ່ງ ເຮັດໃຫ້ການຕັດໄມ້ທຳລາຍປ່າຮ້າຍແຮງຍິ່ງຂຶ້ນ. ການສໍ້ລາດບັງຫລວງແຜ່ລະບາດຢູ່ໃນຂະແໜງປ່າໄມ້ຂອງລາວ ອະທິບາຍໃຫ້ເຫັນໄດ້ວ່າ ເປັນຫຍັງຜູ້ຄົນຈຶ່ງບໍ່ພາກັນເກັງກົວກົດໝາຍຂອງຊາດເລີຍ. ໃນປີ 2010 ໄອຍະການຂອງລັດຍອມຮັບວ່າ ຈຳນວນເຈົ້າໜ້າທີ່ປ່າໄມ້ຖືກຈັບໄດ້ວ່າຮັບສິນບົນຈາກການຊື້ຈ້າງຈອບອອຍມີເພີ່ມຂຶ້ນ ໂດຍມີຄົນຈ່າຍເງິນໃຫ້ແກ່ເຈົ້າໜ້າທີ່ກວດກາ ເພື່ອຈະໄດ້ຮັບອະນຸຍາດໃຫ້ຕັດໄມ້ເກີນໂກຕ້າ.[10] ໃນປີ 2010 ລາວຖືກຈັດໃຫ້ຢູ່ໃນອັນດັບທີ 154 ໃນຈຳນວນ 178 ປະເທດທີ່ມີການສໍ້ລາດບັງຫລວງຫລາຍທີ່ສຸດ ຈາກການປະເມີນຂອງອົງການສອດສ່ອງຕໍ່ຕ້ານການສໍ້ລາດບັງຫລວງ ເພື່ອຄວາມໂປ່ງໃສລະຫວ່າງປະເທດ (Anti-corruption Watchdog Transparency International).[11] ຄາດຄະເນວ່າ 20 ເປີເຊັນຈາກບ້ວງເງິນບໍລິຫານທັງໝົດຂອງບໍລິສັດຕັດໄມ້ຢູ່ໃນປະເທດລາວ ຖືກນຳໃຊ້ເພື່ອຊື້ຈ້າງຈອບອອຍເຈົ້າໜ້າທີ່ອາວຸໂສເພື່ອໃຫ້ໄດ້ໂກຕ້າໃນການຕັດໄມ້. ສ່ວນອີກຕື່ມ 15 ຫາ 20 ເປີເຊັນນັ້ນ ເອົາຈ່າຍໃຫ້ເຈົ້າໜ້າທີ່ລະດັບຕໍ່າລົງມາ.[12]


ທັດສະນີຍະພາບປ່າໄມ້ຢູ່ແຂວງອັດຕະປືຂອງລາວ.

© EIA

ໃນປີ 2008 ມະຕິຄຳສັ່ງສະບັບໜຶ່ງຂອງນາຍົກລັດຖະມົນຕີໄດ້ບັງຄັບໃຫ້ຂະແໜງການຄຸ້ມຄອງປ່າໄມ້ມີການຈັດຕັ້ງກັນຄືນໃໝ່ຢ່າງຫລວງຫລາຍ ໂດຍໃຫ້ຫລຸດຜ່ອນອຳນາດຮວມສູນຢູ່ໃນກົມປ່າໄມ້. ໃນປີດຽວກັນນີ້ເອງ ກໍໄດ້ມີການກໍ່ຕັ້ງກົມກວດກາປ່າໄມ້ໃໝ່ຂຶ້ນມາ ເພື່ອໃຫ້ເປັນຂະແໜງກວດກາທີ່ເປັນເອກະລາດ. ເຖິງວ່າກົມກວດກາປ່າໄມ້ຈະໄດ້ຮັບອຳນາດມອບໝາຍສຳຄັນຢ່າງຍິ່ງກໍຕາມ ຈົນມາຮອດທຸກມື້ນີ້ ກົມນີ້ກໍຍັງອ່ອນເພຍເປ້ຍລ່ອຍຢູ່ ຍ້ອນບໍ່ມີພະນັກງານທີ່ຜ່ານການຝຶກອົບຮົມ ແລະມີຂີດຈຳກັດດ້ານງົບປະມານ. ນອກຈາກນີ້ແລ້ວກົມນີ້ຍັງບໍ່ກ້າແຕະຕ້ອງຜົນປະໂຫຍດຂອງກຸ່ມອິດທິພົນຮັ່ງມີ.

ໂດຍຫລັກການແລ້ວ ມີການອອກກົດລະບຽບຄວບຄຸມກ່ຽວກັບການຄ້າໄມ້ຢູ່ໃນລາວ. ນັບຕັ້ງແຕ່ປີ 1999 ເປັນຕົ້ນມາ ລັດຖະບານໄດ້ນຳໃຊ້ມາດຕະການຫລາຍຢ່າງເພື່ອປ້ອງກັນບໍ່ໃຫ້ມີການສົ່ງໄມ້ທີ່ບໍ່ໄດ້ແປຮູບອອກນອກປະເທດ ຊຶ່ງເປັນຄວາມພະຍາຍາມທີ່ຈະຄວບຄຸມອັດຕາການຕັດໄມ້ ແລະສົ່ງເສີມຂະແໜງໄມ້ແປຮູບຢູ່ພາຍໃນປະເທດ. ຄຳສັ່ງຂອງນາຍົກລັດຖະມົນຕີ ໃນປີ 2007 ໄດ້ລະບຸຢ່າງຊັດເຈນວ່າ ມີການຫ້າມການສົ່ງໄມ້ທ່ອນອອກນອກປະເທດ ມີພຽງແຕ່ຜະລິດຕະພັນໄມ້ທີ່ແປຮູບແລ້ວເທົ່ານັ້ນທີ່ສາມາດສົ່ງອອກໄດ້.[13] ແຕ່ກໍເໝືອນດັ່ງທີ່ຜ່ານມາໂດຍທົ່ວໄປແລ້ວ ມີຄົນບໍ່ເອົາຫົວໃສ່ໃຈຊານຳກົດໝາຍແບບນີ້ທີ່ລັດຖະບານຂັ້ນສູນກາງເປັນຜູ້ເຮັດອອກມາ ຍັງມີໄມ້ທ່ອນແລະໄມ້ທີ່ຊອຍແລ້ວຫລັ່ງໄຫລອອກຈາກປະເທດຢູ່. ຍົກຕົວຢ່າງ ຄຳສັ່ງຂອງນາຍົກລັດຖະມົນຕີ ໃນປີ 2002 ໄດ້ລະບຸຢ່າງຊັດເຈນວ່າມີການຫ້າມການສົ່ງໄມ້ທ່ອນອອກນອກປະເທດ ມີພຽງແຕ່ຜະລິດຕະພັນໄມ້ທີ່ແປຮູບແລ້ວເທົ່ານັ້ນທີ່ສາມາດສົ່ງອອກໄດ້.

ສ່ວນຫລາຍການຄ້າໄມ້ນີ້ເກີດຈາກຄວາມຕ້ອງການວັດຖຸດິບຢູ່ໃນປະເທດເພື່ອນບ້ານ ໂດຍສະເພາະແມ່ນຫວຽດນາມ. ຄວາມລົ້ມເຫລວໃນການເກືອດຫ້າມການສົ່ງໄມ້ທ່ອນອອກນອກປະເທດນັ້ນ ເຮັດໃຫ້ຂາດເຂີນໄມ້ທີ່ຈະປ້ອນໃຫ້ແກ່ອຸດສາຫະກຳປຸງແຕ່ງໄມ້ຂອງລາວ. ໃນເດືອນກຸມພາ ປີ 2011 ໂຄສົກເຟີນີເຈີໄມ້ລາວຈົ່ມວ່າ ການຂາດເຂີນວັດຖຸດິບມີຜົນກະທົບຕໍ່ກຳໄລຂອງອຸດສາຫະກຳເຟີນີເຈີ ແລະເຮັດໃຫ້ມີການຍົກເລີກການສັ່ງຊື້ຈາກນອກປະເທດ. ໂຄສົກຜູ້ນີ້ຮຽກຮ້ອງໃຫ້ລັດຖະບານ


ເຂດເນື້ອທີ່ປ່າໄມ້ທີ່ຖືກຖາງເພື່ອປູກໄມ້ອຸດສາຫະກຳ ຢູ່ແຂວງອັດຕະປືຂອງລາວ.

© EIA

ລະງັບການສົ່ງໄມ້ທີ່ບໍ່ໄດ້ຮັບການແປຮູບອອກນອກປະເທດ.[14]

ເຫດຜົນໃຫຍ່ທີ່ອຸດສາຫະກຳພາຍໃນປະເທດລາວບໍ່ສາມາດຈັດຫາວັດຖຸໄດ້ຢ່າງພຽງພໍກໍຍ້ອນວ່າມີການຄ້າໄມ້ຢ່າງມະຫາສານກັບປະເທດຫວຽດນາມເພື່ອນບ້ານ ໂດຍມີການຝ່າຝືນການເກືອດຫ້າມສົ່ງໄມ້ທ່ອນອອກຈາກລາວ. ພາສີຂອງຫວຽດນາມໄດ້ບັນທຶກວ່າ ພາຍໃນ 10 ເດືອນທຳອິດຂອງປີ 2008 ມີໄມ້ທ່ອນຈຳນວນ 220,000 ແມັດກ້ອນມາຈາກປະເທດລາວ ທີ່ຜ່ານຊາຍແດນໂບອາຍ ຢູ່ແຂວງເກຍລາຍ ພຽງແຫ່ງດຽວ (Bo Y in Gia Lai Province).[15]

ຄວາມລົ້ມເຫລວໃນການເກືອດຫ້າມການສົ່ງໄມ້ທ່ອນອອກຂອງຜູ້ມີອຳນາດຢູ່ໃນລາວໄດ້ຖືກນຳມາຂຽນລົງໃນບົດຄວາມສະບັບໜຶ່ງໃນປີ 2004. ຜູ້ຕາງໜ້າອຸດສາຫະກຳໄມ້ໄດ້ພົບວ່າມີໄມ້ທ່ອນຂອງລາວຫລາຍກວ່າ 1,000 ແມັດກ້ອນ ຢູ່ທີ່ປະເທດເພື່ອນບ້ານໂດຍບໍ່ມີການລະບຸຊື່. ຜູ້ຊື້ບອກລາວວ່າ ຕົນເອງໄດ້ຊື້ໄມ້ທ່ອນເຫລົ່ານັ້ນມາຈາກເຈົ້າໜ້າທີ່ລັດຖະບານຢູ່ໃນລາວ. ເມື່ອລາວບອກຜູ້ຊື້ພວກນັ້ນວ່າ ໄມ້ທ່ອນບໍ່ສາມາດສົ່ງອອກຈາກລາວໄດ້ "ພວກເຂົາເຈົ້າຫົວຂວັນຂ້ອຍ ແລ້ວຖາມວ່າແມ່ນໃຜສາມາດຢຸດການສົ່ງໄມ້ທ່ອນອອກໄດ້?". ໃນປີດຽວກັນນີ້ ລັດຖະບານລາວໄດ້ອອກໂກຕ້າໃຫ້ນຳໃຊ້ໄມ້ຢູ່ພາຍໃນປະເທດໄດ້ຈຳນວນ 270,000 ແມັດກ້ອນ ແຕ່ແລ້ວມີພຽງແຕ່ 20,000 ແມັດກ້ອນເທົ່ານັ້ນທີ່ໄປເຂົ້າໂຮງງານ.[16]

ມີສິ່ງສະແດງໃຫ້ເຫັນວ່າລັດຖະບານລາວຮັບຮູ້ເຖິງຄວາມຈຳເປັນຕ້ອງປະຕິບັດກົດໝາຍປ່າໄມ້ທີ່ຍັງຄ້າງຄາຢູ່. ໃນເດືອນມິຖຸນາ ປີ 2011 ນາຍົກລັດຖະມົນຕີມີຄຳສັ່ງໃຫ້ເຈົ້າໜ້າທີ່ກວດກາປ່າໄມ້ແລະຕຳຫລວດກວດຄົ້ນລົດບັນທຸກທີ່ສົງໄສວ່າມີການລັກລອບເອົາໄມ້ອອກໄປຫວຽດນາມແລະຈີນ.[17]

ແຕ່ວ່າການກະທຳດັ່ງກ່າວເປັນພຽງການຂົ່ມຂູ່ເລັກໆນ້ອຍໆ ຈະໄປຕ້ານກຳລັງແຮງຂອງກຸ່ມອິດທິພົນທີ່ປຸ້ນສະດົມຊັບພະຍາກອນທຳມະຊາດຂອງລາວໄດ້ແນວໃດ. ເນື່ອງຈາກເປັນປະເທດທີ່ປະຊາຊົນສ່ວນໃຫຍ່ອາໄສຢູ່ເຂດຊົນນະບົດ ມີປະຊາກອນໜາແໜ້ນທີ່ຕ່ຳ ບວກໃສ່ກັບການປົກຄອງທີ່ອ່ອນແອແລະມີລະດັບການສໍ້ລາດບັງຫລວງສູງ ປະເທດລາວຈຶ່ງຕົກເປັນເຫຍື່ອຂອງປະເທດເພື່ອນບ້ານທີ່ມີຄວາມກ້າວໜ້າກວ່າທາງດ້ານເສດຖະກິດ. ບໍ່ພຽງແຕ່ເລື່ອງການຕັດໄມ້ເທົ່ານັ້ນ ແຕ່ຍັງລວມທັງສິນຄ້າການກະເສດ ຢາງພາລາແລະໂຄງການພະລັງງານນ້ຳນຳອີກ.

## ຜົນກະທົບຈາກການປູກໄມ້ອຸດສາຫະກຳແລະພະລັງງານນ້ຳ

ການຂະຫຍາຍພື້ນທີ່ປູກໄມ້ອຸດສາຫະກຳແລະເຮັດໂຄງການພະລັງງານນ້ຳຂະໜາດໃຫຍ່ແມ່ນພື້ນຖານສຳຄັນທາງຍຸດທະສາດດ້ານການພັດທະນາໄລຍະຍາວຂອງປະເທດລາວ ຊຶ່ງໄດ້ຮັບການສະໜັບສະໜູນຢ່າງແຮງກ້າຈາກລັດຖະບານ, ທະນາຄານພັດທະນາອາຊີແລະປະເທດອື່ນໆ. ທ່າແຮງທາງດ້ານໄຟຟ້າພະລັງງານນ້ຳກວມເອົາ 16 ເປີເຊັນຂອງຄວາມອຸດົມຮັ່ງມີທັງໝົດຂອງປະເທດລາວ.[18] ເຂື່ອນສິບແຫ່ງໄດ້ດຳເນີນງານໄປແລ້ວ ແລະຢ່າງໜ້ອຍມີອີກ 27 ແຫ່ງພວມດຳເນີນງານຢູ່.[19] ການຂະຫຍາຍຕົວດັ່ງກ່າວຖືກຂັບເຄື່ອນຍ້ອນຄວາມຕ້ອງການພະລັງງານຈາກປະເທດເພື່ອນບ້ານ ຄືໄທແລະຫວຽດນາມ. ການປູກໄມ້ອຸດສາຫະກຳແມ່ນສ່ວນໜຶ່ງຂອງຍຸດທະສາດໄລຍະຍາວ ຊຶ່ງລັດຖະບານຖືວ່າເປັນການນຳເອົາປ່າໄມ້ມານຳໃຊ້ໃຫ້ເກີດໝາກເກີດຜົນທາງດ້ານເສດຖະກິດຫລາຍຂຶ້ນ ໂດຍສະເພາະແມ່ນການປູກຢາງພາລາ ຊຶ່ງບໍລິສັດຈີນແລະຫວຽດນາມເປັນຜູ້ອຸດໜູນເງິນນັ້ນ ກຳລັງມີຈຳນວນເພີ່ມຂຶ້ນຢ່າງໄວວາ.

ການຂະຫຍາຍຕົວຂອງສິ່ງເຫລົ່ານີ້ເຮັດໃຫ້ມີການລົງທຶນຈາກຕ່າງປະເທດຢ່າງຫລວງຫລາຍຫລັ່ງໄຫລເຂົ້າມາຢູ່ໃນສອງຂະແໜງການນີ້ ພາໃຫ້ມີການຖາງແລະປ່ຽນແປງເນື້ອທີ່ປ່າໄມ້ຢ່າງຂະໜານໃຫຍ່ ກໍ່ໃຫ້ເກີດຜົນກະທົບ ຊຶ່ງມີລັກສະນະທຳລາຍທັງດ້ານສັງຄົມແລະສິ່ງແວດລ້ອມ.[20]

ທັງພື້ນຖານໂຄງລ່າງແລະການປູກໄມ້ອຸດສາຫະກຳເຮັດໃຫ້ສາມາດເຂົ້າໄປຮອດບ່ອນທີ່ມີໄມ້ທີ່ມີລາຄາຢູ່ນອກເຂດປ່າຜະລິດ ເນື່ອງຈາກວ່າບໍລິສັດໄດ້ຮັບໂກຕ້າໃຫ້ຖາງພື້ນທີ່ແຖວນັ້ນໄດ້. ບໍລິມາດໄມ້ມີຢ່າງມະຫາສານ ມີການລາຍງານວ່າຢູ່ພູພຽງນາກາຍພຽງແຫ່ງດຽວ ມີການຕັດໄມ້ຫລາຍກວ່າໜຶ່ງລ້ານແມັດກ້ອນ ເພື່ອຕຽມສ້າງເຂື່ອນນ້ຳເທີນສອງ.[21]

ໃນປີ 2008 ມີການຄາດຄະເນວ່າ 60 ເປີເຊັນຂອງໄມ້ທີ່ຂຸດຄົ້ນຢູ່ໃນປະເທດລາວນັ້ນ ໄດ້ຮັບການອະນຸມັດຕາມໂກຕ້າພິເສດສຳລັບໂຄງການໄຟຟ້າພະລັງງານນ້ຳແລະພື້ນຖານໂຄງລ່າງອື່ນໆ.[22] ຢູ່ໃນປະເທດລາວ ກອງທັບມີສ່ວນກ່ຽວຂ້ອງກັບການຂຸດຄົ້ນຊັບພະຍາກອນຍ້ອນວ່າມີໂຄງການພະລັງງານນ້ຳ. ຕົວຢ່າງກະຊວງປ້ອງກັນຊາດໄດ້ຮັບມອບໝາຍໃຫ້ຕັດໄມ້ແລະຂາຍໄມ້ຢູ່ໃນເຂດເຂື່ອນນ້ຳງື່ມສາມ ໂດຍໃຫ້ສອງບໍລິສັດເຮັດສັນຍາໃຫ້ຕັດໄມ້ໄດ້ຈຳນວນ 70,000 ແມັດກ້ອນ.[23]

ອີງຕາມກົດໝາຍປ່າໄມ້ ການປູກໄມ້ອຸດສາຫະກຳນັ້ນຕ້ອງປູກໃສ່ດິນເສື່ອມໂຊມ ແຕ່ວ່າຄຳນິຍາມຂອງຄຳວ່າ 'ເສື່ອມໂຊມ' ນັ້ນບໍ່ມີຄວາມຊັດເຈນ. ໃນຄວາມເປັນຈິງແລ້ວມັກມີການປູກໄມ້ອຸດສາຫະກຳບ່ອນໃໝ່ໃສ່ເນື້ອທີ່ປ່າຢ່າງຜິດກົດໝາຍ ແລະແມ່ນຕົວເລັ່ງສຳຄັນຂອງການຕັດໄມ້ທຳລາຍປ່າ. ເມື່ອມີການຕັດໄມ້ຢູ່ໃນປະເທດລາວ ການປູກໄມ້ອຸດສາຫະກຳຊໍ້າພັດຄຸມເຄືອ. ມີແນວໂນ້ມເພີ່ມຂຶ້ນວ່າ ບໍລິສັດຕ່າງໆຖືເອົາການໄດ້ຮັບອະນຸຍາດປູກໄມ້ອຸດສາຫະກຳເປັນວິທີທາງໜຶ່ງ ເພື່ອໃຫ້ໄດ້ໄມ້ແລະມີບາງກໍລະນີ ເມື່ອມີການຕັດໄມ້ອອກແລ້ວດິນພັດຖືກປະຖິ້ມໄວ້ລ້າງໆຊໍ້າ.[24]



© EIA



# ອຸດສາຫະກໍາໄມ້ຂອງຫວຽດນາມ ກໍາລັງຂະຫຍາຍຕົວຢ່າງໄວວາ

ໂຮງງານເຟີນິເຈີທີ່ໃຊ້ຢູ່ນອກເຮືອນ ທີ່ກີຍົ່ງ ຫວຽດນາມ.

© EIA



ໄມ້ແປ້ນອົບແຫ້ງ ທີ່ກີຍົ່ງ ຫວຽດນາມ

© EIA

ໃນທົດສະວັດທີ່ຜ່ານມາ ອຸດສາຫະກໍາໄມ້ຂອງຫວຽດນາມມີເງິນໝູນວຽນຫລາຍຕື້ໂດລາ ສ່ວນໃຫຍ່ໄດ້ກໍາໄລຈາກຂະແໜງອຸດສາຫະກໍາເຟີນິເຈີຂອງປະເທດ ຊຶ່ງປັດຈຸບັນກາຍເປັນອັນດັບຫົກຂອງໂລກ. ໃນປີ 2010 ຫວຽດນາມມີລາຍຮັບ 3.4 ຕື້ໂດລາຈາກການສົ່ງຜະລິດຕະພັນໄມ້ອອກໄປຕ່າງປະເທດ ແລະຄາດວ່າຈະເພີ່ມຂຶ້ນເປັນ 4 ຕື້ໂດລາໃນປີ 2011.[25]

ຕະຫລາດສົ່ງອອກແມ່ນຕົວເລັ່ງສໍາຄັນຂອງການຂະຫຍາຍຕົວຢູ່ໃນອຸດສາຫະກໍາຫວຽດນາມ ຊຶ່ງປັດຈຸບັນຢູ່ທົ່ວປະເທດມີວິສະຫະກິດໄມ້ແປຮູບ 2,500 ແຫ່ງ.[26] ໃນປີ 2007 ການສົ່ງເຟີນິເຈີມີມູນຄ່າ 2.4 ຕື້ໂດລາ ຄິດໄລ່ເປັນ 20 ເປີເຊັນຂອງລາຍໄດ້ລວມຈາກການສົ່ງອອກຂອງຫວຽດນາມ.[27] ລັດຖະບານວາງແຜນຢາກໃຫ້ມູນຄ່າການສົ່ງຜະລິດຕະພັນໄມ້ອອກນອກປະເທດໃຫ້ໄດ້ເກືອບສອງເທົ່າຄືເປັນ 7.8 ຕື້ໂດລາໃນປີ 2020.[28]

ໃນປີ 2010 ຫວຽດນາມສົ່ງຜະລິດຕະພັນໄມ້ອອກໄປໃຫ້ 26 ປະເທດ ຕະຫລາດສໍາຄັນແມ່ນສະຫະພາບເອີຣົບ, ສະຫະລັດອາເມຣິກາ ແລະຍີ່ປຸ່ນ. ໃນປີ 2008 ສະຫະລັດອາເມຣິກາເປັນຕະຫລາດລາຍໃຫຍ່ທີ່ສຸດຂອງຜະລິດຕະພັນເຟີນິເຈີຈາກຫວຽດນາມ ຄືມີມູນຄ່າເກືອບຮອດ 1 ຕື້ໂດລາ ສ່ວນມູນຄ່ານໍາເຂົ້າສະຫະພາບເອີຣົບມີ 600 ລ້ານໂດລາ. ການສົ່ງອອກເຟີນິເຈີມີຄວາມສໍາຄັນຕໍ່ເສດຖະກິດຫວຽດນາມນັ້ນ ມີການສະແດງໃຫ້ເຫັນຢູ່ໃນຂໍ້ມູນຂອງເຄິ່ງປີທໍາອິດ ໃນປີ 2010 ຊຶ່ງໜຶ່ງສ່ວນສາມຂອງສິນຄ້າທັງໝົດທີ່ຫວຽດນາມສົ່ງໄປສະຫະລັດອາເມຣິການັ້ນແມ່ນເຟີນິເຈີ.[29]

ຂະນະທີ່ຄວາມຕ້ອງການຈາກສະຫະພາບເອີຣົບແລະສະຫະລັດອາເມຣິກາຕົກວູບລົງແລະຍັງບໍ່ທັນຟື້ນຕົວຈາກວິກິດທາງດ້ານການເງິນເທື່ອນັ້ນ ປະເທດຕ່າງໆ ເຊັ່ນ ຈີນແລະຕາເວັນອອກກາງຊໍ້າພັດກາຍເປັນແຫລ່ງສໍາຄັນທີ່ຕ້ອງການເຟີນິເຈີຈາກຫວຽດນາມເພີ່ມຂຶ້ນ ໂດຍສະເພາະແມ່ນຜະລິດຕະພັນຈາກຊະນິດໄມ້ເນື້ອແຂງທີ່ຫາຍາກແລະມີລາຄາແພງກວ່າຈາກເຂດຮ້ອນ.[30]

ຕັ້ງແຕ່ຫວຽດນາມໄດ້ 'ປິດ' ປ່າຂອງຕົນໃນປີ 1997 ເປັນຕົ້ນມາ ຢູ່ໃນປະເທດຈຶ່ງມີການຄວບຄຸມການຕັດໄມ້ຢ່າງເຂັ້ມງວດ. ເມື່ອຕະຫລາດສົ່ງອອກຜະລິດຕະພັນໄມ້ຈະເລີນງອກງາມ ຫວຽດນາມຈະຕ້ອງເພິ່ງການນໍາໄມ້ເຂົ້າມາໃນປະເທດເພີ່ມຂຶ້ນ ເພື່ອປ້ອນໃຫ້ແກ່ອຸດສາຫະກໍາໄມ້ແປຮູບ. ປັດຈຸບັນຈໍານວນໄມ້ທີ່ນໍາເຂົ້າມາມີປະມານ 80 ເປີເຊັນຂອງໄມ້ທີ່ສະໜອງໃຫ້ແກ່ອຸດສາຫະກໍາ.[31]

ໃນປີ 2000 ຫວຽດນາມນໍາເຂົ້າໄມ້ທ່ອນແລະໄມ້ທີ່ຊອຍແລ້ວເປັນມູນຄ່າ 123 ລ້ານໂດລາ.[32]

ໃນປີ 2008 ມັນໄດ້ເພີ່ມຂຶ້ນຢ່າງໄວວາເປັນມູນຄ່າ 1.1 ຕື້ໂດລາ.[33] ໃນປີ 2011 ຄາດວ່ານໍາໄມ້ເຂົ້າມາໃນປະເທດສາມລ້ານແມັດກ້ອນ.[34] ໃນປີ 2010 ສະມາຄົມໄມ້ແລະຜະລິດຕະພັນຈາກປ່າຂອງຫວຽດນາມ (The Vietnam Timber & Forest Product Association) ປະກາດວ່າ ອຸດສາຫະກໍາຂອງປະເທດຕ້ອງການໄມ້ 6.4 ລ້ານແມັດກ້ອນ ເພື່ອໃຫ້ບັນລຸການຜະລິດທີ່ໄດ້ວາງແຜນໄວ້ ສ່ວນໄມ້ທີ່ໄດ້ຈາກປ່າພາຍໃນປະເທດນັ້ນມີພຽງ 1.6 ລ້ານແມັດກ້ອນເທົ່ານັ້ນແລະສ່ວນຫລາຍແມ່ນໄມ້ຈາກການປູກເອົາ.[35]

ນະໂຍບາຍຂອງຫວຽດນາມໃນການຊອກຫາແຫລ່ງທີ່ມາຂອງໄມ້ນັ້ນ ມັກຈະສະທ້ອນອອກມາໃຫ້ເຫັນຈາກຄວາມຕ້ອງການຂອງລູກຄ້າທີ່ມີການປ່ຽນແປງ. ຫວຽດນາມນໍາເຂົ້າແມ່ນກະທັ້ງໄມ້ທີ່ປູກເອົາ ເຊັ່ນ ຕົ້ນວິກ, ຕົ້ນຂີ້ເຫລັກ ແລະຕົ້ນສັກເປັນຈໍານວນຫລວງຫລາຍ. ໄມ້ສ່ວນຫລາຍທີ່ຜະລິດອອກໄປສູ່ຕະຫລາດສະຫະພາບເອີຣົບແລະອາເມຣິກາ ລ້ວນແຕ່ແມ່ນໄມ້ທີ່ລັກລອບຕັດຢ່າງຜິດກົດໝາຍ ເປັນຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ຊຶ່ງປະເທດເຫລົ່ານີ້ຄວນມີຈິດສໍານຶກຕໍ່ບັນຫານີ້. ແຕ່ອຸດສາຫະກໍາໄມ້ຍັງກາງຕໍ່ບໍລິມາດໄມ້ຈາກປ່າທໍາມະຊາດເຂດຮ້ອນຢ່າງຫລວງຫລາຍ ລວມທັງໄມ້ (yellow balau) ໄມ້ (keruing) ແລະໄມ້ສັກທໍາມະຊາດ.

ຜູ້ທີ່ສົ່ງໄມ້ລາຍໃຫຍ່ຈາກປ່າເຂດຮ້ອນໃຫ້ແກ່ຫວຽດນາມ ໄດ້ແກ່ບັນດາປະເທດອາຊີທີ່ຍັງມີພື້ນທີ່ປ່າໄມ້ທຳມະຊາດ ບ່ອນສຸດທ້າຍທີ່ຍັງຫລົງເຫລືອຢູ່ ຄື ມຽນມ້າ, ມາເລເຊຍແລະລາວ. ເນື່ອງຈາກວ່າເປັນປະເທດບ້ານໃກ້ເຮືອນຄຽງກັນໂດຍກົງ ທັງເປັນປະເທດທີ່ມີສາຍພົວພັນພິເສດທາງດ້ານການເມືອງແລະເສດຖະກິດ ປັດຈຸບັນປະເທດລາວຈຶ່ງສະໜອງໄມ້ຈາກປ່າທຳມະຊາດເຂດຮ້ອນ ປ້ອນໃຫ້ແກ່ຂະແໜງເຟີນີເຈີຂອງຫວຽດນາມເປັນຈຳນວນຫລວງຫລາຍ.

ໃນປີ 2008 ຫວຽດນາມນຳເຂົ້າໄມ້ທ່ອນແລະໄມ້ທີ່ຊອຍແລ້ວຈາກປະເທດລາວເປັນມູນຄ່າ 130 ລ້ານໂດລາ ເພີ່ມຂຶ້ນຫລາຍເມື່ອທຽບໃສ່ການນຳເຂົ້າໃນປີ 2000 ຊຶ່ງມີ 36 ລ້ານໂດລາ. ໃນຈຳນວນການນຳເຂົ້າເຫລົ່ານີ້ ມີໄມ້ທ່ອນຄິດເປັນມູນຄ່າ 55 ລ້ານໂດລາ ຊຶ່ງເປັນສິ່ງຫວງຫ້າມໃນການສົ່ງອອກຈາກປະເທດລາວ ແຕ່ພັດກວມເອົາ 16 ເປີເຊັນຂອງໄມ້ທ່ອນທັງໝົດທີ່ນຳເຂົ້າມາໃນຫວຽດນາມ.[36] ໃນປີ 2008 ອົງການສືບສວນດ້ານສິ່ງແວດລ້ອມສາກົນປະເມີນວ່າຫວຽດນາມນຳເອົາໄມ້ທ່ອນຈາກລາວເຂົ້າມາໃນປະເທດ 500,000 ແມັດກ້ອນຕໍ່ປີ.[37]

## ຮັບປະກັນການສະໜອງໄມ້ໃຫ້

ຫວຽດນາມໄດ້ດຳເນີນນະໂຍບາຍກ່ຽວກັບປ່າໄມ້ແລະການຄ້າໄມ້ ເພື່ອຮັບມືກັບບັນຫາຄວາມບໍ່ແນ່ນອນຂອງການສະໜອງວັດຖຸດິບໃຫ້ແກ່ແຜນການຂະຫຍາຍຂະແໜງເຟີນີເຈີ ໂດຍໃຫ້ມີການຄວບຄຸມການຕັດໄມ້ຢູ່ພາຍໃນປະເທດຢ່າງເຂັ້ມງວດແລະເອົາຈິງເອົາຈັງແລະລົງທຶນໃສ່ການປູກປ່າ ແລະປູກໄມ້ອຸດສາຫະກຳຢ່າງຫລວງຫລາຍ.

ຍຸດທະສາດດ້ານການພັດທະນາປ່າໄມ້ຂອງຫວຽດນາມສຳລັບປີ 2006 ຫາ 2020 ຄືຂະຫຍາຍເນື້ອທີ່ປ່າຈັດສັນແລະປ່າສະຫງວນແບບຍືນຍົງໃຫ້ໄດ້ 16 ລ້ານເຮັກຕາ ໂດຍທີ່ 8.4 ລ້ານເຮັກຕາ ແມ່ນປ່າຜະລິດ ຊຶ່ງຈະເຮັດໃຫ້ປ່າໄມ້ເພີ່ມຂຶ້ນ ກວມເອົາ 47 ເປີເຊັນຂອງເນື້ອທີ່ປະເທດໃນປີ 2020. ຄາດຄະເນມູນຄ່າຂອງຜູ້ລົງທຶນ ຄືລັດຖະບານແລະຜູ້ໃຫ້ທຶນຈະຫລາຍກວ່າ 6.5 ຕື້ໂດລາ, ໂຄງການນີ້ແນໃສ່ຜະລິດໄມ້ທີ່ຊອຍແລ້ວປີລະຫົກລ້ານແມັດກ້ອນພາຍໃນປີ 2020.[38]

ເຖິງຈະມີແຜນການນີ້ກໍຕາມ ຂະແໜງໄມ້ຂອງປະເທດກໍຍັງກາງຕໍ່ໄມ້ນຳເຂົ້າຈາກຕ່າງປະເທດຢ່າງຫລວງຫລາຍຢູ່ຕໍ່ໄປ ໂດຍທີ່ລັດຖະບານຈະເກັບພາສີໄມ່ທ່ອນແລະໄມ້ຊອຍທີ່ນຳເຂົ້າມາສູນເປີເຊັນ ເມື່ອທຽບໃສ່ຜະລິດຕະພັນໄມ້ທີ່ສຳເລັດຮູບແລ້ວຈະເກັບພາສີສູງເຖິງ 28 ເປີເຊັນພຸ້ນ.

ຢູ່ໃນເຈ້ຍໃນສໍ ຫວຽດນາມມີກົດລະບຽບວ່າໃຫ້ນຳເອົາແຕ່ໄມ້ຈາກແຫລ່ງທີ່ຖືກຕ້ອງຕາມກົດໝາຍເທົ່ານັ້ນເຂົ້າມາໃນປະເທດ ແຕ່ທາງປະຕິບັດແລ້ວມີການເພີກເສີຍຕໍ່ກົດລະບຽບນີ້. ໃນປີ 2003 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ເຕືອນອຳນາດການປົກຄອງຫວຽດນາມ ເລື່ອງຄວາມບໍ່ຖືກຕ້ອງກ່ຽວກັບການຂົນສົ່ງໄມ້ທ່ອນເຂົ້າມາທ່າເຮືອໄຮ່ຟອງ. ສິນຄ້າໄມ້ນີ້ຖືກລັກລອບເອົາມາຈາກອິນໂດນີເຊຍ ຊຶ່ງເປັນການລະເມີດການຫ້າມສົ່ງໄມ້ທ່ອນອອກ ແຕ່ຫລັງຈາກການຍຶດເອົາໄວ້ໃນໄລຍະໜຶ່ງ ກໍມີການປ່ອຍສິນຄ້າໄມ້ເຫລົ່ານີ້ໃຫ້ແກ່ຜູ້ສັ່ງຊື້ນຳເຂົ້າມາ.

ເລື່ອງນີ້ຍັງສະທ້ອນໃຫ້ເຫັນຢູ່ໃນການຍື່ນຄຳຮ້ອງຂອງຫວຽດນາມ ເພື່ອຂໍທຶນຈາກທະນາຄານໂລກ ພາຍໃຕ້ນະໂຍບາຍລິເລີ່ມຊື່ວ່າ ການຫລຸດຜ່ອນການປ່ອຍອາຍແກັສເຮືອນແກ້ວຈາກການຕັດໄມ້ທຳລາຍປ່າແລະການເຮັດໃຫ້ປ່າເສື່ອມໂຊມ (REDD). ຄຳຮ້ອງນີ້ບອກວ່າ “ບໍ່ຈຳເປັນຕ້ອງມີສິ່ງພິສູດເຖິງແຫລ່ງທີ່ມາຂອງຊະນິດໄມ້ທີ່ນຳເຂົ້າມາ ເພາະມີແຕ່ໄມ້ທີ່ລະບຸໄວ້ຢູ່ໃນລາຍການ (CITIES). ເລື່ອງຈຶ່ງນຳໄປສູ່ບັນຫາທີ່ວ່າໄມ້ທີ່ນຳເຂົ້າມານັ້ນເປັນໄມ້ທີ່ຖືກກົດໝາຍ ເຖິງວ່າມັນຈະຖືກສົ່ງອອກຈາກບ່ອນໃດບ່ອນໜຶ່ງຢ່າງຜິດກົດໝາຍກໍຕາມ ໂດຍສະເພາະສົ່ງອອກຈາກລາວແລະກຳປູເຈຍ ຊຶ່ງເປັນບ່ອນທີ່ມີການເກືອດຫ້າມສົ່ງໄມ້ທ່ອນແລະໄມ້ຊອຍອອກນອກປະເທດ ”.[39]




ປ້າຍການປູກຢາງພາລາ ຊຶ່ງຫວຽດນາມເປັນເຈົ້າຂອງຢູ່ພາກໃຕ້ຂອງລາວ.

© EIA

### ສາຍພົວພັນບ້ານໃກ້ເຮືອນຄຽງ

ສາຍພົວພັນທາງດ້ານເສດຖະກິດແລະການເມືອງເກີດຂຶ້ນຕັ້ງແຕ່ອະດີດ ແຕ່ຄາວຫລັງກາງຊຸມປີ 1970 ຊຶ່ງເຮັດໃຫ້ລາວແລະຫວຽດນາມມີຂໍ້ຜູກມັດກັນ ໂດຍໄດ້ທຳຂໍ້ຕົກລົງພິເສດແລະບັນທຶກຄວາມເຂົ້າໃຈນຳກັນຫລາຍຢ່າງ. ສາຍພົວພັນອັນນີ້ເຮັດໃຫ້ຫວຽດນາມມີຂໍ້ໄດ້ປຽບທີ່ຈະຂຸດຄົ້ນຊັບພະຍາກອນທຳມະຊາດຈາກປະເທດເພື່ອນບ້ານຂອງຕົນ. ໃນປີ 2010 ຫວຽດນາມໄດ້ກາຍເປັນຜູ້ລົງທຶນຕ່າງປະເທດລາຍໃຫຍ່ທີ່ສຸດໃນປະເທດລາວ ກາຍໜ້າຈີນແລະໄທ ຊຶ່ງມີ 252 ໂຄງການເປັນມູນຄ່າ 2.7 ຕື້ໂດລາ.[40]

ຫວຽດນາມແລະລາວມີຈຸດປະສົງຈະເພີ່ມທະວີການຄ້າລະຫວ່າງສອງປະເທດຈາກ 1 ຕື້ໂດລາ ໃນປີ 2010 ຂຶ້ນເປັນ 5 ຕື້ໂດລາໃນປີ 2020 ຊຶ່ງຄາດວ່າຈະມີການຂະຫຍາຍຕົວຢ່າງໃຫຍ່ຫລວງ ຈາກການສົ່ງອອກແຮ່ທາດ, ໄມ້ແລະພະລັງງານຈາກປະເທດລາວ.[41]

ຫວຽດນາມວາງແຜນຈະລົງທຶນໃສ່ໂຄງການພະລັງງານນ້ຳຢູ່ໃນລາວ 31 ແຫ່ງໃນປີ 2020 ແລະໄດ້ລົງມືກໍ່ສ້າງຫລາຍບ່ອນໄປແລ້ວ ເຊັ່ນເຂື່ອນເຊກະໝານຢູ່ພາກໃຕ້ຂອງລາວ.[42] ການເພີ່ມທະວີໃສ່ການລົງທຶນໃນໂຄງການພະລັງງານນ້ຳຢູ່ໃນລາວນີ້ເປັນເລື່ອງໜ້າຢາກຫົວ ເນື່ອງຈາກວ່າເມື່ອບໍ່ດົນມານີ້ ຫວຽດນາມເອງໄດ້ປະກາດມາດຕະການຄວບຄຸມການຕັດໄມ້ຊຶ່ງເກີດຈາກການສ້າງເຂື່ອນຢູ່ໃນດິນແດນຂອງຕົນເອງ ເນື່ອງຈາກວ່າກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມຂອງຫວຽດນາມອ້າງວ່າໄພນ້ຳຖ້ວມເກີດຂຶ້ນຍ້ອນພວກສ້າງໂຮງງານພະລັງງານນ້ຳພາກັນຕັດໄມ້ຢູ່ປ່າເທິງຫົວນ້ຳ.[43]



# ອິງໃນການຄ້າໄມ້ເຖື່ອນຂ້າມຊາຍແດນ

ລົດບັນທຸກໄມ້ຈາກລາວ, ຢູ່ປະເລກັນ ໃນຫວຽດນາມ ປີ 2010. ເຄື່ອງໝາຍບອກວ່າແຫລ່ງທີ່ມາຂອງໄມ້ແມ່ນເຂດເຊກະໝານ 1.

© EIA

ໃນປີ 2010 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພິມເຜີຍແຜ່ລາຍງານສະບັບໜຶ່ງ ເວົ້າເຖິງອຸດສາຫະກຳເຟີນິເຈີຫວຽດນາມນຳໃຊ້ໄມ້ທ່ອນຈາກປະເທດລາວຢ່າງແຜ່ຫລາຍ ໂດຍສະເພາະແມ່ນຊະນິດພັນໄມ້ (yellow balau) ແລະ (keruing). ເພື່ອໂຕ້ຕອບການພົບເຫັນຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນ ສະມາຄົມອຸດສາຫະກຳໄມ້ຂອງຫວຽດນາມອ້າງວ່າຂະແໜງນີ້ບໍ່ໄດ້ນຳໃຊ້ໄມ້ທີ່ລັກລອບເອົາມາຈາກປະເທດລາວ ໂດຍອະທິບາຍວ່າຫລັກຖານອ້າງອີງ ຊຶ່ງແມ່ນຮູບລົດບັນທຸກໄມ້ທ່ອນຂ້າມຊາຍແດນນັ້ນ ແມ່ນໄມ້ເພື່ອການສົ່ງອອກຫລືບໍ່ກໍແມ່ນໄມ້ທີ່ມາຈາກສວນປູກໄມ້ອຸດສາຫະກຳຢູ່ໃນລາວ. ຄຳກ່າວອ້າງເຫລົ່ານີ້ບໍ່ແມ່ນຄວາມຈິງເລີຍ ເພາະວ່າອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ສັງເກດເຫັນໂຮງງານເຟີນິເຈີຢູ່ໃນຫວຽດນາມໄດ້ປຸງແຕ່ງໄມ້ທ່ອນຂອງລາວເປັນຈຳນວນຫລວງຫລາຍຢ່າງແທ້ຈິງ. ບໍ່ມີຄວາມຄິດເຫັນໃດທີ່ອຸດສາຫະກຳກ່າວອ້າງມານັ້ນຈະສາມາດມາຫັກລ້າງສະພາບການເກືອດຫ້າມໃນການສົ່ງໄມ້ທ່ອນອອກຢູ່ໃນລາວໄດ້. ໃນການພົບປະກັບລັດຖະບານ ຫລັງຈາກທີ່ມີການເຜີຍແຜ່ສິ່ງທີ່ພົບເຫັນ ຜູ້ຕາງໜ້າອຸດສາຫະກຳໄມ້ໄດ້ອອກມາປົກປ້ອງການນຳໃຊ້ໄມ້ທີ່ສົ່ງອອກຈາກປະເທດລາວຢ່າງຜິດກົດໝາຍ ໂດຍເວົ້າວ່າ ຖ້າໂຮງງານຫວຽດນາມບໍ່ຊື້ໄມ້ເຫລົ່ານີ້ ໂຮງງານອື່ນໆຢູ່ໃນຈີນກໍຈະຊື້.

ໃນປີ 2010 ຜູ້ສັງເກດການຈາກອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ກັບຄືນໄປປະເທດຫວຽດນາມແລະປະເທດລາວ ເພື່ອບັນທຶກເປັນເອກະສານກ່ຽວກັບການແລກປ່ຽນແລະການເຄື່ອນໄຫວດ້ານການຄ້າໄມ້ລະຫວ່າງສອງປະເທດ. ລະຫວ່າງເດືອນຕຸລາປີ 2010 ແລະເດືອນພຶດສະພາປີ 2011 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ເດີນທາງໄປພາກສະໜາມສາມເທື່ອ ຈຸດສຳຄັນຢູ່ໃນລາວ ຄື ອັດຕະປື ແຂວງພາກໃຕ້ຂອງປະເທດລາວ ແຂວງເຊກອງ ແລະຄຳມ່ວນເຊັ່ນດຽວກັນ. ຢູ່ທີ່ຫວຽດນາມອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ເດີນທາງໄປນະຄອນໂຮ່ຈິມິນ, ກີຍົ່ງ, ປະເລກູ່, ປະເລກັນ, ດານັ້ງ, ວິ່ງ, ຮ່າໂນ້ຍແລະໄຮ່ຟອງ.

ການໄປສັງເກດການເທື່ອລ່າສຸດນີ້ ເປີດເຜີຍການຄ້າໄມ້ທ່ອນຢ່າງຂະໜານໃຫຍ່ຈາກປະເທດລາວໄປຫວຽດນາມທີ່ພວມດຳເນີນຢູ່ແມ່ນການຝ່າຝືນການເກືອດຫ້າມ ໃນການສົ່ງໄມ້ທ່ອນອອກຂອງປະເທດລາວ. ພຽງມື້ດຽວໃນເດືອນຕຸລາ ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ເຫັນລົດບັນທຸກໄມ້ທ່ອນ 34 ຄັນໃນແຂວງອັດຕະປື ເດີນທາງມຸ່ງໜ້າໄປຂ້າມດ່ານຊາຍແດນໂບວາຍ.

ໃນຂະນະທີ່ຜ່ານມາອົງການສືບສວນດ້ານສິ່ງແວດລ້ອມສາກົນມຸ່ງຈຸດສົນໃຈໃສ່ການນຳໃຊ້ໄມ້ເຖື່ອນຈາກລາວໂດຍໂຮງງານຫວຽດນາມນັ້ນ ເປົ້າໝາຍຂອງການສອບສວນແມ່ນການດຳເນີນການຕັດໄມ້ຕົວຈິງພາຍໃນດິນແດນຂອງລາວ. ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພົບປະສາມບໍລິສັດທີ່ບອກວ່າພວກຕົນໄດ້ສົ່ງໄມ້ທ່ອນອອກຈາກລາວໄປໃຫ້ຫວຽດນາມທັງໝົດ 250,000 ແມັດກ້ອນຕໍ່ປີ. ບໍລິສັດທີ່ກອງທັບຫວຽດນາມເປັນເຈົ້າຂອງ ເປັນຜູ້ດຳເນີນການຕັດໄມ້ລາຍໃຫຍ່ທີ່ສຸດ.

ອົງການສືບສວນດ້ານສິ່ງແວດລ້ອມສາກົນຍັງພົບວ່າ ແຂວງທາງພາກໃຕ້ຄືອັດຕະປື ກຳລັງຮັບພາລະແບກຫາບກິດຈະການຕັດໄມ້ຢູ່ໃນລາວປັດຈຸບັນ. ການຕັດໄມ້ສ່ວນໃຫຍ່ກ່ຽວພັນກັບການສ້າງໂຮງໄຟຟ້າພະລັງງານນ້ຳ ແລະການແຜ່ຂະຫຍາຍຂອງການປູກໄມ້ອຸດສາຫະກຳ. ຢູ່ພາຍໃນອັດຕະປື ມີການຖາກຖາງປ່າໄມ້ເປັນບໍລິເວນກວ້າງຢູ່ອ້ອມແອ້ມເຂດສ້າງເຂື່ອນເຊກະໝານ 1 ຊຶ່ງບໍລິສັດຫວຽດນາມເປັນເຈົ້າຂອງ ແລະມີການຖາງປ່າຫລາຍພັນເຮັກຕາເພື່ອເຮັດເປັນບ່ອນປູກຢາງພາລາທີ່ກວ້າງໃຫຍ່ແລະກໍແມ່ນບໍລິສັດຫວຽດນາມທີ່ເປັນເຈົ້າຂອງ.



ໄມ້ທ່ອນຂອງລາວ ຊຶ່ງບໍລິສັດຂອງກອງທັບຫວຽດນາມເປັນເຈົ້າຂອງ ຢູ່ທ່າເຮືອກີຍົ່ງໃນຫວຽດນາມ ປີ 2000.

© EIA

ຈາກການສັງເກດການຢູ່ພາກສະໜາມແລະພົບປະຢ່າງບໍ່ເປີດເຜີຍກັບຕົວລະຄອນສໍາຄັນອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ຮັບຮູ້ສະພາບການທໍາລາຍປ່າໄມ້ ຊຶ່ງພວມແຜ່ລະບາດຢ່າງຂະໜານໃຫຍ່ຢູ່ໃນພາກໃຕ້ຂອງປະເທດລາວ ຊຶ່ງທາງດ້ານຄວາມເປັນຈິງແລ້ວບໍ່ມີການຄວບຄຸມຈາກທາງການເລີຍ ບໍ່ມີການຢໍາເກງການເກືອດຫ້າມກ່ຽວກັບການສົ່ງໄມ້ທ່ອນອອກຈາກປະເທດລາວແຕ່ຢ່າງໃດເລີຍທັງມີກອງທັບຈາກສູນກາງແລະກຸ່ມທຸລະກິດທີ່ມີເສັ້ນສາຍເປັນຢ່າງດີເຂົ້າມາກ່ຽວຂ້ອງນໍາການຄ້າໄມ້ເຖື່ອນທີ່ມີຜົນກໍາໄລມະຫາສານນີ້.

# ການດໍາເນີນການຕັດໄມ້ຢູ່ໃນປະເທດລາວ

## ບໍລິສັດຂອງຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (CO-ECCO): ການມີສ່ວນກ່ຽວຂ້ອງຂອງກອງທັບ

ທໍາອິດອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພົບບໍລິສັດຂອງຫວຽດນາມ ເພື່ອການຮ່ວມມືທາງດ້ານເສດຖະກິດໃນເດືອນຕຸລາ ປີ 2010 ຂະນະທີ່ໄປຢ້ຽມຢາມທ່າເຮືອກີຍົ່ງ. ເມືອງກີຍົ່ງ ຢູ່ໃນແຂວງບິງດິງ ຊຶ່ງແມ່ນສູນກາງໃຫຍ່ສໍາລັບການປຸງແຕ່ງໄມ້ແລະການຄ້າໄມ້ຢູ່ໃນຫວຽດນາມ. ພາຍຫລັງທີ່ເຂົ້າໄປເຖິງທ່າເຮືອນີ້ ອົງການສືບສວນດ້ານສິ່ງແວດລ້ອມສາກົນກໍໄດ້ເຮັດບັນທຶກເປັນເອກະສານກ່ຽວກັບກອງໄມ້ທ່ອນຂະໜາດມະຫຶມາ ມີເຄື່ອງໝາຍສີຂຽວແລະປ້າຍສີເຫລືອງ ພິມຊື່ພາສາຫວຽດນາມວ່າ "CTY HOP TAC KINH TE.BOP" ຊຶ່ງແປວ່າ ບໍລິສັດເພື່ອການຮ່ວມມືດ້ານເສດຖະກິດ - ກະຊວງປ້ອງກັນຊາດ (ຫລື COECCO). ກໍາມະກອນຄົນໜຶ່ງເວົ້າວ່າໄມ້ທ່ອນ 95 ເປີເຊັນແມ່ນມາຈາກປະເທດລາວແລະຍັງເວົ້າເສີມອີກວ່າ ໄມ້ສ່ວນໃຫຍ່ເປັນຂອງກອງທັບຫວຽດນາມ ໂດຍສະເພາະແມ່ນກອງທັບພາກທີ 4.

ເພື່ອໃຫ້ເຂົ້າໃຈວ່າໄມ້ທ່ອນເຫລົ່ານີ້ມາຈາກບ່ອນໃດຢູ່ໃນລາວ ແລະເຈາະເລິກເຂົ້າໄປຫາຄວາມມີສ່ວນກ່ຽວຂ້ອງຂອງກອງທັບນັ້ນ ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ຕິດຕາມເສັ້ນທາງທິດຕາເວັນຕົກມຸ່ງສູ່ຊາຍແດນລາວແລະຈົດບັນທຶກໄມ້ທ່ອນທີ່ມີເຄື່ອງໝາຍບອກໄວ້ ຊຶ່ງມີຄົນຂົນໃສ່ລົດບັນທຸກຢູ່ເມືອງດ່ານຊາຍແດນ ຄື ປະເລກູ່ແລະປະເລກັນ.

ຕໍ່ຈາກນັ້ນອົງການສືບສວນດ້ານສິ່ງແວດລ້ອມສາກົນກໍໄດ້ຂ້າມຊາຍແດນໂບອາຍ (Bo Y) ເຂົ້າມາໃນແຂວງອັດຕະປືຂອງລາວ. ຢູ່ໃນເຂດລະຫວ່າງດ່ານກວດກາຊາຍແດນຢ່າງເປັນທາງການສອງດ່ານນີ້ ສັງເກດເຫັນສະໜາມບ່ອນມ້ຽນໄມ້ທ່ອນກອງມະຫຶມາ. ຫລັງຈາກນັ້ນກໍເດີນທາງຕໍ່ໄປຮອດບ້ານເຜົ່າສໍາພັນ ຊຶ່ງຕິດກັບທາງຫລວງໃຫຍ່ຜ່ານອັດຕະປືໄປຫາບ່ອນຂ້າມຊາຍແດນໂບອາຍ (Bo Y). ຢູ່ຫລັງບ້ານນີ້ເອງແມ່ນບ່ອນໂລ່ງທີ່ກວ້າງໃຫຍ່ ຊຶ່ງເປັນບ່ອນມ້ຽນໄມ້ທ່ອນໄວ້. ເຖິງວ່າຈະເຫັນໄມ້ທ່ອນພຽງບໍ່ເທົ່າໃດຕົ້ນກໍຕາມ ພວກຊາວບ້ານບອກວ່າໃນເດືອນຜ່ານມາມີໄມ້ທ່ອນຈໍານວນຫລວງຫລາຍ ແຕ່ດຽວນີ້ຖືກຂົນສົ່ງອອກໄປຫວຽດນາມແລ້ວ ຜ່ານທາງດ່ານໂບອາຍ (Bo Y). ສະໜາມໄມ້ເປົ່າວ່າງ ເພາະວ່າລະດູການຕັດໄມ້ ຊຶ່ງດໍາເນີນແຕ່ເດືອນຕຸລາຫາເດືອນພຶດສະພານັ້ນໄດ້ຊັກຊ້າໄປ ຍ້ອນລະດູຝົນມາຊ້າ.

ຫລັງຈາກເດີນທາງສໍາຫລວດອ້ອມແອ້ມບໍລິເວນນີ້ ອົງການສືບສວນດ້ານສິ່ງແວດລ້ອມສາກົນ ສາມາດຢືນຢັນໄດ້ວ່າ ໄມ້ທ່ອນສ່ວນໃຫຍ່ທີ່ຜ່ານສະໜາມໄມ້ຢູ່ບ້ານເຜົ່າສໍາພັນນັ້ນ ລ້ວນແລ້ວແຕ່ເອົາມາຈາກການດໍາເນີນການຕັດໄມ້ທີ່ກ່ຽວຂ້ອງກັບການສ້າງເຂື່ອນພະລັງງານນໍ້າເຊກະໝານ 1 ທີ່ຢູ່ໃກ້ຄຽງ. ສິ່ງນີ້ກົງກັບເຄື່ອງໝາຍທີ່ອົງການສືບສວນດ້ານສິ່ງແວດລ້ອມສາກົນ ໄດ້ສັງເກດເຫັນຢູ່ເທິງລົດບັນທຸກທີ່ຂຽນວ່າ "ໄມ້ແປຮູບເພື່ອການຄຸ້ມຄອງການຕັດໄມ້



ສະໜາມເກັບມ້ຽນໄມ້ທ່ອນຂອງບໍລິສັດ COECCO ຢູ່ອັດຕະປື ຂອງລາວ ປີ 2011

© EIA




ປ້າຍສີເຫລືອງແລະເຄື່ອງໝາຍສີຂຽວຢູ່ໄມ້ທ່ອນ ບອກວ່າແມ່ນຂອງບໍລິສັດ COECCO

© EIA

ແລະການເອົາໄມ້ອອກຈາກເຂດອ່າງນ້ຳເຊກະໝານ" ຢັ້ງຢືນວ່າເຂດສ້າງເຂື່ອນແມ່ນແຫລ່ງທີ່ມາຂອງໄມ້ທ່ອນເຫລົ່ານີ້. ຢູ່ໃນເດືອນພະຈິກປີ 2010 ກໍເຊັ່ນດຽວກັນ ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພົບເຫັນການໂຄສະນາໃນເດືອນມິຖຸນາຂອງບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ທີ່ປະກາດຂາຍໄມ້ທ່ອນທີ່ໄດ້ມາຈາກເຊກະໝານ 1. ການໂຄສະນາອື່ນໆຂອງບໍລິສັດກໍແມ່ນອ້າງວ່າຕົນເອງມີໄມ້ທ່ອນຈາກລາວ 200,000 ແມັດກ້ອນຕໍ່ປີ.

ໃນເດືອນກຸມພາ ປີ 2011 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ກັບຄືນໄປເຂດເຊກະໝານ 1 ເພື່ອໃຫ້ແນ່ໃຈວ່າບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ເລີ່ມດຳເນີນການຕັດໄມ້ຄືນໃໝ່ອີກບໍ່. ເຂດກໍ່ສ້າງເຂື່ອນງຽບສະຫງັດ ເພາະວ່າພວກກຳມະກອນຫວຽດນາມພາກັນກັບຄືນໄປບ້ານ ເພື່ອສະຫລອງປີໃໝ່ຕາມປະຕິທິນດວງຈັນ. ແຕ່ວ່າທີ່ສະໜາມໄມ້ທ່ອນຢູ່ບ້ານເຜົ່າສຳພັນ ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ຈົດບັນທຶກໄມ້ທ່ອນຫລາຍຮ້ອຍລຳທີ່ຫາກໍຕັດມາໃໝ່ໆ ມີເຄື່ອງໝາຍສີຂຽວແລະປ້າຍສີເຫລືອງຕິດໄວ້ ບອກວ່າແມ່ນຂອງບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO).

ການທີ່ກອງທັບມີສ່ວນກ່ຽວຂ້ອງກັບການດຳເນີນການຕັດໄມ້ຢູ່ອ້ອມແອ້ມເຊກະໝານ 1 ນັ້ນໄດ້ຮັບການຢືນຢັນ ເມື່ອຜູ້ສັງເກດການຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພະຍາຍາມຕິດຕາມລົດບັນທຸກໄມ້ທ່ອນຄັນໜຶ່ງຊຶ່ງອາດຈະເຂົ້າໄປເຖິງບ່ອນຕັດໄມ້ໄດ້. ພາຍຫລັງຕິດຕາມລົດຄັນດັ່ງກ່າວໄປຕາມເສັ້ນທາງດິນແດງ ກໍໄປພົບດ່ານທີ່ມີເຈົ້າໜ້າທີ່ທະຫານນອກເຄື່ອງແບບກວດກາຢູ່ ແຕ່ພະນັກງານຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນບໍ່ໄດ້ຮັບອະນຸຍາດໃຫ້ເດີນທາງຕໍ່ໄປໄດ້. ປະກົດວ່າເຂດຕັດໄມ້ນັ້ນຢູ່ໃນເຂດປ່າສະຫງວນດົງສຳພັນນັ້ນເອງ ຊຶ່ງຢູ່ໃກ້ກັບອ່າງເກັບນ້ຳເຊກະໝານ 1 ທີ່ໄດ້ວາງແຜນໄວ້.

ໃນເດືອນເມສາ ປີ 2011 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ໄປຢ້ຽມຢາມເຊກະໝານ 1 ເປັນເທື່ອທີສາມ. ເທື່ອນີ້ທຸກຄົນພາກັນຕົກຕະລຶງທີ່ເຫັນສະໜາມໄມ້ມີໄມ້ທ່ອນທັງໝົດ 60,000 ແມັດກ້ອນ. ໄມ້ທ່ອນຫລາຍລຳມີເຄື່ອງໝາຍສີຂຽວແລະປ້າຍສີເຫລືອງຕິດໄວ້ບອກວ່າ ແມ່ນຂອງບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO).

ເພື່ອຊອກຫາລາຍລະອຽດເພີ່ມເຕີມກ່ຽວກັບການດຳເນີນການຕັດໄມ້ແລະຕະຫລາດປາຍທາງຂອງບໍລິສັດນີ້ ພະນັກງານຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ອຳພາງຕົນເອງແຝງຕົວເປັນຜູ້ຊື້ໄມ້ແລ້ວເດີນທາງໄປຫ້ອງການໃຫຍ່ຂອງບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ຢູ່ນະຄອນວິ່ງ ແຂວງເງອານໃນຫວຽດນາມ ໃນເດືອນພຶດສະພາ ປີ 2011 ເພື່ອພົບປະກັບຜູ້ຕາງໜ້າຂະແໜງການຄ້າໄມ້.

ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພົບປະກັບທ່ານ ຖຸ່ຍ (Mr Thuy) ຜູ້ອຳນວຍການຂະແໜງການຄ້າໄມ້ຂອງບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ແລະຫງວຽນ ຈັ່ງ (Nguyen Trang) ຫົວໜ້າຂະແໜງສົ່ງອອກ. ອີງຕາມທ່ານ ຖຸ່ຍ ບອກໃຫ້ຮູ້ວ່າ ບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ໄດ້ທຳການຄ້າໄມ້ແລະເຮັດທຸລະກິດຕັດໄມ້ຢູ່ໃນປະເທດລາວມາໄດ້ຫລາຍກວ່າ 20 ປີແລ້ວ ຊຶ່ງເປັນບໍລິສັດໜຶ່ງທີ່ດຳເນີນການຕັດໄມ້ທີ່ເກົ່າແກ່ທີ່ສຸດແລະເປັນລາຍໃຫຍ່ທີ່ສຸດຢູ່ໃນປະເທດລາວ. ທ່ານ ຖຸ່ຍຢືນຢັນວ່າແຫລ່ງທີ່ມາໄມ້ທ່ອນທັງໝົດຂອງບໍລິສັດແມ່ນມາຈາກປະເທດລາວ. ທ່ານ ຖຸ່ຍຍອມຮັບວ່າໄມ້ທ່ອນທັງໝົດຂອງພວກເຂົາເຈົ້າມາຈາກບ່ອນຖາງເພື່ອສ້າງເຂື່ອນ ແລະການທີ່ບໍລິສັດນີ້ໄດ້ຮັບອະນຸຍາດໃຫ້ເອົາໄມ້ທ່ອນອອກຈາກພື້ນທີ່ເຫລົ່ານີ້ ຖືວ່າເປັນຈຳນວນພຽງໜ້ອຍດຽວເທົ່ານັ້ນ ເພາະມີຫລາຍບໍລິສັດທີ່ເຮັດແນວນີ້.

ທ່ານ ຖຸ່ຍອະທິບາຍວ່າ ເພື່ອດຳເນີນການຕັດໄມ້ຢູ່ໃນລາວໄດ້ນັ້ນ ຕ້ອງຂໍອະນຸມັດໂກຕ້າຈາກລັດຖະບານກ່ອນ. ລາວເວົ້າວ່າປົກກະຕິຈະເຮັດປີລະເທື່ອ ຫລືບາງທີຫົກເດືອນເທື່ອໜຶ່ງ ແຕ່ບໍ່ເຄີຍດົນນານກວ່ານັ້ນ ເພາະວ່າລັດຖະບານບໍ່ຢາກໃຫ້ມີການສຳປະທານຕັດໄມ້ດົນນານກວ່ານັ້ນ.

ອີງຕາມທ່ານຖຸ່ຍບອກວ່າ ໃນປີ 2010 ບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ໄດ້ຮັບສິດໃນການຕັດໄມ້ 100,000 ແມັດກ້ອນແລະໃນປີ 2011 ກໍເຊັ່ນດຽວກັນ ຄືຕັດໄມ້ຢູ່ທັງໃນເຂດສ້າງເຂື່ອນເຊກະໝານ 1 ແລະແຫລ່ງອື່ນໆທີ່ບໍ່ມີການລະບຸຊື່. ທ່ານ ຖຸ່ຍຍັງເວົ້າເສີມອີກວ່າ ລັດຖະບານຈາກສູນກາງຢູ່ວຽງຈັນເປັນຜູ້ອະນຸມັດໂກຕ້າເຫລົ່ານີ້ໃຫ້ໂດຍກົງ ບໍ່ແມ່ນຫ້ອງການປ່າໄມ້ແຂວງ.

ການພົບປະຄັ້ງນີ້ເປີດເຜີຍໃຫ້ຮູ້ວ່າ ບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ຈັດການທຸກດ້ານໃນການດຳເນີນການຕັດໄມ້ຂອງຕົນຢູ່ໃນປະເທດລາວ ໂດຍໃຊ້ກຳມະກອນຂອງຕົນເອງ. ພະນັກງານບໍລິສັດທຳການສຳຫລວດປ່າໄມ້ ເພື່ອກຳນົດຊະນິດຕົ້ນໄມ້ທີ່ຕົນເອງຕ້ອງການ. ເມື່ອເຈົ້າໜ້າທີ່ລາວເຊັນລາຍການທີ່ມີຊື່ຕົ້ນໄມ້ທີ່ຈະຕັດໃຫ້ແລ້ວ ບໍລິສັດກໍຈະເອົາທີມຕັດຕົ້ນໄມ້, ລົດບັນທຸກແລະຄົນຂັບລົດຂອງຕົນເຂົ້າມາ ເພື່ອຕັດເອົາໄມ້ອອກໄປຫວຽດນາມ.

ໄມ້ທ່ອນໃຫຍ່ຫລາຍທ່ອນຈະຖືກຂົນສົ່ງໄປທ່າເຮືອກືຍົ່ງແລະຕຽມຊ່າຢູ່ດານັ່ງໂດຍກົງເລີຍ ເພາະວ່າທ່າກືຍົ່ງແມ່ນອຸດສາຫະກຳປຸງແຕ່ງເຟີນີເຈີຂະໜາດໃຫຍ່ຂອງບໍລິສັດ ສະໜອງຄວາມຕ້ອງການຂະໜາດໃຫຍ່ຂອງຕະຫລາດປາຍທາງໄດ້ ສ່ວນວ່າທ່າເຮືອຕຽນຊ່ານັ້ນສ່ວນຫລາຍກໍຍ້ອນຄວາມສະດວກດ້ານການຈັດການແລະເສັ້ນທາງລຳລຽງຂົນສົ່ງ.

ນາງ ຈັ່ງ ບອກວ່າໃນປີ 2010 ບໍລິສັດໄດ້ຂາຍໄມ້ທ່ອນຂອງຕົນທັງໝົດໃຫ້ແກ່ພວກທີ່ປຸງແຕ່ງໄມ້ຄົນຫວຽດນາມ ແຕ່ຫວັງວ່າຢ່າງໜ້ອຍກໍມີໄມ້ໄວ້ເຄິ່ງໜຶ່ງຂອງ 100,000 ແມັດກ້ອນ ເພື່ອດຶງດູດຜູ້ຊື້ຄົນຕ່າງປະເທດໃນປີ 2011. ນາງສະເໜີຂາຍໄມ້ (keruing) ໃຫ້ພະນັກງານອົງການສືບສວນດ້ານສິ່ງແວດລ້ອມສາກົນຈຳນວນ 15,000 ແມັດກ້ອນ ຊຶ່ງນາງບອກວ່າຈະມີການຂົນສົ່ງຈາກປະເທດລາວມາດານັ່ງຫລືກືຍົ່ງພາຍໃນສອງສາມອາທິດຂ້າງໜ້າ.

ນາງຈັ່ງຍັງເປີດເຜີຍໃຫ້ຮູ້ອີກວ່າບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ມີໂຮງງານປຸງແຕ່ງໄມ້ບ່ອນໜຶ່ງຢູ່ບ້ານເລົາງາມ ທີ່ປະເທດລາວ ແຕ່ເປັນພຽງບ່ອນຊອຍໄມ້ທ່ອນໃຫ້ເປັນຫລ່ຽມເທົ່ານັ້ນ ບໍ່ແມ່ນເຮັດເປັນຜະລິດຕະພັນໄມ້ສຳເລັດຮູບຫລືເຄິ່ງສຳເລັດຮູບເລີຍ. ປາຍທາງສຸດທ້າຍຂອງໄມ້ທ່ອນເຫລົ່ານີ້ກໍຍັງແມ່ນຕະຫລາດຢູ່ໃນຫວຽດນາມນັ້ນເອງ. ໃນເດືອນເມສາ ປີ 2011 ອົງການສືບສວນດ້ານສິ່ງແວດລ້ອມສາກົນ/ເຕເລປັກ (Telepark) ໄດ້ໄປຢ້ຽມຢາມໂຮງງານຂອງບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ຢູ່ບ້ານເລົາງາມແລະໄດ້ສັງເກດເຫັນລົດບັນທຸກສີ່ຄັນທີ່ຂົນຕົ້ນໄມ້ທີ່ຫາກໍຕັດໃໝ່ໆ ຍັງມີຮາກແລະເປືອກໄມ້ຕິດຢູ່ ຈອດຢູ່ທາງເຂົ້າໂຮງງານ ເຖິງວ່າໂຮງງານນີ້ຈະເກົ່າແລະມີສະພາບຊຸດໂຊມກໍຕາມ.

ບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ເປັນໜ່ວຍທຸລະກິດຂອງຜູ້ບັນຊາການກອງທັບຫວຽດນາມພາກທີ 4 ຊຶ່ງຫ້ອງການໃຫຍ່ຂອງທັງສອງອົງການນີ້ຕັ້ງຢູ່ນະຄອນວິ່ງ ແລະໄດ້ຜົນປະໂຫຍດຈາກການພົວພັນຢ່າງໃກ້ຊິດກັບກອງທັບລາວ. ໃນປີ 2010 ກະຊວງປ້ອງກັນປະເທດຂອງລາວໄດ້ມອບຫລຽນໄຊແຮງງານຊັ້ນໜຶ່ງໃຫ້ແກ່ຜູ້ບັນຊາການສູງສຸດຂອງກອງທັບພາກທີ 4 ແລະບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) "ໃນການປະກອບສ່ວນເຂົ້າໃນການສົ່ງເສີມມິດຕະພາບ, ຄວາມສາມັກຄີແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ, ສອງກອງທັບ, ປະຊາຊົນລາວແລະຫວຽດນາມ".[44] ການສົມຮູ້ຮ່ວມຄິດກັນແບບນີ້ຊ່ວຍອະທິບາຍໄດ້ວ່າ ບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ແມ່ນຜູ້ທີ່ດຳເນີນການຕັດໄມ້ລາຍໃຫຍ່ທີ່ສຸດຢູ່ໃນປະເທດ ແລະບໍລິສັດນີ້ມີຂີດຄວາມສາມາດທີ່ຈະບໍ່ສົນໃຈນຳການເກືອດຫ້າມໃນການສົ່ງໄມ້ທ່ອນອອກຂອງປະເທດນີ້ເລີຍ.



ໄມ້ທ່ອນຫາກໍຕັດມາໃໝ່ໆມາເຖິງສະໜາມໄມ້ທ່ອນຂອງບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ຢູ່ອັດຕະປືຂອງລາວ ປີ 2011.

© EIA




ປ້າຍຂອງບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ຢູ່ນອກໂຮງງານທີ່ວິ່ງ ຢູ່ຫວຽດນາມ "OK4" ໝາຍເຖິງກອງທັບພາກທີ 4.

© EIA

## ພອນສັກ: ເງິນສົດສຳລັບໄມ້ທ່ອນ

ໃນເດືອນກຸມພາ ປີ 2011 ຜູ້ສັງເກດການຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ເດີນທາງໄປແຂວງເຊກອງ ຊຶ່ງຢູ່ທາງເໜືອຂອງອັດຕະປື ເພື່ອບັນທຶກການຕັດໄມ້ທີ່ກ່ຽວຂ້ອງກັບການສ້າງເຂື່ອນພະລັງງານໄຟຟ້າເຊກອງ 4. ພື້ນທີ່ອ້ອມແອ້ມສະຖານທີ່ສ້າງເຂື່ອນມີປ່າສະຫງວນຫ້ວຍອາຊຳ ກໍຄືບ່ອນສຳປະທານຕັດໄມ້ຄັ້ງຜ່ານມາ. ມີສິ່ງຢືນຢັນວ່າ ໄດ້ພົບເຫັນການຕັດໄມ້ຢ່າງເລັ່ງລັດ ມີບ່ອນໂລ່ງທີ່ກວ້າງຂວາງເພື່ອເກັບມ້ຽນໄມ້ທ່ອນໄວ້ ມີເສັ້ນທາງເຂົ້າໄປຕັດໄມ້ທ່ອນໃນພື້ນທີ່ແຫ່ງນີ້ ແລະມີຫັດສະນີຍະພາບທີ່ເປັນປ່າປອກໂຫລ້ນ.

ບໍລິສັດລູກຂອງກຸ່ມພອນສັກ, ພອນສັກໄມ້ (ຫລືເປັນທີ່ຮູ້ຈັກກັນດີວ່າແບນຊີ) ແມ່ນຊື່ນ້ອຍຂອງບໍລິສັດ ເປັນຂອງພອນສັກ ວິໄລສັກ ຊຶ່ງແມ່ນໜຶ່ງໃນຈຳນວນຜູ້ຊາຍທີ່ຮັ່ງທີ່ສຸດຢູ່ໃນປະເທດລາວ. ຜູ້ສັງເກດການຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພົບບໍລິສັດນີ້ໂດຍບັງເອີນໃນປີ 2007 ເວລາຕິດຕາມບໍລິສັດໜຶ່ງຂອງໄທ ຊື່ວ່າ ແອລວີທີສາກົນ (LVT International) ຊຶ່ງໄດ້ແຫລ່ງໄມ້ມາຈາກພອນສັກ. ປຣາກິດ ສຣິບຸຊຊະຣາຄຳ (Prakit Sribussaracum) ເຈົ້າຂອງບໍລິສັດແອລວີທີອ້າງວ່າຕົນເອງໄດ້ຈ່າຍເງິນໃຕ້ໂຕະເປັນຈຳນວນມະຫາສານໃຫ້ເຈົ້າໜ້າທີ່ລາວ ເພື່ອໃຫ້ໄດ້ໂກຕ້າໃນການຕັດໄມ້ອອກຈາກເຂດສ້າງເຂື່ອນພະລັງງານນ້ຳເທີນ 2.[45]

ການອ້າງວ່າພອນສັກມີສ່ວນໃນການລັກລອບເອົາໄມ້ທ່ອນໄປຫວຽດນາມ ເປັນສິ່ງແປກປະຫລາດ ເພາະວ່າຢູ່ໃນເວບໄຊດ໌ຂອງບໍລິສັດພັດເນັ້ນຢ້ຳວ່າຕົນເອງປະຕິບັດຕາມກົດໝາຍລາວ. ເວບໄຊດ໌ຂອງພອນສັກໄມ້ບອກວ່າຕົນເອງດຳເນີນງານແນວໃດ: “ປະຕິບັດຕາມກົດລະບຽບຂອງລັດຖະບານໃນການສົ່ງໄມ້ອອກດ້ວຍການປຸ່ງນໄມ້ທ່ອນ (ວັດຖຸດິບ) ໃຫ້ເປັນຜະລິດຕະພັນເກືອບສຳເລັດຮູບ ເພື່ອເພີ່ມທະວີຜົນກຳໄລແລະເຂັ້ມງວດການສົ່ງໄມ້ອອກເພື່ອຈຸດປະສົງໃນການອະນຸລັກເຂດປ່າ. ບໍລິສັດຍັງເພີ່ມຈຳນວນການວ່າຈ້າງຊຸມຊົນໃຫ້ເຂົ້າມາເຮັດວຽກນຳອີກ”.

ເພື່ອກວດສອບເບິ່ງການມີສ່ວນກ່ຽວຂ້ອງຂອງພອນສັກໃນການຄ້າໄມ້ເຖື່ອນອອກໄປຫວຽດນາມ ຜູ້ສັງເກດການຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ແຝງຕົວເປັນຜູ້ຊື້ໄມ້ໂດຍໄດ້ເດີນທາງໄປເມືອງທ່າແຂກ ແຂວງຄຳມ່ວນຂອງລາວໃນເດືອນເມສາ ປີ 2011 ເພື່ອພົບຜູ້ຕາງໜ້າບໍລິສັດຢູ່ທີ່ໂຮງງານໄມ້ປູພື້ນປາກເກ່າຂອງບໍລິສັດ.

ເລີ່ມຕົ້ນອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພົບແຊັມ ເລັ່ງສະຫວັດ ຫົວໜ້າບໍລິຫານພອນສັກໄມ້ ທີ່ໂຮງງານຢູ່ຊານເມືອງທ່າແຂກ. ເລັ່ງສະຫວັດອະທິບາຍໃຫ້ຮູ້ວ່າບໍລິສັດໄດ້ສົ່ງຜະລິດຕະພັນທັງໝົດຂອງຕົນໄປໃຫ້ໂຮງງານໄມ້ປູພື້ນປາກເກ່າຄືບວົງຈອນບ່ອນໃໝ່ຢູ່ໃກ້ຍີມມະລາດແນວໃດ. ລາວຢ້ຳວ່າບໍລິສັດປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງຢູ່ໃນລາວແນວໃດ ໂດຍໄດ້ຮັບໄມ້ທ່ອນຈາກບ່ອນຜະລິດພະລັງງານນ້ຳ, ການຂຸດບໍ່ແຮ່, ໂຄງການສ້າງທາງ, ແລະລົ້ງເຄີຍກັບຄວາມຈຳເປັນຕ້ອງມີສິ່ງຢືນຢັນຢ່າງຖືກຕ້ອງຕາມກົດໝາຍ ໃນການສົ່ງຜະລິດຕະພັນໄມ້ໄປສະຫະລັດອາເມຣິກາ.

ຕໍ່ຈາກນັ້ນບັກ ລູ່ກ່າຍ (Butch Lugay) ຫົວໜ້າຝ່າຍສົ່ງອອກໄດ້ຕິດຕາມຜູ້ສັງເກດການຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນໄປຢ້ຽມຢາມໂຮງງານແຫ່ງໃໝ່. ລະຫວ່າງທີ່ສົນທະນາກັບລູ່ກ່າຍນັ້ນ ມີເລື່ອງໃໝ່ທີ່ແຕກຕ່າງຢ່າງສິ້ນເຊີງປະກົດຂຶ້ນມາ ຄືລູ່ກ່າຍບອກວ່າບໍລິສັດບໍ່ສາມາດຮັບປະກັນໃນການຕອບສະໜອງການສັ່ງຊື້ໄມ້ປູພື້ນປາກເກ່າໃຫ້ໄດ້ ເພາະວ່າບໍລິສັດກຳລັງຫວົ້ງເຕັ້ນເພື່ອໃຫ້ໄດ້ວັດຖຸດິບຢູ່. ລາວຍອມຮັບວ່າໂຮງງານປຸງແຕ່ງໄມ້ເປັນພຽງສາກບັງໜ້າ ເພື່ອສະແດງໃຫ້ເຈົ້າໜ້າທີ່ຂອງລັດຖະບານເຫັນການລົງທຶນຂອງຕົນ ຈຶ່ງໄດ້ສ້າງໂຮງງານປຸ່ງແຕ່ງໄມ້ຢູ່ພາຍໃນປະເທດຂຶ້ນມາ. ໃນຄວາມເປັນຈິງແລ້ວ ໂຮງງານນີ້ຖືກນຳໃຊ້ເພື່ອຮັບປະກັນໃຫ້ໄດ້ໂກຕ້າໃນການຕັດໄມ້ຈາກລັດຖະບານນັ້ນເອງ. ລູ່ກ່າຍເວົ້າວ່າ “ເຈົ້າມີໂຮງງານໃຫຍ່ ລັດຖະບານຈະມາຢ້ຽມຢາມ... ໂອ້! ເຈົ້າມີຫລາຍ...ພວກເຂົາເຈົ້າກໍຈະໃຫ້ໂກຕ້າເຈົ້າຫລາຍ. ບໍລິສັດນ້ອຍບໍ່ໄດ້ດອກ ມີແຕ່ຂ້ອຍນີ້ແຫລະ”. ມີການລາຍງານວ່າພອນສັກໄດ້ໂກຕ້າໄມ້ແຕ່ລະປີ ຫລາຍກວ່າ 120,000 ແມັດກ້ອນ.

ອີງຕາມຄຳບອກເລົ່າຂອງລູ່ກ່າຍ “...ໄດ້ໄມ້ຫລາຍຈາກລັດຖະບານ ໂກຕ້າທີ່ພວກເຮົາໄດ້ ມີໄມ້ທີ່ຊອຍແລ້ວແລະໄມ້ທ່ອນສົ່ງໄປຫວຽດນາມ”. ລູ່ກ່າຍປະເມີນວ່າ 90 ເປີເຊັນຂອງໄມ້ບໍລິສັດຫລືປະມານ 108,000 ແມັດກ້ອນ ຖືກສົ່ງອອກໄປຫວຽດນາມ ໂດຍມີການຂົນໄມ້ທ່ອນຜ່ານດ່ານກວດການາພ້າວ-ຈາໂລ ແລະຈຸດຂ້າມແດນອື່ນໆ ໂດຍຈະປ່ອຍລົດບັນທຸກເປັນສາຍອອກຈາກໂຮງງານໃນຕອນກາງຄືນມຸ່ງສູ່ຊາຍແດນ.

ລູ່ກ່າຍອະທິບາຍວ່າທຸລະກິດການສົ່ງໄມ້ທ່ອນອອກໄປຫວຽດນາມຂອງພອນສັກຈະມີຄວາມສຳຄັນກວ່າທຸລະກິດປຸ່ງແຕ່ງໄມ້ ເພາະວ່າພອນສັກ ຜູ້ເປັນເຈົ້າຂອງຈະໄດ້ກຳໄລເປັນເງິນສົດຢ່າງໄວວາ. ລາວເປີດເຜີຍວ່າພອນສັກໄດ້ເງິນຫລາຍຈາກການສົ່ງໄມ້ທ່ອນອອກໄປຫວຽດນາມ ເມື່ອທຽບກັບກຳໄລທີ່ໄດ້ຮັບຈາກໂຮງງານໄມ້ປູພື້ນປາກເກ່າ.




ເຄື່ອງໝາຍຕິດຢູ່ລົດບັນທຸກບົ່ງບອກເຂດເຂື່ອນເຊກອງ 4.

© EIA



ໄມ້ທ່ອນຂອງພອນສັກມຸ່ງໜ້າສູ່ຫວຽດນາມ ມາຈາກເຂດເຂື່ອນເຊກອງ 4.

© EIA



ໂຮງງານໄມ້ຂອງພອນສັກຢູ່ຄຳມ່ວນໃນປະເທດລາວ. ບໍລິສັດນີ້ບໍ່ສາມາດຮັບປະກັນການສັ່ງຊື້ຜະລິດຕະພັນສຳເລັດຮູບໄດ້ ເພາະຂາດເຂີນວັດຖຸດິບ. © EIA

ເພື່ອດຳເນີນທຸລະກິດຂອງຕົນເອງ ພອນສັກຕິສະໜິດກັບບຸກຄົນທີ່ມີອຳນາດທາງການເມືອງ ແລະຜູ້ມີອິດທິພົນຢູ່ໃນລັດຖະບານລາວ. ມີຄົນເວົ້າວ່າພອນສັກໃກ້ຊິດກັບປະທານປະເທດຂອງ ສ. ປ. ປ ລາວ ແລະມີຄົນອ້າງວ່າປະທານປະເທດມີພີ່ນ້ອງຂອງຕົນເອງເຂົ້າໄປມີຕຳແໜ່ງເຮັດວຽກຢູ່ໃນກຸ່ມບໍລິສັດພອນສັກ. ແມ່ນແຕ່ແຊັມ ເລັ່ງສະຫວັດເອງກໍເປັນພີ່ນ້ອງກັບຮອງນາຍົກລັດຖະມົນຕີຄົນປັດຈຸບັນ ຄື ສົມສະຫວາດ ເລັ່ງສະຫວັດ ສະນັ້ນຈຶ່ງຖືກຮັບເຂົ້າມາເຮັດວຽກກັບບໍລິສັດ ຍ້ອນເສັ້ນສາຍທາງດ້ານການເມືອງນັ້ນເອງ. ດັ່ງນັ້ນຈຶ່ງເປັນຂໍ້ສະດວກພິເສດ ທີ່ຫ້ອງການນາຍົກລັດຖະມົນຕີຈະອະນຸມັດໂກຕ້າໄມ້ໃຫ້.

ຄຽງຄູ່ໄປກັບການດຳເນີນການຕັດໄມ້ນັ້ນ ກຸ່ມບໍລິສັດພອນສັກຍັງໄດ້ພົວພັນກັບການຂຸດບໍ່ແຮ່ ແລະໂຄງການກໍ່ສ້າງຢູ່ໃນປະເທດລາວນຳອີກ. ໃນປີ 2010 ບໍລິສັດໄດ້ຖືກກ່າວຫາວ່າໄດ້ຂຸດຄົ້ນບໍ່ຄຳຢູ່ເຂດປ່າສະຫງວນແຫ່ງຊາດນາກາຍນ້ຳເທີນ ໂດຍການເຮັດສັນຍາກັບກອງທັບລາວ.[46]

## ບໍລິສັດໄນສ໌ວູດ: ບໍ່ມີຫຍັງຍາກຖ້າມີເງິນ

ການວິໄຈຄົ້ນຄວ້າຊຶ່ງເຮັດຂຶ້ນໂດຍອົງການສືບສວນດ້ານສິ່ງແວດລ້ອມສາກົນສະແດງໃຫ້ເຫັນວ່າ ບໍລິສັດໄນສ໌ວູດຂອງຫວຽດນາມຍັງໄດ້ດຳເນີນການຕັດໄມ້ຢູ່ໃນປະເທດລາວນຳອີກ ໂດຍສະເພາະຢູ່ທາງແຂວງພາກເໜືອຄືຊຽງຂວາງ. ໃນເດືອນເມສາປີ 2011 ຜູ້ສັງເກດການຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ແຝງຕົວເປັນຜູ້ຊື້ໄມ້ປູພື້ນປາກເກົ່າ ໂດຍເດີນທາງໄປຫາຫ້ອງການໃຫຍ່ຂອງບໍລິສັດຢູ່ຊານເມືອງຮ່າໂນ້ຍ ເພື່ອຄົ້ນຫາລາຍລະອຽດເພີ່ມເຕີມກ່ຽວກັບກິດຈະກຳຂອງບໍລິສັດໄນສ໌ວູດຢູ່ໃນປະເທດລາວ.

ລະຫວ່າງການສົນທະນາໜຶ່ງຊົ່ວໂມງກັບໂທນີຊ່ວນ (Tony Xuan) ຫົວໜ້າພະແນກຂາເຂົ້າ-ຂາອອກຂອງບໍລິສັດໄນສ໌ວູດເປີດເຜີຍໃຫ້ຮູ້ວ່າ ເຖິງວ່າບໍລິສັດນີ້ຈະມີໂຮງງານປຸງແຕ່ງໄມ້ຢູ່ໃນລາວກໍຕາມ ແຕ່ໄມ້ສ່ວນຫລາຍທີ່ຕັດຢູ່ໃນລາວຖືກຂົນສົ່ງອອກໄປຫວຽດນາມນັ້ນບໍ່ມີການປຸງແຕ່ງເລີຍ.

ຊ່ວນບອກອົງການສືບສວນດ້ານສິ່ງແວດລ້ອມສາກົນວ່າ ຜ່ານມາບໍລິສັດນີ້ໄດ້ສົ່ງຜະລິດຕະພັນໄມ້ຕົບແຕ່ງແລະໄມ້ປາກເກົ່າປູພື້ນຈາກໂຮງງານຂອງຕົນຢູ່ໃນລາວໄປໃຫ້ປະເທດຕ່າງໆ ມີສະຫະລາຊະອານາຈັກ, ເນເທີແລນດ໌ແລະເກົາຫລີ. ແຕ່ລາວອະທິບາຍຕໍ່ໄປວ່າ ປັດຈຸບັນບໍລິສັດບໍ່ໄດ້ຜະລິດສິນຄ້າສຳເລັດຮູບແລ້ວແລະກໍບໍ່ຢາກສົ່ງເສີມທຸລະກິດດ້ານນີ້ອີກແລ້ວ.

ຊ່ວນເປີດເຜີຍວ່າ ທຸລະກິດໃຫຍ່ຂອງບໍລິສັດບໍ່ແມ່ນສິນຄ້າສຳເລັດຮູບ ແຕ່ແມ່ນວັດຖຸດິບ - ສ່ວນໃຫຍ່ແມ່ນໄມ້ທ່ອນ ຫລືໄມ້ທ່ອນທີ່ຊອຍເປັນຫລ່ຽມ. ສະນັ້ນຈຶ່ງເວົ້າໄດ້ອີກຕື່ມວ່າການທີ່ບໍລິສັດມີໂຮງງານຂອງຕົນຢູ່ໃນປະເທດລາວນັ້ນ ແມ່ນສາກບັງໜ້າລ້າໆ ເພື່ອຮັບປະກັນໃຫ້ໄດ້ໂກຕ້າຈາກລັດຖະບານລາວໃນການຕັດໄມ້ ໂດຍໃຫ້ໄດ້ໄມ້ທ່ອນຈຳນວນຫລວງຫລາຍສົ່ງອອກໄປຫວຽດນາມເທົ່ານັ້ນເອງ.

ອີງຕາມຊ່ວນບອກໃຫ້ຮູ້ວ່າ ແຕ່ລະປີບໍລິສັດ



ໄມ້ທ່ອນຊອຍເປັນຫລ່ຽມ ຈາກປະເທດລາວ, ໂຮງງານໄນສ໌ວູດ ຢູ່ຮ່າໂນ້ຍ ຫວຽດນາມ ປີ 2011. © EIA

ໄນສ໌ວູດໄດ້ຮັບໂກຕ້າໄມ້ 30,000 ແມັດກ້ອນ ໂດຍມີການຕັດໄມ້ຢູ່ບ່ອນໄດ້ຮັບສຳປະທານປ່າໄມ້ ແທນທີ່ຈະເອົາຈາກສະຖານທີ່ສ້າງເຂື່ອນພະລັງງານນ້ຳ. ລາວຍັງເວົ້າເສີມວ່າ ເພື່ອໃຫ້ໄດ້ໂກຕ້າໄມ້ ບໍລິສັດໄນສ໌ວູດ “ຕ້ອງມີສາຍສຳພັນກັບລັດຖະບານ”. ລາວຂະຫຍາຍຄວາມວ່າບໍລິສັດ “ຕ້ອງຈ່າຍໃຫ້ລັດຖະບານ ເພື່ອໃຫ້ໄດ້ໂກຕ້າ... ແລະເອົາເງິນໃຫ້ພວກເຂົາເຈົ້າເພື່ອຂົນສົ່ງໄມ້ມາບ່ອນນີ້ ຕົວຢ່າງເຈົ້າໜ້າທີ່ພາສີແລະຫົວໜ້າປ່າໄມ້ ພວກເຮົາກໍຕ້ອງເອົາເງິນໃຫ້ພວກເຂົາເຈົ້ານຳອີກ”.

ເມື່ອຊັກຖາມຕໍ່ໄປ ຊ່ວນຍອມຮັບວ່າ “ປະເທດລາວຫ້າມສົ່ງໄມ້ທ່ອນແລະໄມ້ທ່ອນຊອຍເປັນຫລ່ຽມອອກນອກປະເທດ ແຕ່ຍັງມີບາງບໍລິສັດເຊັ່ນພວກເຮົາສາມາດນຳເອົາເຂົ້າມາໄດ້: “ບໍ່ມີຫຍັງຍາກ ຖ້າຫາກເຈົ້າມີເງິນ”.

ຢູ່ສາງເກັບມ້ຽນຂອງບໍລິສັດໄນສ໌ວູດທີ່ວບໍລິເວນສາງເຕັມແຕ່ໄມ້ທ່ອນທີ່ຊອຍເປັນຫລ່ຽມ

ສ່ວນໃຫຍ່ເອົາມາຈາກປະເທດລາວ. ຍັງມີລົດບັນທຸກອີກສາມຄັນ ຊຶ່ງບັນທຸກແຕ່ໄມ້ທ່ອນ (yellow balau) ທີ່ຊອຍເປັນຫລ່ຽມເຕັມຢູ່ ຊຶ່ງເດີນທາງມາຈາກລາວແຕ່ຍັງບໍ່ທັນໄດ້ເອົາລົງຈາກລົດເທື່ອ. ລົດບັນທຸກຕ່າງໄມ້ຈາກໂຮງງານຂອງບໍລິສັດຢູ່ໃນລາວໄປຫາຫວຽດນາມ ໂດຍຜ່ານດ່ານກວດກາໜອງແຮດ-ນ້ຳຄານ.

ຊ່ວນຍັງບອກອີກວ່າ ບໍລິສັດໄນສ໌ວູດສົ່ງໄມ້ທ່ອນຂອງລາວໄປໃຫ້ຜູ້ຊື້ຢູ່ຕ່າງປະເທດນຳອີກ. ໃນເດືອນມັງກອນ ປີ 2010 ບໍລິສັດໄນສ໌ວູດສົ່ງໄມ້ດູ່ເປັນທ່ອນຈຳນວນ 1,200 ແມັດກ້ອນ ໄປນະຄອນຢັນໄຕ (Yantai City) ຂອງຈີນ. ຜ່ານມາບໍລິສັດໄດ້ສົ່ງໄມ້ທ່ອນ (yellow balau) ໄປທ່າເຮືອ ແກນດ໌ລາ (Kandla) ຂອງອິນເດຍ.

# ບໍລິສັດຫວຽດນາມໃຊ້ໄມ້ທ່ອນຂອງລາວ

ລະຫວ່າງເດືອນຕຸລາ ປີ 2010 ແລະພຶດສະພາ ປີ 2011 ຜູ້ສັງເກດການຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພົບປະກັບບໍລິສັດປຸງແຕ່ງໄມ້ຕ່າງໆຂອງຫວຽດນາມ ເພື່ອຢາກຮູ້ລະດັບການໃຊ້ໄມ້ທ່ອນຂອງອຸດສາຫະກຳທີ່ນຳເຂົ້າມາຈາກປະເທດລາວ. ອົງການສືບສວນດ້ານສິ່ງແວດລ້ອມສາກົນພົບວ່າໂຮງງານຢູ່ໃນສູນການຄ້າຂອງນະຄອນໂຮ່ຈິມິ່ນ ມີທ່າອ່ຽງໄປໃນທາງຫລີກລ່ຽງການໃຊ້ໄມ້ທ່ອນຈາກປະເທດລາວ ຍ້ອນມູນຄ່າຂົນສົ່ງແລະແຫລ່ງວັດຖຸດິບທີ່ມາຈາກທາງໄກ ເຊັ່ນ ອາຟຣິກາແລະອາເມຣິກາໃຕ້. ແຕ່ວ່າໂຮງງານປຸງແຕ່ງໄມ້ທີ່ອົງການສືບສວນດ້ານສິ່ງແວດລ້ອມສາກົນໄປຢ້ຽມຢາມຢູ່ທີ່ກີຍັ່ງ, ປະເລກູ່ ຢູ່ພາກກາງຫວຽດນາມແລະຮ່າໂນ້ຍ ຢູ່ທາງພາກເໜືອນັ້ນ ພົບວ່າມີການໃຊ້ໄມ້ທ່ອນນຳເຂົ້າມາຈາກປະເທດລາວ. ຜູ້ສັງເກດການຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນຍັງໄດ້ບັນທຶກກອງໄມ້ທ່ອນຈາກລາວຈຳນວນມະຫາສານຢູ່ທ່າເຮືອຫວຽດນາມທີ່ໄຮ່ຟອງ, ດານັ່ງແລະກີຍັ່ງ ຊຶ່ງລໍຖ້ານຳອອກຂາຍຫລືຂົນສົ່ງຕໍ່ໄປບ່ອນອື່ນອີກ.

ຜູ້ຜະລິດລາຍໜຶ່ງທີ່ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພົບປະຢູ່ນະຄອນໂຮ່ຈິມິ່ນ ໄດ້ສະຫລຸບສະພາບໃຫ້ຟັງວ່າ: "ເວົ້າເລື່ອງເຮັດທຸລະກິດລາວກໍຄືຫວຽດນາມຫັ້ນແລ້ວ ຄືພວກເຈົ້າຮູ້ ຕ້ອງໃຊ້ເງິນໃຕ້ໂຕະຫລາຍ. ຍາກຫລາຍທີ່ຈະເອົາໄມ້ທ່ອນອອກ. ມັນຜິດກົດໝາຍ. ຢູ່ກີຍັ່ງມີຫລາຍວິທີໃນການໄດ້ໄມ້ທ່ອນມາ ແຕ່ຂ້ອຍບໍ່ຮູ້ແບບໃດ. ເນື່ອງຈາກວ່າພວກເຮົາແມ່ນບໍລິສັດໃຫຍ່ ພວກເຮົາບໍ່ຮູ້ຈັກວ່າຈະເຮັດແນວໃດ ພວກເຮົາບໍ່ກ້າເຮັດແນວນັ້ນ".

## ດົ໋ກ ລົງ ເກຍ ລາຍ (Duc Long Gia Lai)

ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ພົບບໍລິສັດເຟີນິເຈີ ດົ໋ກ ລົງ ເກຍ ລາຍ ຢູ່ປະເລກູ່ ຊຶ່ງແມ່ນກຸ່ມ ດົ໋ກ ລາຍ ເປັນເຈົ້າຂອງ. ເປັນທີ່ຮູ້ກັນດີວ່າບໍລິສັດນີ້ມີສາຍພົວພັນຢ່າງແໜ້ນແຟ້ນກັບລັດຖະບານແລະກອງທັບຫວຽດນາມ.

ອົງຕາມໂດ ທັ່ນ ຜູ້ອຳນວຍການບໍລິສັດ ດົ໋ກ ລົງ ເກຍ ລາຍ ບອກໃຫ້ຮູ້ວ່າ ບໍລິສັດຂອງຕົນໄດ້ນຳເຂົ້າໄມ້ທ່ອນສ່ວນໃຫຍ່ມາຈາກປະເທດລາວ ຊຶ່ງມີຜູ້ຈັດສົ່ງໃຫ້ຢູ່ເປັນປະຈຳ. ໄມ້ທ່ອນຈະຖືກລຳລຽງໄປປະເລກູ່ ໂດຍຜ່ານດ່ານກວດກາໂບວາຍ (Bo Y) ຊຶ່ງຢູ່ປະເລກູ່ ໄມ້ທ່ອນເຫລົ່ານີ້ຈະຖືກນຳໄປປຸງແຕ່ງຢູ່ໂຮງງານຂອງບໍລິສັດໃຫ້ກາຍເປັນໄມ້ປູພື້ນປາກເກ່ແລະຜະລິດເປັນເຟີນິເຈີ. ຢູ່ທີ່ໂຮງງານຂອງບໍລິສັດນີ້ ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ສັງເກດເຫັນໄມ້ທ່ອນຂອງລາວກອງໃຫຍ່ ຊຶ່ງມີໄມ້ (yellow balau), ໄມ້ (keruing), ແລະໄມ້ pyinkado.

ທັ່ນຍັງບອກອີກວ່າ ບໍລິສັດດົ໋ກ ລົງ ສະໜອງໄມ້ໃຫ້ແກ່ກອງທັບຫວຽດນາມ. ອົງການສືບສວນດ້ານສິ່ງແວດລ້ອມສາກົນເຫັນແຟ້ນກະດານ ຊຶ່ງມີລາຍຊື່ຂອງລູກຄ້າຂອງບໍລິສັດນີ້ຢູ່ທີ່ຫວຽດນາມ ປະກອບດ້ວຍໜ່ວຍສືບລັບຂອງກອງທັບພາກທີ 5 ກອງພັນທີ 320 - ໜ່ວຍ 3 ຊຶ່ງບໍລິສັດໄດ້ສະໜອງໄມ້ໃຫ້ທັງສອງກອງນີ້ເພື່ອນຳໄປໃຊ້ໃນໂຄງການ. ອັນນີ້ສະແດງໃຫ້ເຫັນວ່າບໍລິສັດ ດົ໋ກ ລົງ ມີການພົວພັນຢ່າງໃກ້ຊິດກັບລັດຖະບານຫວຽດນາມ.

ນອກຈາກນີ້ແລ້ວ ບໍລິສັດ ດົ໋ກ ລົງ ຍັງດຳເນີນທຸລະກິດຢ່າງຫລວງຫລາຍຢູ່ຕ່າງປະເທດນຳອີກ ຄືສົ່ງຜະລິດຕະພັນເປັນປົກກະຕິໄປໃຫ້ລູກຄ້າຢູ່ເຢຍລະມັນ, ເນເທີແລນດ໌, ເກຣັກ, ຍີ່ປຸ່ນ, ອິສຣາແອນແລະປະເທດອື່ນໆ.

**ຮູບລຸ່ມ:**
ການຂົນໄມ້ທ່ອນຂຶ້ນລົດບັນທຸກຢູ່ແຂວງເຊກອງ ປະເທດລາວ ປີ 2000.



© EIA

## ບໍລິສັດ ທັ່ນ ຖຸ່ຍ ເຟີນິເຈີ (Thanh Thuy Furniture)

ຢູ່ທີ່ ກີຍົ່ງ ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ໄປຢ້ຽມຢາມບໍລິສັດເຟີນິເຈີຂະໜາດກາງ ຊື່ວ່າ ທັ່ນ ຖຸ່ຍ ຊຶ່ງນໍາໃຊ້ໄມ້ (yellow balau) ແລະໄມ້ (keruing) ຜະລິດເຟີນິເຈີແຕກຕ່າງກັນຫລາຍປະເພດອອກຂາຍ.

ອີງຕາມ ຫງວຽນ ທີ່ ຫົ່ງ ຖຸ່ຍ (Nguyen Thi Hong Thuy) ຮອງອໍານວຍການບໍລິສັດບອກໃຫ້ຮູ້ວ່າ ແຕ່ລະປີບໍລິສັດຂອງຕົນໄດ້ຈັດສົ່ງເຟີນິເຈີຈໍານວນ 300 ຕູ້ສິນຄ້າທາງເຮືອອອກໄປຕ່າງປະເທດ ຊຶ່ງຜະລິດຕະພັນຂອງຕົນ 70 ເປີເຊັນເຮັດດ້ວຍໄມ້ (yellow balau) ສ່ວນທີ່ເຫລືອນັ້ນເຮັດດ້ວຍໄມ້ (keruing) ແລະໄມ້ອື່ນໆ. ທັງໄມ້ (yellow balau) ແລະໄມ້ (keruing) ມີແຫລ່ງທີ່ມາຈາກປະເທດລາວແລະຫວຽດນາມ. ວັດຖຸສ່ວນໃຫຍ່ຈະຖືກສົ່ງເຂົ້າມາກີຍົ່ງລັກສະນະເປັນໄມ້ທ່ອນ ແຕ່ບາງຢ່າງເປັນໄມ້ທີ່ຊອຍແລ້ວ. ຫງວຽນ ທີ່ ຫົ່ງ ຖຸ່ຍ ເປີດເຜີຍໃຫ້ຮູ້ວ່າ ບໍລິສັດຂອງຕົນບໍ່ໄດ້ນໍາເອົາໄມ້ມາຈາກປະເທດລາວດ້ວຍຕົນເອງ ແຕ່ແມ່ນຕົວແທນຢູ່ໃນທ້ອງຖິ່ນເປັນຜູ້ຈັດສົ່ງມາໃຫ້. ຜະລິດຕະພັນສ່ວນໃຫຍ່ຂອງບໍລິສັດ ທັ່ນ ຖຸ່ຍ ແມ່ນເພື່ອສົ່ງອອກໄປເອີຣົບແລະສະຫະລັດອາເມຣິກາ.

## ບໍລິສັດ ຄ່ານ ຕິ່ງ (Khang Thinh)

ຢູ່ທີ່ກີຍົ່ງ ອົງການສືບສວນດ້ານສິ່ງແວດລ້ອມສາກົນຍັງໄດ້ໄປຢ້ຽມຢາມໂຮງງານແຫ່ງໜຶ່ງ ຊຶ່ງບໍລິສັດ ຄານ ຕິ່ງ ເປັນເຈົ້າຂອງ. ພົບວ່າບໍລິສັດນີ້ກາງຕໍ່ໄມ້ທ່ອນຈາກປະເທດລາວຢ່າງຫລວງຫລາຍ ເພື່ອຜະລິດເຟີນິເຈີສົ່ງອອກຕ່າງປະເທດ.

ຕັນ ທີ່ ຕຽດ ຫງ່າ (Tang Thi Tuyet Nga) ຜູ້ອໍານວຍການບໍລິສັດເປີດເຜີຍວ່າ ວັດຖຸດິບຂອງບໍລິສັດ ຄ່ານ ຕິ່ງ ປະມານ 70 ເປີເຊັນແມ່ນໄມ້ (yellow balau) ແລະໄມ້ (keruing) ຊຶ່ງທຸກໆປີ ຕົວແທນຢູ່ ກີຍົ່ງ ຊື່ບໍລິສັດ ດຸຍ ຕວນ ເຕ່ ຈໍາກັດ (Duy Tuan Pte Ltd) ຈະເປັນຜູ້ຈັດສົ່ງໄມ້ທ່ອນຈາກປະເທດລາວມາໃຫ້ປະມານ 3,000 ແມັດກ້ອນ. ບໍລິສັດ ຄ່ານ ຕິ່ງ ສົ່ງຜະລິດຕະພັນສ່ວນໃຫຍ່ຂອງຕົນໄປເອີຣົບ.

## ບໍລິສັດວີນ່າຟອຣ ດານັ່ງ (Vinafor Danang)

ອົງການສືບສວນດ້ານສິ່ງແວດລ້ອມສາກົນໄປພົບບໍລິສັດດານັ່ງ ຊຶ່ງເປັນບໍລິສັດຍ່ອຍຂອງບໍລິສັດວີນ່າຟອຣຂອງລັດ ຊຶ່ງດໍາເນີນການເກືອບວ່າທຸກດ້ານຂອງການຄ້າໄມ້ຢູ່ຫວຽດນາມ ນັບຕັ້ງແຕ່ການປູກໄມ້ ຄ້າໄມ້ແລະປຸງແຕ່ງໄມ້. ລະຫວ່າງທີ່ເລາະເບິ່ງໂຮງງານ ປະກົດວ່າຂີດຄວາມສາມາດດ້ານການປຸງແຕ່ງໄມ້ຂອງບໍລິສັດວີນ່າຟອຣ ດານັ່ງນີ້ ມີບໍ່ຫລາຍ ແຕ່ທຸລະກິດຫລັກຊໍ້າພັດວ່າແມ່ນການຄ້າໄມ້. ຕໍ່ມາອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ໂທລະສັບຫາຈອນນີ ກົ່ງ (Johny Cuong) ຜູ້ທີ່ຮູ້ຈັກດີ ກ່ຽວກັບການຄ້າວັດຖຸດິບຂອງບໍລິສັດ. ກົ່ງເປີດເຜີຍໃຫ້ຮູ້ວ່າລາວສາມາດຈັດຫາໄມ້ທ່ອນຈາກລາວໃນປະລິມານຈໍານວນຫລວງຫລາຍໃຫ້ໄດ້ ແລະໃນຂະນະນີ້ລາວມີໄມ້ທ່ອນ (yellow balau) ຮອດ 6,000 ແມັດກ້ອນ ຢູ່ໃນປະເທດລາວ ກໍາລັງລໍຖ້າລໍາລຽງມາຫວຽດນາມຢູ່.

## ບໍລິສັດ ຮ່ວງ ຟັດ ເຟີນິເຈີ (Hoang Phat Furniture)

ໃນປີ 2007 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄປພົບບໍລິສັດ ຮ່ວງ ຟັດ ເຟີນິເຈີ ຢູ່ ກີຍົ່ງ ແລະໄດ້ພົບວ່າບໍລິສັດນີ້ກໍາລັງລໍາລຽງໄມ້ທ່ອນ (yellow balau) ນໍາເຂົ້າມາຈາກປະເທດລາວ ຊຶ່ງຈະນໍາໄປແປຮູບເປັນເຟີນິເຈີ ເພື່ອສົ່ງອອກເອີຣົບໃນຂັ້ນຕໍ່ໄປ. ໃນເດືອນເມສາ ປີ 2011 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ສັງເກດເຫັນກໍາມະກອນກໍາລັງເອົາໄມ້ທ່ອນຂຶ້ນໃສ່ລົດບັນທຸກຂອງບໍລິສັດ ຮ່ວງ ຟັດ ຢູ່ສະໜາມໄມ້ທ່ອນຂອງບໍລິສັດຫວຽດນາມເພື່ອການຮ່ວມມືທາງດ້ານເສດຖະກິດ (COECCO) ໃນແຂວງອັດຕະປື. ໃນການຕິດຕໍ່ພົວພັນ ເພື່ອຕິດຕາມເລື່ອງທຸລະກິດຂອງບໍລິສັດ ຮ່ວງ ຟັດ ເຮັດໃຫ້ຮູ້ວ່າບໍລິສັດນີ້ສາມາດຈັດຫາໄມ້ (keruing) ໃຫ້ໄດ້ໃນປະລິມານຈໍານວນຫລວງຫລາຍຈາກປ່າໄມ້ຢູ່ໃນທ້ອງຖິ່ນ.




## ຈຸດຜ່ານແດນ

ອີງໃສ່ການສືບສວນຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນຕັ້ງແຕ່ປີ 2007 ເປັນຕົ້ນມາ ມີໄມ້ຢ່າງຫລວງຫລາຍພາຍມາກຖືກສົ່ງອອກຈາກລາວໄປຫວຽດນາມບໍ່ວ່າຈະເປັນໄມ້ທ່ອນ ຫລືໄມ້ຊອຍແລ້ວກໍຕາມ ລ້ວນແລ້ວແຕ່ເປັນການຝ່າຝືນກົດໝາຍຂອງລາວທັງນັ້ນ. ຈຸດຂ້າມຊາຍແດນສໍາຄັນທີ່ໃຊ້ເປັນບ່ອນລັກລອບເອົາໄມ້ທ່ອນຈາກລາວໄປຫວຽດນາມມີຄື:

ດ່ານ ພູໂກ - ໂບອາຍ: ເຫັນລົດບັນທຸກໄມ້ທ່ອນແລ່ນເປັນສາຍກັນໄປສ່ວນໃຫຍ່ໄປຈາກອັດຕະປື ແລະອາດມາຈາກເຊກອງແດ່ ມຸ່ງໜ້າໄປຫວຽດນາມຜ່ານດ່ານແຫ່ງນີ້. ສ່ວນຫລາຍໄມ້ທ່ອນທີ່ລໍາລຽງຂ້າມດ່ານນີ້ ມີຈຸດໝາຍປາຍທາງທີ່ເມືອງຕ່າງໆ ຄື ກີຍົ່ງ, ວິ່ງແລະດານັ່ງ.

ເສັ້ນທາງເລກທີ 15 ຢູ່ສາລະວັນ: ຄົນຂັບລົດບັນທຸກໄມ້ທ່ອນຢູ່ເຊກອງເປີດເຜີຍໃຫ້ຮູ້ວ່າ ໄມ້ທ່ອນສ່ວນໃຫຍ່ຈາກສະຖານທີ່ກໍ່ສ້າງເຂື່ອນໄຟຟ້າເຊກອງ 4 ຖືກລໍາລຽງຜ່ານຈຸດນີ້ ຄິດວ່າໄມ້ທ່ອນສ່ວນໃຫຍ່ຈະມີປາຍທາງຢູ່ທີ່ດານັ່ງ.

ຈຸດຜ່ານແດນດັກຈຶ່ງ ຢູ່ເຊກອງ: ເຊື່ອວ່າໄມ້ທ່ອນທີ່ຖືກລໍາລຽງຂ້າມຈຸດຜ່ານແດນບ່ອນນີ້ ມາຈາກສະຖານທີ່ສ້າງເຂື່ອນເຊກະໝານ 3.

ດ່ານໜອງແຮດ - ນໍ້າຄານ: ພໍ່ຄ້າຜູ້ໜຶ່ງຢູ່ຫວຽດນາມເປີດເຜີຍຕໍ່ອົງການສືບສວນດ້ານສິ່ງແວດລ້ອມສາກົນວ່າມີການຂົນສົ່ງໄມ້ທ່ອນແລະໄມ້ທ່ອນຊອຍເປັນຫລ່ຽມຜ່ານດ່ານໜອງແຮດ - ນໍ້າຄານເປັນປະຈໍາ. ເປັນທີ່ຮູ້ຈັກກັນດີວ່າ ໄມ້ທີ່ຜ່ານດ່ານນີ້ຈະໄປສິ້ນສຸດຢູ່ທີ່ວິ່ງ, ໄຮ່ຟ່ອງ ຫລືຮ່າໂນ້ຍ.

ດ່ານນາພ້າວ - ຈາໂລ: ໃນປີ 2007 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ຖ່າຍຮູບເງົາເອົາລົດບັນທຸກໄມ້ທ່ອນແລ່ນເປັນສາຍຜ່ານດ່ານແຫ່ງນີ້ໄປຫວຽດນາມໄວ້. ໃນເດືອນເມສາປີ 2011 ພໍ່ຄ້າຄົນໜຶ່ງຂອງພອນສັກຢືນຢັນວ່າຍັງມີການໃຊ້ດ່ານນີ້ຫລາຍແລະກໍຍັງມີການລໍາລຽງໄມ້ທ່ອນຜ່ານດ່ານນີ້ອອກໄປຫວຽດນາມຕໍ່ໄປຢູ່.

ດ່ານເຄຊານ - ລາວບາວແລະນໍ້າພ້າວ - ກາວແຕຼວ: ມີການລາຍງານວ່າໄມ້ທີ່ມີລາຄາແພງ ແລະມັກເປັນ 'ໄມ້ທີ່ມີຄຸນຄ່າ' ຖືກລັກລອບນໍາຂ້າມດ່ານສອງແຫ່ງນີ້ອອກໄປຫວຽດນາມ.

# ຈຸດໝາຍປາຍທາງຕໍ່ໄປ



ທ່າເຮືອຕຽນຊາ, ຢູ່ດານັ້ງ ຂອງຫວຽດນາມ.

© EIA




ເຟີນີເຈີໃຊ້ຢູ່ນອກເຮືອນ ທີ່ຜະລິດຢູ່ຫວຽດນາມ ເພື່ອສົ່ງອອກໄປເອີຣົບ.

© EIA

ທຸກໆປີຈະມີໄມ້ທ່ອນຫລາຍຮ້ອຍພັນແມັດກ້ອນຫລັ່ງໄຫລອອກຈາກລາວໄປຫວຽດນາມ. ສິນຄ້າຈຳນວນມະຫາສານຈະເຂົ້າໄປຢູ່ໃນຕະຫລາດສາກົນ ສ່ວນໃຫຍ່ໃນຮູບແບບຜະລິດຕະພັນໄມ້ສຳເລັດຮູບທີ່ເຮັດຢູ່ໃນຫວຽດນາມ ນອກນັ້ນຍັງມີໄມ້ທີ່ເປັນວັດຖຸດິບສົ່ງໄປປຸງແຕ່ງຢູ່ປະເທດອື່ນນຳອີກ ເຊັ່ນ ຈີນ ແລະອິນເດຍ. ການຄວບຄຸມຊັບພະຍາກອນປ່າໄມ້ຢູ່ປະເທດອາຊີອື່ນໆ ເຊັ່ນ ອິນໂດນີເຊຍໄດ້ປັບປຸງສະພາບຂອງລາວໃຫ້ດີຂຶ້ນ ໂດຍໃຫ້ມີການຈັດການກັບບັນຫາຄວາມບໍ່ຖືກຕ້ອງແລະບໍ່ເປັນລະບຽບກ່ຽວກັບປ່າ ຊຶ່ງແມ່ນຂໍ້ສະເໜີທີ່ໜ້າສົນໃຈສຳລັບອຸດສາຫະກຳປຸງແຕ່ງໄມ້ຢູ່ໃນຂົງເຂດແລະພວກສວນອື່ນໆອີກ.

## ຜະລິດຕະພັນໄມ້ສຳເລັດຮູບ

ອຸດສາຫະກຳປຸງແຕ່ງໄມ້ຂອງຫວຽດນາມເນັ້ນສະເພາະໃສ່ການຜະລິດເຟີນີເຈີທີ່ໃຊ້ຢູ່ໃນເຮືອນແລະນອກເຮືອນ ເຖິງວ່າການຜະລິດໄມ້ປາກເກ່ປູພື້ນແລະຜະລິດຕະພັນສຳເລັດຮູບອື່ນໆກຳລັງຂະຫຍາຍຕົວກໍຕາມ. ເມື່ອຄຳນຶງເຖິງລັກສະນະຂອງຂະແໜງໄມ້ທີ່ເນັ້ນໃສ່ການສົ່ງອອກຂອງຫວຽດນາມແລ້ວ ຄາດວ່າໄມ້ທ່ອນທີ່ນຳເຂົ້າມາຈາກປະເທດລາວນັ້ນຈະຖືກແປຮູບເປັນຜະລິດຕະພັນສຳເລັດຮູບ ຊຶ່ງຈະສິ້ນສຸດທີ່ຕະຫລາດປາຍທາງ ສ່ວນໃຫຍ່ແລ້ວແມ່ນຢູ່ສະຫະພາບເອີຣົບແລະສະຫະລັດອາເມຣິກາ.

ຢູ່ພາຍໃນສະຫະພາບເອີຣົບເອງ ປະເທດທີ່ເປັນສະມາຊິກຕ່າງໆມີການຮຽກຮ້ອງເງື່ອນໄຂທີ່ແຕກຕ່າງກັນກ່ຽວກັບຊະນິດໄມ້ໃນການເຮັດເຟີນີເຈີທີ່ໃຊ້ຢູ່ນອກເຮືອນ ຊຶ່ງນຳເຂົ້າມາຈາກຫວຽດນາມ ສ່ວນໃຫຍ່ແລ້ວຍ້ອນຮູບແບບຄວາມນິຍົມຊົມຊອບແລະຈິດສຳນຶກກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມຈາກການຕັດໄມ້ທີ່ຜິດກົດໝາຍ.

ຕົວຢ່າງ ຕະຫລາດພາກເໜືອຂອງສະຫະພາບເອີຣົບ ເຊັ່ນ ເຢັຍລະມັນມັກຊະນິດໄມ້ທີ່ປູກເອົາເຊັ່ນໄມ້ວີກ, ໄມ້ຂີ້ເຫລັກແລະມັກແມ່ນໄມ້ທີ່ມີການຮັບຮອງຕາມຄວາມຕ້ອງການ. ສ່ວນຕະຫລາດອື່ນໆ ເຊັ່ນ ອິຕາລີຍັງທຳການຄ້າເຟີນີເຈີທີ່ເຮັດດ້ວຍໄມ້ທີ່ມີອັດຕາສ່ຽງສູງທີ່ຈະສູນພັນ ຄື ໄມ້ (yellow balau) ແລະໄມ້ (keruing) ຈາກຫວຽດນາມຢູ່ ຊຶ່ງຈາກການສອບສວນຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນ ເປີດເຜີຍໃຫ້ຮູ້ວ່າໄມ້ທ່ອນສ່ວນຫລາຍລ້ວນມີແຫລ່ງທີ່ມາຈາກປະເທດລາວທັງນັ້ນ.

ຢູ່ໂຮງງານຜະລິດເຟີນີເຈີໃຊ້ຢູ່ນອກເຮືອນທີ່ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ໄປຢ້ຽມຢາມທີ່ກີຍັ່ງນັ້ນ ບໍລິສັດນີ້ປຸງແຕ່ງໄມ້ອີກທີ່ມີການຮັບຮອງແລ້ວ ໃນຂະນະດຽວກັນກໍມີໄມ້ທ່ອນ ຊຶ່ງເປັນໄມ້ (yellow balau) ແລະໄມ້ (keruing) ຈາກປະເທດລາວນຳອີກ. ຕົວຢ່າງນີ້ສະແດງໃຫ້ເຫັນວ່າຄວາມຕ້ອງການດ້ານຕະຫລາດແມ່ນຕົວຂັບເຄື່ອນສຳຄັນທີ່ຜັກດັນໃຫ້ມີການຄ້າໄມ້ເຖື່ອນຈາກລາວ.

ລະຫວ່າງທີ່ລົງເຄື່ອນໄຫວສືບສວນໃນປີ 2010 ແລະປີ 2011 ນັ້ນ ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ບັນທຶກການໃຊ້ໄມ້ທ່ອນ (yellow balau) ແລະໄມ້ (keruing) ໂດຍໂຮງງານຕ່າງໆທີ່ຜະລິດເຟີນີເຈີຢູ່ໃນຫວຽດນາມ ທີ່ສະໜອງໃຫ້ຕະຫລາດສະຫະພາບເອີຣົບ. ໂຮງງານແຫ່ງໜຶ່ງຢູ່ກີຍັ່ງອ້າງວ່າໄດ້ຈັດສົ່ງເຟີນີເຈີທີ່ໃຊ້ຢູ່ນອກເຮືອນຊຶ່ງເຮັດດ້ວຍໄມ້ (yellow balau) ໄປໃຫ້ສອງບໍລິສັດອິຕາລີ ຊື່ Sea Ingross SRL and Di.Mo Commerciale SRL ເພື່ອນຳໄປແຈກຢາຍໃຫ້ແກ່ຮ້ານຂາຍຍ່ອຍຢູ່ໃນທ້ອງຖິ່ນ. ໜຶ່ງໃນບັນດາຊື່ເຄື່ອງໝາຍການຄ້າທີ່ອົງການສືບສວນດ້ານສິ່ງແວດລ້ອມສາກົນເຫັນຢູ່ທີ່ໂຮງງານແມ່ນ Cosmo ມີໄວ້ເພື່ອການສັ່ງຊື້ຢູ່ໃນເວບໄຊທ໌ໜຶ່ງຂອງອິຕາລີ. ອີກໂຮງງານໜຶ່ງຢູ່ກີຍັ່ງບອກວ່າ ຕົນໄດ້ສົ່ງເຟີນີເຈີໃຊ້ຢູ່ນອກເຮືອນເຮັດດ້ວຍໄມ້ (yellow balau) ຊຶ່ງໄດ້ມາຈາກລາວໄປທາງເຮືອໃຫ້ຮ້ານຢູ່ໂປໂລຍ ຊຶ່ງແມ່ນ Leroy Merlin ພໍ່ຄ້າຂາຍຍ່ອຍເປັນເຈົ້າຂອງ. ໂຮງງານສອງແຫ່ງນີ້ຍັງສົ່ງເຟີນີເຈີທີ່ເຮັດດ້ວຍໄມ້ (keruing) ໄປໃຫ້ລູກຄ້າຢູ່ປະເທດເກົາຫລີແລະແຟງລອງນຳອີກ.

ຜະລິດຕະພັນໄມ້ (yellow balau) ຊຶ່ງເຮັດຈາກໄມ້ທ່ອນທີ່ໄດ້ຈາກປະເທດລາວນັ້ນຍັງເຂົ້າໄປຢູ່ໃນຕະຫລາດອາເມຣິການຳອີກ. ຈາກ

ການວິເຄາະຂໍ້ມູນດ້ານການຄ້າຂອງອົງການສືບສວນດ້ານສິ່ງແວດລ້ອມສາກົນເປີດເຜີຍໃຫ້ຮູ້ວ່າ ຜູ້ຜະລິດເຟີນີເຈີຢູ່ທີ່ກີຍັ່ງໄດ້ນຳໃຊ້ໄມ້ທ່ອນ (yellow balau) ຈາກປະເທດລາວ ເຮັດເຟີນີເຈີໃຊ້ຢູ່ນອກເຮືອນສົ່ງອອກໃຫ້ພວກລູກຄ້າຢູ່ສະຫະລັດອາເມຣິກາ. ໜຶ່ງໃນຈຳນວນຜູ້ຊື້ແມ່ນ Oxford Garden ຢູ່ລັດເຄັນຕັກກີ ມີເວບໄຊດ໌ຂອງຕົນບອກວ່າເນັ້ນສະເພາະໃສ່ແຕ່ເຟີນີເຈີທີ່ເຮັດຈາກໄມ້ (yellow balau) ເທົ່ານັ້ນແລະຍັງເສີມອີກວ່າ "ພວກເຮົາໃຊ້ແຕ່ໄມ້ຄຸນນະພາບດີ ແລະພວກເຮົາກໍບໍ່ຂໍ້ຖີ່ກັບມັນ". ຜູ້ຜະລິດຫວຽດນາມຍັງໄດ້ສົ່ງຜະລິດຕະພັນທີ່ເຮັດດ້ວຍໄມ້ (yellow balau) ໄປໃຫ້ບໍລິສັດ International Caravan Inc. ຊຶ່ງຢູ່ Fort Worth ນຳອີກ.

## ວັດຖຸດິບເປັນໄມ້ທ່ອນ

ບັນດາບໍລິສັດຫວຽດນາມທີ່ຄ້າໄມ້ທ່ອນຂອງລາວຍັງຈັດສົ່ງໃຫ້ຜູ້ຊື້ຄືນຕ່າງປະເທດແລະຜູ້ທີ່ເຮັດໄມ້ແປຮູບຢູ່ພາຍໃນປະເທດນຳ. ຕົວຢ່າງບໍລິສັດໄນສ໌ວູດທີ່ຕັ້ງຢູ່ຮ່າໂນ້ຍໄດ້ຈັດສົ່ງໄມ້ທ່ອນຂອງລາວໄປອິນເດຍແລະຈີນ. ການຊອກຄົ້ນທາງອິນເຕີເນັດເປີດເຜີຍໃຫ້ຮູ້ວ່າ ມີການຄ້າໄມ້ລາວລະຫວ່າງປະເທດຢ່າງຫລວງຫລາຍ ຕົວຢ່າງໃນປີ 2010 ບໍລິສັດຫວຽດ ອັນ ວູດຈຳກັດ ຂອງຫວຽດນາມ Viet Anh Wood Co Ltd ໄດ້ສົ່ງທັງໄມ້ທ່ອນ (yellow balau) ແລະໄມ້ (keruing) ຈາກປະເທດລາວອອກຂາຍໄປຕ່າງປະເທດເດືອນລະ 20,000 ແມັດກ້ອນ. ບັນດາຜູ້ຄ້າຈາກປະເທດອາຊີອື່ນໆທັງຫລາຍຕ່າງກໍພາກັນລ້ຳລອຍຈາກປ່າໄມ້ຂອງປະເທດລາວ ເປັນຕົ້ນແມ່ນບໍລິສັດສິງກະໂປ, ອິນເດຍແລະຈີນກໍຍັງກ່ຽວຂ້ອງກັບການຄ້າໄມ້ທ່ອນຂອງລາວ.




ໄມ້ທ່ອນຈາກລາວ ຢູ່ທ່າເຮືອກີຍັ່ງ ຫວຽດນາມ ປີ 2010.

© EIA

## ທຸລະກິດໄມ້ດູ່

**ນອກຈາກຄ້າຊະນິດໄມ້ທີ່ມີບໍລິມາດຫລາຍແລະລາຄາປານກາງ ເຊັ່ນ ໄມ້ (yellow balau) ແລະໄມ້ (keruing) ຈາກປະເທດລາວແລ້ວ ຍັງມີຕະຫລາດມືດໃນການຄ້າ 'ໄມ້ທີ່ມີຄຸນຄ່າ' ແລະມີລາຄາແພງນຳອີກ.**

ຊະນິດໄມ້ໃນລະດັບນີ້ປະກອບດ້ວຍໄມ້ດູ່ສະຫຍາມ, ຊຶ່ງເປັນທີ່ຮູ້ຈັກກັນທົ່ວໄປຕາມຊື່ພາສາຈີນວ່າ ຮ່ວງຮົ່ວລີ (huanghuali) ແລະໄມ້ກໍາພີ້. ຢູ່ໃນປະເທດລາວມີການຫ້າມຕັດແລະຄ້າຂາຍໄມ້ຊະນິດເຫລົ່ານີ້. ແຕ່ບັນດານັກຄ້າໄມ້ກໍຍັງເພີ່ມທະວີແນໃສ່ຄ້າໄມ້ຊະນິດທີ່ເປັນໄມ້ດູ່ຊຶ່ງ 'ບໍ່ແມ່ນໄມ້ພື້ນເມືອງ' ເຊັ່ນໄມ້ດູ່ narra padauk ແລະ makha. ໃນທີ່ນີ້ຄຳວ່າ 'ໄມ້ດູ່' ໝາຍເຖິງການລວມເອົາໄມ້ສອງຊະນິດທີ່ກ່າວມາຂ້າງເທິງມາລວມເຂົ້າກັນ.

ໃນເດືອນເມສາ ປີ 2011 ອົງການສືບສວນດ້ານສິ່ງແວດລ້ອມສາກົນໄດ້ມີໂອກາດພົບປະກັບ ທ່ານ ຊີ ຣົງຈຽງ Xie Rongjian ຫົວໜ້າບໍລິສັດ ດີເຊິ່ງຮັ່ງ (De Sheng Hang) ຢູ່ທີ່ກວາງໂຈ ແຕ່ມາເຄື່ອນໄຫວຢູ່ລາວ. ທ່ານ ຊີ ອ້າງວ່າບໍລິສັດຂອງຕົນແມ່ນໜຶ່ງໃນນັກຄ້າໄມ້ດູ່ລາຍໃຫຍ່ທີ່ສຸດ ຢູ່ໃນປະເທດລາວ ລາວມີທີມງານທີ່ມີພະນັກງານເປັນຄົນຈີນອອກຄົ້ນຫາໄມ້ດູ່ທົ່ວປະເທດລາວ. ຊະນິດໄມ້ສຳຄັນສອງຢ່າງທີ່ລາວຄ້າ ໄດ້ແກ່ໄມ້ດູ່ສະຫຍາມແລະໄມ້ດູ່ narra padauk ຊຶ່ງມີແຫລ່ງທີ່ມາຈາກປະເທດລາວແລະກຳປູເຈຍ.

ໃນການເຮັດທຸລະກິດເກືອບວ່າໜຶ່ງສະຕະວັດຢູ່ໃນປະເທດລາວ ທ່ານ ຊີໄດ້ເຫັນການຫລຸດໜ້ອຍລົງຢ່າງສິ້ນເຊີງໃນການສະໜອງໄມ້ດູ່ໃຫ້ຕະຫລາດ. ລາວເວົ້າວ່າການທີ່ເປັນເຊັ່ນນີ້ ກໍຍ້ອນລາຄາແພງເກີນໄປທີ່ຜູ້ບໍລິໂພກຈ່າຍສຳລັບວັດຖຸດິບແລະຜະລິດຕະພັນສຳເລັດຮູບຢູ່ໃນປະເທດຈີນນັ້ນເອງ. ລາວຍອມຮັບວ່າ "ຊະນິດໄມ້ໝົດແລ້ວ... ຍັງເຫລືອພຽງແຕ່ຫ້າປີເທົ່ານັ້ນທີ່ຈະທຳການຄ້າຢູ່ (ຢູ່ໃນປະເທດລາວ)". ການສະໜອງໄມ້ດູ່ໃຫ້ບໍ່ພຽງພໍທີ່ທ່ານ ຊີຈະສົ່ງຄົນເດີນທາງໄປທົ່ວປະເທດ ຖ້າຊອກໄມ້ທ່ອນໃຫ້ໄດ້ພຽງແຕ່ສອງສາມແມັດກ້ອນເທົ່ານັ້ນ. ທ່ານ ຊີບໍ່ໄດ້ດຳເນີນການຕັດໄມ້ອີກແລ້ວ ມີແຕ່ຊື້ໄມ້



© EIA

ທ່ອນຈາກໂຮງຊອຍຢູ່ໃນທ້ອງຖິ່ນແລະນັກຄ້າໄມ້ ຊຶ່ງຜັດປ່ຽນກັນໄປຫາເກັບຊື້ນຳພວກຊາວບ້ານ.

ທ່ານ ຊີເປີດເຜີຍວ່າໂດຍປົກກະຕິແລ້ວຈະມີການລຳລຽງໄມ້ດູ່ຂ້າມໄປຫວຽດນາມ ໂດຍຜ່ານດ່ານນ້ຳພ້າວ - ກາວແຈວ ແລະດ່ານເຄຊານ - ລາວບາວ. ເມື່ອໄປຮອດຫວຽດນາມ ໄມ້ທ່ອນເຫລົ່ານີ້ຈະຖືກຂົນສົ່ງໄປທ່າໄຮ່ຟອງແລະດານັ້ງ ເພື່ອນຳເຂົ້າຕູ້ສິນຄ້າແລ້ວຈັດສົ່ງໄປຈີນ.

ຕະຫລາດສຸດທ້າຍຂອງໄມ້ດູ່ແມ່ນການຜະລິດເຟີນີເຈີແບບພື້ນເມືອງຢູ່ໃນຈີນ. ເມື່ອເວົ້າເຖິງຄຸນຄ່າເພີ່ມຂຶ້ນຂອງໄມ້ດູ່ ທ່ານ ຊີ ເວົ້າວ່າລາວຊື້ໄມ້ດູ່ຢູ່ໃນປະເທດລາວພຽງແຕ່ບໍ່ເທົ່າໃດຮ້ອຍໂດລາ ແຕ່ສາມາດເອົາໄມ້ເຫລົ່ານີ້ໄປຂາຍຢູ່ປະເທດຈີນໄດ້ປະມານ 50,000 ໂດລາຕໍ່ແມັດກ້ອນ. ລາວຍັງເວົ້າເສີມອີກວ່າລາຄາວັດຖຸດິບຢູ່ໃນຈີນຂຶ້ນຫລາຍເປັນ 30 ເທົ່າຕົວຂອງມູນຄ່າ 10 ປີຜ່ານມາ.

# ນະໂຍບາຍລະຫວ່າງປະເທດ ກ່ຽວກັບການຄຸ້ມຄອງປ່າໄມ້



ລົດບັນທຸກໄມ້ທ່ອນແລ່ນມຸ່ງໜ້າໄປຊາຍແດນຫວຽດນາມ ຢູ່ແຂວງອັດຕະປືຂອງລາວ ປີ 2010.

© EIA

ຕະຫລອດທົດສະວັດທີ່ຜ່ານມາ ການຕັດໄມ້ທີ່ຜິດກົດໝາຍແລະການຄ້າທີ່ກ່ຽວຂ້ອງກັບໄມ້ນັ້ນ ເປັນເລື່ອງທີ່ຮັບຮູ້ທົ່ວໂລກວ່າແມ່ນຕົວຂັບເຄື່ອນສຳຄັນໃນການເລັ່ງໃຫ້ມີການຕັດໄມ້ທຳລາຍປ່າ. ມີສິ່ງຢັ້ງຢືນຢ່າງແທ້ຈິງວ່າ ຄວາມຕ້ອງການຜະລິດຕະພັນໄມ້ລາຄາຖືກຢູ່ໃນຕະຫລາດບໍລິໂພກລາຍໃຫຍ່ ເຊັ່ນສະຫະພາບເອີຣົບແລະອາເມຣິການັ້ນ ແມ່ນຕົວຂັບເຄື່ອນສຳຄັນທີ່ເລັ່ງໃຫ້ມີການຕັດໄມ້ຢ່າງຜິດກົດໝາຍ ນຳໄປສູ່ການອອກນະໂຍບາຍໃໝ່ ໂດຍສະເພາະບໍ່ໃຫ້ເອົາໄມ້ເຖື່ອນ ເຊັ່ນໄມ້ທ່ອນຈາກລາວທີ່ຖືກລັກລອບເອົາເຂົ້າໄປໃນຫວຽດນາມນັ້ນ ເຂົ້າໄປຢູ່ໃນຕະຫລາດເຫລົ່ານີ້ເປັນອັນຂາດ.

## ກົດໝາຍບັງຄັບກ່ຽວກັບປ່າໄມ້, ການບໍລິຫານຄຸ້ມຄອງແລະການຄ້າຂອງສະຫະພາບເອີຣົບ (EU FLEGT)

ຍ້ອນຮັບຮູ້ເຖິງຜົນກະທົບຮ້າຍແຮງຈາກການຕັດໄມ້ຢ່າງຜິດກົດໝາຍ ແລະບິດບາດດ້ານການຕະຫລາດຂອງມັນ ສະຫະພາບເອີຣົບຈຶ່ງໄດ້ສ້າງແຜນປະຕິບັດເລື່ອງກົດໝາຍບັງຄັບກ່ຽວກັບປ່າໄມ້, ການບໍລິຫານຄຸ້ມຄອງແລະການຄ້າຂຶ້ນມາໃນປີ 2003. ແຜນປະຕິບັດນີ້ຊອກຫາທິດທາງແກ້ໄຂການຕັດໄມ້ທີ່ຜິດກົດໝາຍ ເລີ່ມຈາກການຜະລິດແລະການບໍລິໂພກຊຶ່ງເປັນບ່ອນສິ້ນສຸດຂອງການຄ້າໄມ້. ເສົາຫລັກສຳຄັນສອງອັນຂອງແຜນນີ້ແມ່ນກົດລະບຽບກ່ຽວກັບໄມ້ແລະຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA).

ໃນທີ່ສຸດກໍມີການບັນລຸຂໍ້ຕົກລົງກັນໄດ້ໃນເດືອນກໍລະກົດ ປີ 2010, ເປັນຄັ້ງທຳອິດທີ່ມີກົດລະບຽບຫ້າມບໍ່ໃຫ້ເອົາໄມ້ທີ່ຜິດກົດໝາຍເຂົ້າມາໃນຕະຫລາດສະຫະພາບເອີຣົບ. ອັນນີ້ໝາຍຄວາມວ່າ ຜູ້ທີ່ເລີ່ມນຳໄມ້ເຖື່ອນເຂົ້າມາສະຫະເອີຣົບສາມາດຖືກດຳເນີນຄະດີໄດ້. ກົດລະບຽບນີ້ຍັງບັງຄັບໃຫ້ບໍລິສັດຕ່າງໆສ້າງຄວາມໄວ້ເນື້ອເຊື່ອໃຈ ດ້ວຍການຫລີກລ່ຽງຄ້າຂາຍໄມ້ເຖື່ອນຢ່າງຂະຫຍັນຂັນແຂງ.

ເມື່ອກົດລະບຽບນີ້ມີຜົນບັງຄັບໃຊ້ໃນເດືອນມີນາ ປີ 2013, ບັນດາຜູ້ຊື້ໄມ້ແລະຜະລິດຕະພັນໄມ້ຢູ່ສະຫະພາບເອີຣົບ ຈະໄດ້ຮັບຫລັກຖານຢັ້ງຢືນຈາກຜູ້ຂາຍວ່າໄມ້ຖືກຕັດມາແລະຊື້ຂາຍກັນຢ່າງຖືກຕ້ອງຕາມກົດໝາຍ. ອີງຕາມລະບົບດັ່ງກ່າວນີ້ ບັນດາຜູ້ສົ່ງອອກຂອງຫວຽດນາມ ຊຶ່ງໃຊ້ໄມ້ເປັນວັດຖຸດິບຈາກປະເທດລາວ ຈະມີຄວາມສ່ຽງສູງທີ່ຈະຖືກປັບໃໝໃສ່ໂທດ. ແຜນປະຕິບັດເລື່ອງກົດໝາຍບັງຄັບກ່ຽວກັບປ່າໄມ້, ການບໍລິຫານຄຸ້ມຄອງແລະການຄ້າຖືກອອກແບບມາເພື່ອຊ່ວຍບັນດາປະເທດຜູ້ຜະລິດກວດສອບເບິ່ງວ່າຜະລິດຕະພັນໄມ້ຂອງພວກຕົນນັ້ນຖືກຕ້ອງຕາມກົດໝາຍບໍ່ ແລະເພື່ອຮັບປະກັນໃຫ້ມີພຽງແຕ່ຜະລິດຕະພັນໄມ້ທີ່ສະແດງໃຫ້ເຫັນວ່າຖືກຕ້ອງຕາມກົດໝາຍເທົ່ານັ້ນ ຈຶ່ງຈະສາມາດສົ່ງອອກໄປສະຫະພາບເອີຣົບໄດ້.

ອີງຕາມຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA) ນັ້ນ, ຈະມີການອອກໃບຮັບຮອງໃຫ້ແກ່ບໍລິສັດທີ່ໄດ້ຮັບການພິສູດແລ້ວວ່າໄດ້ປະຕິບັດຕາມລະບົບສ້າງຄວາມໝັ້ນໃຈວ່າໄມ້ມີທີ່ມາຢ່າງຖືກຕ້ອງຕາມກົດໝາຍ Timber Legality Assurance System (TLAS) ຫລື 'ມາດຕະຖານດ້ານຄວາມຖືກຕ້ອງຕາມກົດໝາຍ' - ເປັນກົດໝາຍໝວດໜຶ່ງຄຸ້ມຄອງການຄ້າໄມ້ ຊຶ່ງໄດ້ຕົກລົງເຫັນດີນຳກັນ ຂະນະທີ່ມີການເຈລະຈາກັນລະຫວ່າງປະເທດທີ່ເຂົ້າຮ່ວມ ຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານກັນແບບສະໝັກໃຈກັບສະຫະພາບເອີຣົບ. ມາດຕະຖານດ້ານຄວາມຖືກຕ້ອງຕາມກົດໝາຍແບບນີ້ຈຳເປັນຕ້ອງກວມເອົາໄມ້ທຸກຢ່າງ ບໍ່ວ່າຈະເປັນໄມ້ທີ່ຜະລິດຢູ່ພາຍໃນປະເທດ ຫລືປະເທດທີ່ເປັນເພື່ອນຮ່ວມງານກັນນຳເຂົ້າມາກໍຕາມ. ກໍລະນີຂອງຫວຽດນາມ ບໍລິສັດໜຶ່ງຊຶ່ງຢາກໄດ້ໃບຢັ້ງຢືນຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA) ສຳລັບເຟີນີເຈີທີ່ຜະລິດຈາກໄມ້ທີ່ນຳເຂົ້າມາຈາກລາວນັ້ນ ຈຳເປັນຕ້ອງສາມາດສະແດງໃຫ້ເຫັນເຖິງການປະຕິບັດຕາມກົດໝາຍຂອງທັງຂອງຫວຽດນາມແລະຂອງລາວນຳ. ທັງສອງປະເທດນີ້ຕ້ອງສະແດງຄວາມສົນໃຈໃນການເຈລະຈາເລື່ອງຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA) ກັບສະຫະພາບເອີຣົບ.

ອົງປະກອບສຳຄັນຂອງການເຈລະຈາເລື່ອງຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA) ແມ່ນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍຫລາຍປະເພດ ນັບຕັ້ງແຕ່ຊຸມຊົນຢູ່ໃນທ້ອງຖິ່ນ, ກຸ່ມອົງກອນພາກປະຊາຊົນໄປຈົນຮອດຜູ້ຕາງໜ້າອຸດສາຫະກຳໄມ້ແລະອົງການທີ່ກ່ຽວຂ້ອງຂອງລັດຖະບານ. ຢູ່ຫວຽດນາມມີການຕັ້ງໜ່ວຍສະເພາະກິດຂຶ້ນມາໃນເດືອນ ຕຸລາ ປີ 2010 ເພື່ອເຮັດວຽກກ່ຽວກັບການປະຕິບັດຕາມລະບົບສ້າງຄວາມໝັ້ນໃຈວ່າ ໄມ້ມີທີ່ມາຖືກຕ້ອງຕາມກົດໝາຍ

ແລະການເຈລະຈາຢ່າງເປັນທາງການກັບສະຫະພາບເອີຣົບ ກໍໄດ້ເລີ່ມຕົ້ນຂຶ້ນໃນເດືອນຕໍ່ມາ. ປະເທດລາວຍັງສ້າງກົນໄກເພື່ອລິເລີ່ມວຽກເຮັດຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA). ໃນເດືອນມີນາ ປີ 2011 ເຈົ້າໜ້າທີ່ປ່າໄມ້ທັງສອງປະເທດໄດ້ເຮັດວຽກເລື່ອງບັນຫາຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA) ຢູ່ທີ່ຮ່າໂນ້ຍ ແລະປຶກສາຫາລືກັນເຖິງຄວາມຈຳເປັນຕ້ອງປັບປຸງລະບົບການຕິດຕາມໄມ້ຢ່າງຖືກຕ້ອງຕາມກົດໝາຍ.[47] ສະແດງໃຫ້ເຫັນຊັດເຈນແລ້ວວ່າ ຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA) ໃດໆ ບໍ່ວ່າຈະເປັນຫວຽດນາມຫລືລາວກໍຕາມ ຈະຕ້ອງແກ້ໄຂບັນຫາການຄ້າໄມ້ທ່ອນຢ່າງຜິດກົດໝາຍທີ່ພວມດຳເນີນຢູ່ລະຫວ່າງສອງປະເທດນີ້.

## ບັນຍັດ ເລໄຊຍ໌ ຂອງສະຫະລັດອາເມຣິກາ

ໃນປີ 2008 ສະພາຄອນແກຼສຂອງສະຫະລັດອາເມຣິກາໄດ້ດັດແກ້ບົດບັນຍັດເລໄຊຍ໌ ເພື່ອເອົາພືດແລະຜະລິດຕະພັນຈາກພືດເຂົ້ານຳເປັນການເສີມຂະຫຍາຍຂອບເຂດໃຫ້ມີປະສິດທິຜົນ ກວມເຖິງໄມ້ແລະຜະລິດຕະພັນໄມ້ທີ່ນຳເຂົ້າມາແລະຄ້າຂາຍກັນຢູ່ພາຍໃນຕະຫລາດສະຫະລັດອາເມຣິກາ. ການດັດແກ້ບັນຍັດເລໄຊຍ໌ ມີຜົນບັງຄັບວ່າການນຳເອົາໄມ້ທີ່ຜິດກົດໝາຍເຂົ້າມາ ຫລືການຄ້າໄມ້ທີ່ຜິດກົດໝາຍກໍດີ ຖືວ່າເປັນການລະເມີດບົດບັນຍັດຂໍ້ນີ້. ການປັບໄໝໃສ່ໂທດຂອງຜູ້ທີ່ຝ່າຝືນບົດບັນຍັດຂໍ້ນີ້ ມີຕັ້ງແຕ່ການຍຶດເອົາໄມ້ທີ່ຈັດສົ່ງໄປເຖິງຕັດສິນຈຳຄຸກ. ບົດບັນຍັດນີ້ຍັງມີການຮຽກຮ້ອງໃຫ້ບັນດາຜູ້ນຳສິນຄ້າເຂົ້າມາ ຕ້ອງແຈ້ງລາຍການຊະນິດໄມ້ຢູ່ໃນຜະລິດຕະພັນນັ້ນແລະໃຫ້ລະບຸປະເທດບ່ອນທີ່ຕັດໄມ້ນັ້ນ. ບໍລິສັດຂອງສະຫະລັດອາເມຣິກາ ທີ່ນຳຜະລິດຕະພັນໄມ້ທີ່ຜະລິດຢູ່ຫວຽດນາມ ຊຶ່ງໄດ້ໄມ້ທ່ອນຂ້າມຊາຍແດນມາຈາກປະເທດລາວນັ້ນມີທ່າອ່ຽງທີ່ຈະລະເມີດບົດບັນຍັດເລໄຊຍ໌ກໍເປັນໄດ້.

## ການຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວຈາກການຕັດໄມ້ທຳລາຍປ່າແລະການເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+)

ຄິດວ່າການຕັດໄມ້ທຳລາຍປ່າ ປ່ອຍອາຍພິດຂຶ້ນໄປໃນອາກາດຢູ່ທົ່ວໂລກເຖິງ 20 ເປີເຊັນ ຈຶ່ງເກີດມີໂຄງການເພື່ອຫລຸດຜ່ອນການປ່ອຍອາຍພິດ ຍ້ອນສາເຫດການຕັດໄມ້ທຳລາຍປ່າແລະເຮັດໃຫ້ປ່າເສື່ອມໂຊມ (REDD+) ຊຶ່ງກຳລັງມີການເຈລະຈາກັນຢູ່ໃນການສົນທະນາແລກປ່ຽນກັນກ່ຽວກັບການປ່ຽນແປງຂອງດິນຟ້າອາກາດຂອງອົງການສະຫະປະຊາຊາດແລະມີການທົດລອງກັນຢູ່ຫລາຍປະເທດ.

ທັງປະເທດລາວແລະຫວຽດນາມໄດ້ເຂົ້າຮ່ວມໃນການວາງນະໂຍບາຍຂອງ (REDD+) ແລະໂຄງການທົດລອງ. ເມື່ອ (REDD+) ໃຫ້ໂອກາດທີ່ຈະສ້າງພື້ນຖານທີ່ຍືນຍົງຫລາຍຂຶ້ນຢູ່ໃນສອງປະເທດນີ້ ແລະໃຫ້ລາງວັນຕອບແທນທາງດ້ານການເງິນຈາກການປະຕິບັດ ຈຶ່ງເປັນສິ່ງຊັດເຈນວ່າ ທັງການຕັດໄມ້ແລະການຄ້າໄມ້ທີ່ຜິດກົດໝາຍລະຫວ່າງສອງປະເທດນີ້ເປັນສິ່ງອັນຕະລາຍ (REDD+) ຢູ່ໃນພາກສ່ວນນີ້ໃນຂົງເຂດແມ່ນ້ຳຂອງ.

ທີ່ຈິງແລ້ວ ຄຳເຕືອນນີ້ໄດ້ສະແດງອອກມາໃຫ້ເຫັນຢູ່ໃນການສຶກສາ ປີ 2009 ເມື່ອການຕັດໄມ້ທຳລາຍປ່າຂອງຫວຽດນາມໄດ້ເຄື່ອນຍ້າຍເຂົ້າມາໃນປະເທດເພື່ອນບ້ານເຊັ່ນ ລາວ ດ້ວຍການນຳໄມ້ເຂົ້າມາຢ່າງຜິດກົດໝາຍ. ການສຶກສາພົບວ່າ ເມື່ອລວມເອົາການຕັດໄມ້ທີ່ມີການຄວບຄຸມຢູ່ພາຍໃນຫວຽດນາມແລະຂະແໜງເຟີນີເຈີທີ່ກຳລັງແຜ່ຂະຫຍາຍແລ້ວ ແຕ່ລະປີຈະມີໄມ້ລະຫວ່າງ 1.7 ແລະ 3.5 ລ້ານແມັດກ້ອນທີ່ເຄື່ອນຍ້າຍມາຕັດຢູ່ຕ່າງປະເທດເປັນເວລາ 20 ປີແລ້ວ. ຍັງມີການຄາດຄະເນອີກວ່າໄມ້ທີ່ຫວຽດນາມນຳເອົາເຂົ້າມາເກືອບ 50 ເປີເຊັນເປັນໄມ້ທີ່ມາຈາກແຫລ່ງທີ່ຜິດກົດໝາຍ.

ປາຕຼິກ ເມຟຼອຍ (Patrick Meyfroidt) ຫົວໜ້າທີມຂຽນບົດລາຍງານນີ້ບອກວ່າ "ຄວາມພະຍາຍາມໃນການຄວບຄຸມການຕັດໄມ້ທຳລາຍປ່າ, ການຕັດໄມ້ທີ່ຜິດກົດໝາຍແລະການຄ້າໄມ້ ຈຳເປັນຕ້ອງມີການປະສານງານກັນໃນລະດັບລະຫວ່າງປະເທດ… ລະຫວ່າງແຫລ່ງທີ່ມາຂອງໄມ້ ຄື ລາວ, ກຳປູເຈຍແລະມຽນມາກັບສູນການປຸງແຕ່ງໄມ້ຄືຫວຽດນາມ". ບໍ່ຄ່ອຍມີ ແຕ່ຕາມວິໄສທັດທີ່ໄດ້ຮັບລາຍງານມາກ່ຽວກັບຄວາມເປັນຈິງເລື່ອງການຄ້າຢູ່ໃນໂລກນີ້ ລາວຍັງເສີມອີກວ່າ "ປະເທດທີ່ບໍລິໂພກຜະລິດຕະພັນຂອງຫວຽດນາມ, ປະເທດຫວຽດນາມທີ່ນຳໄມ້ຜິດກົດໝາຍເຂົ້າມາ, ແລະບັນດາປະເທດຊຶ່ງເປັນແຫລ່ງທີ່ມາຂອງໄມ້ ບ່ອນທີ່ຜູ້ຕັດໄມ້ຜິດກົດໝາຍມັກສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ຕ້ອງຮັບຜິດຮ່ວມກັນເລື່ອງການທີ່ຫວຽດນາມໄດ້ຍ້າຍການຕັດໄມ້ທຳລາຍປ່າເຂົ້າໄປໃນປະເທດເພື່ອນບ້ານແລະໄດ້ປ່ອຍອາຍພິດຂຶ້ນສູ່ອາກາດ.[49]



ສະຫະລັດອາເມຣິກາແລະສະຫະພາບເອີຣົບແມ່ນຕະຫລາດໃຫຍ່ທີ່ສຸດສຳລັບເຟີນີເຈີຂອງຫວຽດນາມ.

© EIA

# ຂໍ້ສະເໜີ

ຂະໜາດແລະຄວາມຄືງຢູ່ຂອງການຄ້າໄມ້ເຖື່ອນລະຫວ່າງລາວແລະຫວຽດນາມແມ່ນຕົວຢ່າງທີ່ຊັດເຈນຂອງການຄຸ້ມຄອງປ່າທີ່ອ່ອນແອ. ນະໂຍບາຍຂອງລັດຖະບານລາວກ່ຽວກັບການເກືອດຫ້າມການສົ່ງໄມ້ທ່ອນອອກໄປນອກປະເທດນັ້ນ ມີຜູ້ຝ່າຝືນຢູ່ເປັນປະຈຳ ຊຶ່ງທຸກໆປີຈະມີໄມ້ທ່ອນຫລາຍຮ້ອຍພັນແມັດກ້ອນຖືກລຳລຽງອອກໄປຊາຍແດນ. ການກວດກາຢ່າງມີຄວາມໝາຍແລະກົດລະບຽບໃນການດຳເນີນການຕັດໄມ້ຢູ່ປະເທດລາວນັ້ນບໍ່ມີຢູ່ເລີຍຕາມຄວາມເປັນຈິງ.

ເປັນຜົນເຮັດໃຫ້ການສໍ້ລາດບັງຫລວງໃນຂະແໜງປ່າໄມ້ແຜ່ລະບາດ. ການໃຫ້ໂກຕ້າໃນການຕັດໄມ້ດຳເນີນໄປໃນລັກສະນະປິດລັບ ໂດຍໃຫ້ແຕ່ບຸກຄົນແລະບໍລິສັດທີ່ມີເສັ້ນມີສາຍ ລວມທັງກອງທັບຫວຽດນາມ. ການຊື້ຈ້າງຈອບອອຍເຈົ້າໜ້າທີ່ແມ່ນການໃຊ້ຈ່າຍເປັນປະຈຳ ທາງດ້ານທຸລະກິດ.

ການຄ້າໄມ້ທ່ອນຂ້າມຊາຍແດນຢ່າງຫລວງຫລາຍພາຍມາກໄດ້ສະໜອງໄມ້ໃຫ້ແກ່ພາກອຸດສາຫະກຳປຸງແຕ່ງໄມ້ທີ່ກຳລັງຂະຫຍາຍຕົວຢ່າງບໍ່ເຄີຍມີມາກ່ອນຂອງຫວຽດນາມ. ລາຍໄດ້ຈາກຂະແໜງນີ້ ຄາດວ່າມີເຖິງ 4 ຕື້ໂດລາໃນ ປີ 2011 ແລະລັດຖະບານວາງແຜນຈະໃຫ້ລາຍຮັບນີ້ເພີ່ມຂຶ້ນເປັນສອງເທົ່າໃນປີ 2020. ໃນຂະນະດຽວກັນອຸດສາຫະກຳຂະໜາດນ້ອຍຢູ່ໃນປະເທດລາວບໍ່ສາມາດຊອກວັດຖຸດິບມາປ້ອນໄດ້ຢ່າງພຽງພໍ.

ຜົນກະທົບຈາກການຂຸດຄົ້ນໄມ້ຈາກປ່າຫລາຍເກີນໄປ ໂດຍບໍ່ມີການຄວບຄຸມຢູ່ໃນລາວນັ້ນ ສະແດງໃຫ້ເຫັນຢ່າງຈະແຈ້ງຢູ່ເຂດທີ່ມີຄວາມເສຍຫາຍ ຄືແຂວງອັດຕະປື ຢູ່ທາງພາກໃຕ້ຂອງປະເທດ. ໃນປີ 2008 ມີໄມ້ທ່ອນຫລາຍກວ່າ 200,000 ແມັດກ້ອນ ຜ່ານປ້ອມຊາຍແດນທີ່ເຊື່ອມຕໍ່ອັດຕະປືກັບຫວຽດນາມ. ລະຫວ່າງປີ 2002 ຫາປີ 2010 ພາກໃຕ້ຂອງລາວສູນເສຍເນື້ອທີ່ປ່າໄມ້ຂອງຕົນເອງໄປເກົ້າເປີເຊັນ ເປັນຜົນກະທົບຕໍ່ການທຳມາຫາກິນຂອງປະຊາຊົນຢູ່ໃນທ້ອງຖິ່ນແລະຊີວະນາໆພັນ.

ລັດຖະບານລາວແລະຫວຽດນາມຈຳເປັນຕ້ອງແກ້ໄຂບັນຫານີ້ຢ່າງຮີບດ່ວນ ແລະປິດຊາຍແດນນີ້ບໍ່ໃຫ້ມີການຄ້າໄມ້ເຖື່ອນ. ເນື່ອງຈາກວ່າຫວຽດນາມໄດ້ເຄື່ອນຍ້າຍການຕັດໄມ້ທຳລາຍປ່າຢ່າງໄດ້ຜົນມາແລ້ວຈາກເຂດຊາຍແດນຂອງຕົນເຂົ້າໄປໃນປະເທດເພື່ອນບ້ານ ຄືລາວ ດັ່ງນັ້ນການເຈລະຈາເລື່ອງ (REDD+) ກັບຫວຽດນາມຕ້ອງບັນຈຸເອົາການປະເມີນກ່ຽວກັບການຮົ່ວໄຫລຂອງໄມ້ທ່ອນຢູ່ໃນຂົງເຂດນີ້ຢ່າງຈິງຈັງ. ການທີ່ທັງສອງປະເທດສະແດງຄວາມສົນໃຈໃນການເຈລະຈາເລື່ອງຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA) ກັບສະຫະພາບເອີຣົບນັ້ນ ຈະເປັນພື້ນຖານໃຫ້ແກ່ການແກ້ໄຂບັນຫາເຫລົ່ານີ້. ເມື່ອເຖິງເວລາລົງມືປະຕິບັດຕາມຄວາມຮຽກຮ້ອງ ບັນດາຜູ້ບໍລິໂພກຄວນຫລີກເວັ້ນການຊື້ຜະລິດຕະພັນໄມ້ຈາກຫວຽດນາມ ຊຶ່ງເຮັດດ້ວຍໄມ້ທ່ອນທີ່ຜິດກົດໝາຍທີ່ນຳເຂົ້າມາຈາກປະເທດລາວ.

## ລັດຖະບານລາວຄວນ:

- ປະຕິບັດການເກືອດຫ້າມໃນການສົ່ງໄມ້ທ່ອນຂອງຕົນອອກນອກປະເທດ
- ພິມເຜີຍແຜ່ລາຍລະອຽດທຸກຢ່າງກ່ຽວກັບໂກຕ້າການຕັດໄມ້ແລະການດຳເນີນການຄັດເລືອກ
- ເຮັດໃຫ້ກົດລະບຽບໃນການປ່ຽນດິນປ່າມາເປັນການປູກໄມ້ອຸດສາຫະກຳມີຄວາມຊັດເຈນ

## ລັດຖະບານຫວຽດນາມຄວນ:

- ເຄົາລົບນະໂຍບາຍຂອງລັດຖະບານລາວດ້ວຍການຂັດຂວາງບໍ່ໃຫ້ນຳເອົາໄມ້ທ່ອນຈາກປະເທດລາວເຂົ້າມາ
- ຈັດໃຫ້ມີການປຶກສາຫາລືກັນສອງຝ່າຍກັບລັດຖະບານລາວກ່ຽວກັບການຄ້າໄມ້ເຖື່ອນລະຫວ່າງສອງປະເທດ
- ເຮັດວຽກກັບສະມາຄົມອຸດສາຫະກຳໄມ້ຂອງຫວຽດນາມ ເພື່ອບໍ່ໃຫ້ເອົາໄມ້ທ່ອນທີ່ຈັດສົ່ງມາໃຫ້ຢ່າງບໍ່ຖືກຕ້ອງຕາມກົດໝາຍຈາກປະເທດລາວ ເຂົ້າມາໃນພາກອຸດສາຫະກຳຂອງຕົນ.
- ບໍ່ໃຫ້ພາກທຸລະກິດຂອງກອງທັບດຳເນີນການຕັດໄມ້ຢູ່ໃນປະເທດລາວ.

## ສະຫະພາບເອີຣົບຄວນ:

- ຮັບປະກັນວ່າການປຶກສາຫາລືໃດໆເລື່ອງຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA) ກັບຫວຽດນາມແລະລາວນັ້ນ ໃຫ້ເວົ້າເຖິງການແກ້ໄຂບັນຫາການຄ້າໄມ້ທ່ອນລະຫວ່າງສອງປະເທດນີ້ໃຫ້ໄດ້
- ຮັບປະກັນໃຫ້ຜູ້ມີສ່ວນໄດ້ສ່ວນເສຍໝົດທຸກປະເພດໄດ້ເຂົ້າຮ່ວມການສົນທະນາໃດໆ ເລື່ອງຂໍ້ຕົກລົງກ່ຽວກັບການເປັນເພື່ອນຮ່ວມງານແບບສະໝັກໃຈ (VPA)
- ສົ່ງເສີມບົດຮຽນດ້ານການຄຸ້ມຄອງປ່າໄມ້ຈາກກົດໝາຍບັງຄັບກ່ຽວກັບປ່າໄມ້, ການບໍລິຫານຄຸ້ມຄອງແລະການຄ້າ (FLEGT) ເຂົ້າໃນການສ້າງ (REDD+) ໂດຍສະເພາະໃນເລື່ອງການເຄື່ອນຍ້າຍການຕັດໄມ້ທຳລາຍປ່າ

## ບັນດາບໍລິສັດແລະຜູ້ບໍລິໂພກຄວນ:

- ໃຫ້ມີສິ່ງພິສູດໄດ້ວ່າຜະລິດຕະພັນໄມ້ທີ່ມາຈາກຫວຽດນາມນັ້ນ ບໍ່ແມ່ນໄດ້ມາຈາກໄມ້ທ່ອນທີ່ນຳເຂົ້າມາຈາກປະເທດລາວ.




© EIA

# ເອກະສານອ້າງອີງ


1. ທະນາຄານໂລກ, ສະຖິຕິຂອງປະເທດ, 2008
2. ອົງການອາຫານແລະການກະເສດຂອງສະຫະປະຊາຊາດ, ການສຶກສາກ່ຽວກັບການເບິ່ງໄປຂ້າງໜ້າດ້ານການປ່າໄມ້ຂອງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ.
3. ວາລະສານ Asia Times, ຕົ້ນໄມ້ລົ້ມລົງຢູ່ໃນລາວ, ວັນທີ 5 ປີ 2000
4. ອົງການ WWF, ບໍລິໂພກອະນາຄົດ, ປີ 2007
5. ອົງການ FAO ຂອງສະຫະປະຊາຊາດ 2009 op cit
6. ການຕຽມຄວາມພ້ອມເພື່ອນໍາສະເໜີຂອງ ສ. ປ. ປ ລາວ, ເດືອນຕຸລາ ປີ 2010
7. ວາລະສານ Asia Times 2010 op cit
8. ແຜນງານກ່ຽວກັບສິ່ງແວດລ້ອມຂອງອົງການສະຫະປະຊາຊາດ, ສ. ປ. ປ ລາວ ບົດລາຍງານກ່ຽວກັບການປະເມີນດ້ານການປະຕິບັດຕໍ່ສິ່ງແວດລ້ອມໃນລະດັບຊາດ, ປີ 2006
9. ໜັງສືພິມ The Nation, ປະເທດລາວຈະເພີ່ມເນື້ອທີ່ປ່າໄມ້ຢູ່ໃນແຜນການ 5 ປີ, ເດືອນທັນວາ ວັນທີ 29 ປີ 2010
10. ວິທະຍຸເອເຊຍເສລີ, ມີເຈົ້າໜ້າທີ່ລາວຂະແໜງປ່າໄມ້ຮັບເງິນສິນບົນຫລາຍຂຶ້ນ ເພື່ອແລກປ່ຽນກັບການສໍາປະທານຕັດໄມ້ທີ່ຜິດກົດໝາຍ, ມັງກອນວັນທີ 27 ປີ 2010
11. ດັດສະນີຈາກການສັງເກດຄວາມໂປ່ງໃສຂອງການສໍ້ລາດບັງຫລວງລະຫວ່າງປະເທດ ປີ 2010
12. ແນ້ວໂນ້ມຂອງປ່າໄມ້, ໂກຕ້າ, ອໍານາດ, ຜູ້ມີອິດທິພົນແລະການຊອກກູ້ຢືມຢ່າງຜິດກົດໝາຍ, ປີ 2010
13. ຄໍາສັ່ງນາຍົກລັດຖະມົນຕີ ສ. ປ. ປ ລາວ ເລກທີ 18 ກ່ຽວກັບນະໂຍບາຍຄຸ້ມຄອງປ່າໄມ້, ປີ 2002
14. ໜັງສືພິມ Vientiane Times, ເຟີນີເຈີມີບັນຫາຍ້ອນຄວາມບໍ່ແນ່ນອນຂອງການສະໜອງໄມ້, ວັນທີ 11 ກຸມພາ ປີ 2011
15. ແນວໂນ້ມຂອງປ່າໄມ້, ຕະຫລາດແລະການຄ້າໄມ້ລະຫວ່າງລາວແລະຫວຽດນາມ ປີ 2009
16. ໜັງສືພິມ Vientiane Times, ໄມ້ທ່ອນຮົ່ວໄຫລຂ້າມຊາຍແດນ, ຈາກເບາະແສຂອງເຈົ້າໜ້າທີ່ ວັນທີ 28 ເດືອນສິງຫາ ປີ 2004
17. ໜັງສືພິມ Vientiane Times, ນາຍົກລັດຖະມົນຕີຈັດການກັບການຄ້າໄມ້ເຖື່ອນ, ວັນທີ 10 ເດືອນມິຖຸນາ ປີ 2011
18. ທະນາຄານໂລກ, ບົດລາຍງານກ່ຽວກັບການພັດທະນາຂອງ ສ. ປ. ປ ລາວ ປີ 2010
19. ອົງການແມ່ນໍ້າສາກົນ, ໂຄງການໄຟຟ້າພະລັງງານນໍ້າທີ່ມີຢູ່ແລະໄດ້ວາງແຜນໄວ້, ເດືອນກັນຍາ ປີ 2010
20. ອົງການແມ່ນໍ້າສາກົນ, ການເພີ່ມທະວີຢ່າງຫລວງຫລາຍດ້ານພະລັງງານ: ຜົນກະທົບຈາກການສ້າງເຂື່ອນຢ່າງໄວວາຢູ່ໃນລາວ, ປີ 2008
21. ອົງການແມ່ນໍ້າສາກົນ, ໂຄງການພະລັງງານນໍ້າເທີນ 2 ຢູ່ໃນລາວ: ການທໍາລາຍລ້າງອີກຕື່ມຊຶ່ງທະນາຄານໂລກເປັນຜູ້ກໍ່ຂຶ້ນ. ປີ 2002.
22. ເອກະສານ, ປັບປຸງການຄຸ້ມຄອງປ່າໄມ້ຢູ່ໃນຂົງເຂດແມ່ນໍ້າຂອງ ປີ 2011
23. ສໍານັກຂ່າວສານປະເທດລາວ, ວັນທີ 3 ເດືອນກັນຍາ ປີ 2009
24. ແນວໂນ້ມຂອງປ່າໄມ້ ປີ 2009 op cit
25. ໜັງສືພິມ Vietnam News Brief, ຫວຽດນາມຈໍາເປັນຕ້ອງປະຕິບັດຢ່າງຈິງຈັງ ເພື່ອສົ່ງເສີມຂະແໜງທຸລະກິດກ່ຽວກັບໄມ້, ວັນທີ 17 ເດືອນມີນາ ປີ 2011
26. ໜັງສືພິມ Vietnam News Service, ອຸດສາຫະກໍາຜະລິດຕະພັນໄມ້ຜະເຊີນກັບສິ່ງທ້າທາຍ, ວັນທີ 28 ເດືອນມີນາ ປີ 2011
27. ໜັງສືພິມ Fordaq News: ການສົ່ງອອກຜະລິດຕະພັນໄມ້ມີຮອດ 2.4 ຕື້ໃນປີ 2007, ວັນທີ 10 ເດືອນມັງກອນ ປີ 2008
28. ອົງການອາຫານແລະການກະເສດຂອງສະຫະປະຊາຊາດ, ເອກະສານຄົ້ນຄວ້າ ເລກທີ APFSOSII/WP/ 2009/09, 2009
29. ໜັງສືພິມ Datamyne, ເຟີນີເຈີຂອງຫວຽດນາມ, ເດືອນກໍລະກົດ ປີ 2010
30. ໜັງສືພິມ Saigon Times, ການສົ່ງເຟີນີເຈີຂອງຫວຽດນາມອອກໄປຈີນເພີ່ມຂຶ້ນຢ່າງໄວວາ ວັນທີ 15 ເດືອນທັນວາ ປີ 2010
31. ໜັງສືພິມ Vietnam News Service, ອຸດສາຫະກໍາຜະລິດຕະພັນໄມ້ຜະເຊີນກັບສິ່ງທ້າທາຍ, ວັນທີ 28 ເດືອນມີນາ ປີ 2011
32. CSIL, ອຸດສາຫະກໍາເຟີນີເຈີຢູ່ໃນຫວຽດນາມ, ປີ 2007
33. ເອກະສານກ່ຽວກັບປ່າໄມ້, ການສຶກສາຮ່ວມກັນເພື່ອວາງຂອບເຂດຂອງຫວຽດນາມກ່ຽວກັບ FLEGT, ເດືອນຕຸລາ ປີ 2009
34. ສໍານັກຂ່າວສານປະເທດລາວ, ຜູ້ສົ່ງອອກເຟີນີເຈີຄວນເນັ້ນໃສ່ຕະຫລາດພາຍໃນປະເທດໃຫ້ຫລາຍຂຶ້ນ, ວັນທີ 10 ເດືອນມີນາ ປີ 2011
35. ສະພາການຄ້າແລະອຸດສາຫະກໍາຂອງຫວຽດນາມ, ຈໍາເປັນຕ້ອງມີການຮ່ວມມືກັນລະຫວ່າງວິສະຫະກິດອຸດສາຫະກໍາໄມ້, ວັນທີ 20 ເດືອນສິງຫາ ປີ 2010
36. ໄມ້ໃນລະດັບໂລກ, globaltimber.org.uk, 2011
37. EIA/Telepak, ເສັ້ນຊາຍແດນ ປີ 2008
38. ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສ. ປ. ປ ລາວ ເລກທີ 18/2007/QD-TTG, ວັນທີ 5 ເດືອນກຸມພາ ປີ 2007
39. ສາທາລະນະລັດສັງຄົມນິຍົມຫວຽດນາມ, ຕຽມພ້ອມເຮັດຂໍ້ສະເໜີໃຫ້ແກ່ທະນາຄານໂລກກ່ຽວກັບສິ່ງອໍານວຍຄວາມສະດວກລັກສະນະເປັນເພື່ອນຮ່ວມງານກັນເລື່ອງທາດກາກບອນຈາກປ່າ, ປີ 2011
40. ໜັງສືພິມ Straits Times, ຂໍ້ກໍານົດສ້າງຄວາມດຸ່ນດ່ຽງລະຫວ່າງຈີນແລະຫວຽດນາມແບບມີລັບລົມຄົມໃນຂອງລາວ.
41. ໜັງສືພິມ Vietnam News Service, ຫວຽດນາມກາຍເປັນຜູ້ລົງທຶນເປັນອັນດັບໜຶ່ງໃນປະເທດລາວ, ແຊງໜ້າຈີນ: ໜັງສືພິມ Vientiane Times, ວັນທີ 31 ເດືອນພຶດສະພາ ປີ 2011
42. ໜັງສືພິມ Vietnam News Service, ບໍລິສັດຫວຽດນາມຢາກເຂົ້າໄປເຮັດໂຄງການພະລັງງານແລະບໍ່ແຮ່ຢູ່ໃນປະເທດລາວ, ວັນທີ 17 ເດືອນກັນຍາ ປີ 2010
43. ໜັງສືພິມ Saigon Times Daily, ຈະມີການກວດການຕັດໄມ້ຢູ່ບ່ອນສ້າງເຂື່ອນແລະໂຄງການສ້າງທາງ, ວັນທີ 10 ເດືອນພະຈິກ ປີ 2010
44. ລາວເຊີດຊູກຽດກົມກອງຕ່າງໆຂອງກອງທັບຫວຽດນາມ, ໃບຂ່າວຂອງສໍານັກຂ່າວຫວຽດນາມ, 14/5/10
45. EIA, ເສັ້ນຊາຍແດນ, ປີ 2008
46. ບົດລາຍງານຄັ້ງທີສິບຫົກຂອງຊ່ຽວຊານລະຫວ່າງປະເທດດ້ານສິ່ງແວດລ້ອມແລະສັງຄົມ, ໂຄງການອະເນກປະສົງນໍ້າເທີນ 2, ວັນທີ 25 ເດືອນກຸມພາ ປີ 2010
47. ລາວແລະຫວຽດນາມຜັກດັນໃຫ້ມີການພົວພັນກັນຢ່າງແໜ້ນແຟ້ນຂຶ້ນຕື່ມກ່ຽວກັບວຽກງານປ່າໄມ້, ສໍານັກຂ່າວສານປະເທດລາວ, ວັນທີ 4 ເດືອນມີນາ ປີ 2011
48. P.Meyfroidt and E. Lambin, ການຫັນປ່ຽນຂອງປ່າໄມ້ຢູ່ໃນຫວຽດນາມແລະການເຄື່ອນຍ້າຍການຕັດໄມ້ທໍາລາຍປ່າເຂົ້າໄປຢູ່ຕ່າງປະເທດ, ດໍາເນີນການໂດຍສະຖາບັນສັງຄົມແຫ່ງຊາດ, ເດືອນພຶດສະພາ ປີ 2009
49. ເຄືອຂ່າຍການວິໄຈກ່ຽວກັບສິ່ງແວດລ້ອມ, ມາດຕະການປົກປັກຮັກສາປ່າໄມ້ຕ້ອງຄວບຄຸມໝົດທົ່ວຂົງເຂດ, ວັນທີ 8 ເດືອນພະຈິກ ປີ 2009




© EIA




ອົງການສືບສວນດ້ານສິ່ງແວດລ້ອມສາກົນ (EIA)
62/63 Upper Street
London N1 ONY, UK
Tel: +44 (0) 20 7354 7960
Fax: +44 (0) 20 7354 7960
Email: ukinfo@eia-international.org
www.eia-international.org

EIA US
www.eai-global.org